

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຜນງານ ແຫ່ງຊາດ ການປະກອບສ່ວນ ແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ

(Nationally Determined Contribution - NDC)

2021



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຜນງານແຫ່ງຊາດ ການປະກອບສ່ວນ ແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ (Nationally Determined Contribution - NDC)

09 ມີນາ 2021

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 317 /ຫສນຍ
ນະຄອນຫຼວງວຽງຈັນ, ວັນທີ 02 ເມສາ 2021

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຫ້ອງການ
ເລກທີ 0653 /ກຊສ
ວັນທີ 5.4.2021
ສົ່ງເຖິງ.....

ແຈ້ງການ

ຮຽນ : ທ່ານ ລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ນັບຖື.

ເລື່ອງ : ທິດຊີ້ນຳກ່ຽວກັບ ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ສະບັບທີ 2.

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017.
- ອີງຕາມ ເອກະສານສະເໜີຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະບັບເລກທີ 1158/ກຊສ, ລົງວັນທີ 04 ມີນາ 2021.
- ອີງຕາມ ການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ຄັ້ງວັນທີ 29 ມີນາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳຂອງທ່ານ ນາຍົກລັດຖະມົນຕີ ມາຍັງທ່ານຊາບ ດັ່ງນີ້: **“ ເຫັນດີຮັບຮອງເອົາ ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ສະບັບທີ 2 ຕາມການສະເໜີຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ”**

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ບ່ອນນຳສົ່ງ:
1. ທ່ານ ນາຍົກ-ຮອງນາຍົກລັດຖະມົນຕີ ທ່ານລະ 01 ສະບັບ
2. ຫ້ອງວ່າການສຸນກາງພັກ 01 ສະບັບ
3. ຄະນະ ຫສນຍ ທ່ານລະ 01 ສະບັບ
4. ເກັບມ້ຽນ 04 ສະບັບ

ສຳນັກງານນາຍົກລັດຖະມົນຕີ, ຫົວໜ້າຫ້ອງວ່າການ

ຕຳເຈນ ວົງໂພສີ

ສາລະບານ

I. ພາກສະເໜີ.....1

II. ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ.....2

2.1 ສະພາບລວມ ກ່ຽວກັບ ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ 2

2.2 ສັງລວມຫຍໍ້ ການວິເຄາະ ຮູບແບບການປ່ອຍທາດອາຍເຮືອນແກ້ວ.....4

2.3 ການປ່ອຍທາດອາຍເຮືອນແກ້ວ ແບບທຽບຖານ.....4

2.4 ການຄາດຄະເນການປ່ອຍທາດອາຍເຮືອນແກ້ວ ໃນທົ່ວປະເທດ ໃນປີ 2020 ແລະ ຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານ ແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ ສະບັບປີ 2015 5

2.5 ຄາດໝາຍສູ້ຊຶ້ນ ແລະ ການຄາດຄະເນ ການຫຼຸດຜ່ອນທາດອາຍເຮືອນແກ້ວແບບບໍ່ມີເງື່ອນໄຂ ຮອດປີ 2030 ...7

2.6 ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂ ໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ ຮອດປີ 2030 ແລະ ບັນລຸຄາດໝາຍສູ້ຊຶ້ນ ການປ່ອຍ ແລະ ການດູດຊຶມຊັບ ທາດອາຍເຮືອນແກ້ວຢູ່ ສປປ ລາວ ໃຫ້ເປັນສູນໃນປີ 2050.....9

2.7 ຄວາມຕ້ອງການຂອງປະເທດ 11

2.8 ວິທີການ.....13

III. ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.....14

3.1 ສະພາບລວມ ກ່ຽວກັບ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນດິນຟ້າອາກາດ 14

3.2 ການຈັດຕັ້ງປະຕິບັດໃນປະຈຸບັນ ແລະ ແຜນການໃນຕໍ່ໜ້າ 17

3.3 ບັນຫາ, ຂໍ້ຫຍຸ້ງຍາກ ແລະ ຄວາມຕ້ອງການ 21

IV. ການຈັດຕັ້ງປະຕິບັດ.....24

4.1 ກົນໄກການປະສານງານແຫ່ງຊາດ.....24

4.2 ການຕິດຕາມກວດກາ ແລະ ການປະເມີນຜົນ 25

4.3 ການຮ່ວມມືສາກົນດ້ວຍຄວາມສະໝັກໃຈ 26

ເອກະສານຊ້ອນທ້າຍທີ 1: ມາດຕະການການຫຼຸດຜ່ອນທາດອາຍເຮືອນແກ້ວ.....27

ເອກະສານຊ້ອນທ້າຍທີ 2: ມາດຕະການການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ 35

I. ພາກສະເໜີ

ສປປ ລາວ ປັບປຸງແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ສະບັບປີ 2020 ໂດຍປະຕິບັດຕາມ ຂໍ້ຕົກລົງທີ 1 ຂອງກອງປະຊຸມລັດພາຄີສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດຄັ້ງທີ 21 (1/CP.21) ແລະ ທັງເປັນການສືບຕໍ່ປັບປຸງແຜນງານແຫ່ງຊາດສະບັບໃນເມື່ອກ່ອນ ທີ່ ສປປ ລາວ ໄດ້ນຳສົ່ງໃຫ້ກອງເລຂາສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ (UNFCCC) ໃນວັນທີ 30 ກັນຍາ 2015 ຜ່ານມາ ເພື່ອບັນລຸຈຸດປະສົງ ຂອງສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ເຊິ່ງ ສປປ ລາວ ໄດ້ໃຫ້ສັດຕະຍາບັນ ຕໍ່ສັນຍາດັ່ງກ່າວ ໃນວັນທີ 7 ກັນຍາ 2016.

ໂດຍອີງໃສ່ມາດຕາ 4 ຂອງສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ, ການປັບປຸງແຜນງານແຫ່ງຊາດສະບັບປີ 2020 ນີ້ ແມ່ນເປັນການຕໍ່ຍອດ ຫຼື ເສີມສ້າງຈາກແຜນງານແຫ່ງຊາດ ສະບັບປີ 2015 ຊຶ່ງໄດ້ຍົກລະດັບຄາດໝາຍສູ້ຊົນໃຫ້ສູງຂຶ້ນຕື່ມ ໂດຍການວາງເງື່ອນໄຂໃນການປ່ອຍທາດອາຍເຮືອນແກ້ວຂອງປະເທດເປັນ ສາມຮູບແບບຄື: ການສູ້ຊົນການປ່ອຍທາດອາຍເຮືອນແກ້ວທຽບຖານ, ຄາດໝາຍສູ້ຊົນ ແລະ ການຄາດຄະເນການຫຼຸດຜ່ອນ ທາດອາຍເຮືອນແກ້ວຮອດປີ 2030 ແລະ ຄາດໝາຍສູ້ຊົນ ແລະ ການຄາດຄະເນການຫຼຸດຜ່ອນ ທາດອາຍເຮືອນແກ້ວຮອດປີ 2030 ໂດຍໄດ້ຮັບການສະໜັບສະໜູນເພີ່ມເຕີມເພື່ອບັນລຸເປົ້າໝາຍການປ່ອຍ ແລະ ການດູດຊຶມຊັບ ທາດອາຍເຮືອນແກ້ວຢູ່ ສປປ ລາວ ໃຫ້ເປັນສູນ ໃນປີ 2050 (Net Zero Emissions 2050). ໃນນີ້ໄດ້ມີການປັບປຸງ ແລະ ຍົກລະດັບຄາດໝາຍສູ້ຊົນຂຶ້ນຕື່ມ ໂດຍກວມລວມເອົາບັນດາຂະແໜງການໃໝ່ ຈຳນວນໜຶ່ງ ເຂົ້າໃສ່ຕື່ມ ແລະ ປັບປຸງຄາດໝາຍການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຂອງປະເທດຄືນໃໝ່. ນອກນີ້, ກໍໄດ້ເພີ່ມເນື້ອໃນ ກ່ຽວກັບຄວາມໂປ່ງໃສ ແລະຄວາມສອດຄ່ອງ ລະຫວ່າງ ບັນດາເປົ້າໝາຍ, ຈຸດປະສົງ ໄລຍະສັ້ນ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດອັນໃໝ່ ເພື່ອໃຫ້ສອດຄ່ອງກັບລະບົບການວັດແທກ, ການລາຍງານ ແລະ ການຢັ້ງຢືນ ລວມທັງການສະແດງເຈດຈຳນົງ ໃນການຮ່ວມມືດ້ວຍຄວາມສະໝັກໃຈ ຂອງ ສປປ ລາວ ເພື່ອເພີ່ມທະວີຄາດໝາຍສູ້ຊົນຂອງຕົນຂຶ້ນ ຕາມທີ່ລະບຸໄວ້ ພາຍໃຕ້ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ.

ແຜນງານແຫ່ງຊາດສະບັບນີ້ ໄດ້ຕີລາຄາຄວາມຄືບໜ້າ ກ່ຽວກັບການປະກອບສ່ວນ ແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ ຕາມຈຸດປະສົງທີ່ໄດ້ກຳນົດໄວ້ໃນ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແລະ ທັງເພີ່ມທະວີການປະຕິບັດໜ້າວຽກຕ່າງໆ ເພື່ອເລັ່ງໃສ່ໃຫ້ ສປປ ລາວ ສາມາດຮັບມືກັບຜົນກະທົບ ຂອງການປ່ຽນແປງດິນຟ້າອາກາດໃຫ້ໄດ້ດີຂຶ້ນກວ່າເກົ່າ, ຊຶ່ງໄດ້ສະທ້ອນໃຫ້ເຫັນເຖິງຄວາມສາມາດຂອງປະເທດ ຕໍ່ຄວາມຮັບຜິດຊອບ ແລະ ຄວາມເອົາໃຈໃສ່ຢ່າງແທດເໝາະ ແລະ ສູ້ຊົນຕາມເງື່ອນໄຂລວມໃນຖານະເປັນປະເທດດ້ອຍພັດທະນາປະເທດໜຶ່ງ ແລະ ປະກອບສ່ວນຕໍ່ກັບການປ່ອຍທາດອາຍເຮືອນແກ້ວຂອງໂລກໃນລະດັບຕ່ຳ. ແຜນງານແຫ່ງຊາດສະບັບນີ້ ບໍ່ພຽງແຕ່ເນັ້ນໃສ່ແຕ່ການກຳນົດວິໄສທັດໄລຍະຍາວ ໃນການແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດເທົ່ານັ້ນ, ໃນຂະນະດຽວກັນກໍ່ໄດ້ປະເມີນຂະບວນການສຳຄັນ ແລະ ລາຍລະອຽດ ໃນການອອກແບບ ແລະ ການວາງແຜນວຽກງານການປ່ຽນແປງດິນຟ້າອາກາດ ຕາມສະພາບຂອງ ສປປ ລາວ.

ມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຂອງແຜນງານ ແຫ່ງຊາດສະບັບນີ້ ຈະຊ່ວຍປະກອບສ່ວນໃຫ້ແກ່ຈຸດປະສົງພາຍໃຕ້ສັນຍາປາຣີ ກໍຄື "ການຮັກສາການເພີ່ມຂຶ້ນອຸນຫະພູມສະເລ່ຍຂອງໂລກ ໃຫ້ຕ່ຳກວ່າ 2 ອົງສາເຊ ຫຼື ດີທີ່ສຸດແມ່ນຈຳກັດບໍ່ໃຫ້ເກີນ 1,5 ອົງສາເຊ ທຽບໃສ່ຍຸກປະຕິວັດອຸດສາຫະກຳ", ພ້ອມທັງ "ເພີ່ມຄວາມສາມາດເພື່ອປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ". ບັນດາຄາດໝາຍ ທີ່ໄດ້ສະເໜີໃນແຜນງານ NDC ສະບັບປີ 2020 ຍັງຈະຊ່ວຍຟື້ນຟູເສດຖະກິດ ຂອງ

ປະເທດ ພາຍຫຼັງສິ້ນສຸດ ການລະບາດຂອງພະຍາດ COVID-19 ໂດຍການເສີມສ້າງຄວາມທົນທານ ແລະ ເລັ່ງລັດ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ. ແຜນງານແຫ່ງຊາດສະບັບປີ 2020 ນີ້ ແມ່ນສອດຄ່ອງກັບເປົ້າໝາຍການພັດທະນາແບບຍືນຍົງຂອງຊາດ ທີ່ຈະຖືກບັນຈຸເຂົ້າໃນແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ 9 (2021-2025), ເຊິ່ງສຸມໃສ່ການຮັບມືຕ ້ກັບຜົນກະທົບຂອງການປ່ຽນແປງດິນຟ້າອາກາດ.

ແຜນງານສະບັບນີ້ໄດ້ຜ່ານຂັ້ນຕອນການປຶກສາຫາລື ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງຢ່າງເປັນທາງການຢ່ 4 ຄັ້ງ, ເຊິ່ງລວມມີ ບັນດາຂະແໜງການຂອງລັດ, ຄູ່ຮ່ວມພັດທະນາ, ພາກສ່ວນທຸລະກິດ ແລະ ເອກະຊົນ. ໃນທ້າຍ ປີ 2019 ໄດ້ມີ ການດຳເນີນການປະເມີນບັນດາຄາດໝາຍທີ່ໄດ້ຖືກວາງໄວ້ໃນ ແຜນງານ ແຫ່ງຊາດສະບັບປີ 2015 ເພື່ອຕິດຕາມເບິ່ງຄວາມຄືບໜ້າຂອງແຕ່ລະຄາດໝາຍສູ່ຊົນໃນປະຈຸບັນ ແລະ ຊອກຮູ້ກ່ຽວກັບ ແຜນການໃນອະນາຄົດອັນໃກ້ນີ້. ການປຶກສາຫາລືຄັ້ງທີ 2 ແລະ 3 ແມ່ນຢູ່ໃນໄລຍະລະຫວ່າງ ເດືອນເມສາ ແລະ ສິງຫາ ປີ 2020 ສຸມ ໃສ່ຮັບເອົາຄຳຄິດເຫັນຢ່າງຮອບດ້ານ ຈາກບັນດາພາກສ່ວນທີ່ກ່ຽວຂ້ອງທັງໝົດ ຕ ້ກັບແຜນງານແຫ່ງຊາດ. ກອງ ປະຊຸມປຶກສາຫາລືຮ່າງສະບັບສຸດທ້າຍ ແມ່ນໄດ້ນຳເອົາໄປຜ່ານຕໍ່ກອງປະຊຸມ ຮັບຮອງເອົາແຜນງານຮ່ວມກັບພາກ ສ່ວນຕ່າງໆ. ການມີສ່ວນຮ່ວມຂອງພາກສ່ວນເອກະຊົນ ຈະເປັນເຄື່ອງມືທີ່ສຳຄັນໃນການຈັດຕັ້ງປະຕິບັດແຜນງານ ແຫ່ງຊາດສະບັບນີ້ ແລະ ຄວນໄດ້ຮັບການອຳນວຍຄວາມສະດວກ ໂດຍມີນະໂຍບາຍທີ່ເໝາະສົມ ພ້ອມທັງ ລະບຽບ ການລົງທຶນໃນຂະແໜງການຕ່າງໆ.

II. ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ

2.1 ສະພາບລວມ ກ່ຽວກັບ ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ

ລັດຖະບານແຫ່ງ ສປປ ລາວ ໄດ້ຮັບຮອງດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ໃນວັນທີ 19 ກັນຍາ 2019 ຖືເປັນການປະກອບສ່ວນທີ່ສຳຄັນດ້ານນະໂຍບາຍ ຕໍ່ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂ ບັນຫາການປ່ຽນແປງດິນຟ້າອາກາດ ສະບັບປີ 2015. ດຳລັດດັ່ງກ່າວ ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດ ຕະການໃນການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານການປ່ຽນແປງດິນຟ້າອາກາດ. ພ້ອມດຽວກັນນີ້, ດຳລັດ ດັ່ງກ່າວ ຍັງໄດ້ເປັນບ່ອນອີງອັນສຳຄັນ ໃນການນຳເອົາວຽກງານການປ່ຽນແປງດິນຟ້າອາກາດ ເຊື່ອມສານເຂົ້າໃນ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ຍຸດທະສາດ ແລະ ແຜນການຂອງຂະແໜງການ ແລະ ທ້ອງຖິ່ນນຳ ອີກ. ນອກຈາກນີ້, ໃນປີ 2016 ທ່ານນາຍົກລັດຖະມົນຕີ ຍັງໄດ້ອອກຄຳສັ່ງ ເລກທີ 15/ນຍ ວ່າດ້ວຍ “ການເພີ່ມ ທະວີ ຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້” ເພື່ອ ເປັນການຢຸດຕິ ການສົ່ງອອກໄມ້ທ່ອນ, ໄມ້ຕີຕັບ, ໄມ້ແປຮູບ, ໄມ້ຊອຍ, ຮາກໄມ້ ຫລື ເຫງົ້າໄມ້, ຕໍ່ໄມ້, ປູກໄມ້, ງ່ໍໄມ້ ແລະ ໄມ້ຢືນຕົ້ນ ຫລື ໄມ້ປະດັບ ທີ່ຂຸດຄົ້ນອອກຈາກ ປ່າທຳມະຊາດ.

ບົດສື່ສານແຫ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດສະບັບທີ 2 ທີ່ໄດ້ນຳສະເໜີຕໍ່ສົນທິສັນຍາ ວ່າ ດ້ວຍ ການປ່ຽນແປງດິນຟ້າອາກາດ ໃນເດືອນມິຖຸນາ 2013 ຜ່ານມາ ໄດ້ຊີ້ໃຫ້ເຫັນວ່າ ສປປ ລາວ ໄດ້ມີການປ່ອຍ

ທາດອາຍເຮືອນແກ້ວໃນປີ 2000 ທັງໝົດ 50.742.91 ktCO2e[1], ໃນນີ້ ຂົງເຂດການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້ ແລະ ກະສິກຳ ເປັນຂົງເຂດທີ່ປ່ອຍທາດອາຍເຮືອນແກ້ວ ກວມເອົາຫຼາຍກວ່າ 95% ຂອງປະລິມານການ ປ່ອຍທາດອາຍເຮືອນແກ້ວທັງໝົດຂອງປະເທດ. ສາເຫດຕົ້ນຕໍຂອງການປ່ອຍທາດອາຍເຮືອນແກ້ວດັ່ງກ່າວ ຍ້ອນ ວ່າການຂະຫຍາຍຕົວຂອງເສດຖະກິດປະມານ 7,17% ແລະ ພົນລະເມືອງ ໃນລະດັບ 1,6% ຕໍ່ປີ ໃນລະຫວ່າງປີ 2000 ຫາ 2018. ນອກຈາກນີ້ ຍານພາຫະນະທີ່ຂຶ້ນທະບຽນ ໄດ້ເພີ່ມຂຶ້ນເປັນຈຳນວນຫຼາຍ ຈາກ 367.900 ຄັນ ໃນປີ 2004 ມາເປັນ 2.133.500 ຄັນ ໃນປີ 2017 (ເພີ່ມຂຶ້ນເຖິງ 480%), ແຕ່ໃນເວລາດຽວກັນປະລິມານການ ນຳໃຊ້ນ້ຳມັນເຊື້ອໄຟເຂົ້າໃນການຂົນສົ່ງ ກໍໄດ້ເພີ່ມຂຶ້ນຈາກ 855 ລ້ານລິດ ໃນປີ 2013 ເປັນ 1.442 ລ້ານລິດໃນປີ 2016.

ເພື່ອເພີ່ມຄາດໝາຍສູ້ຊົນໃນແຜນງານແຫ່ງຊາດສະບັບນີ້ໃຫ້ສູງຂຶ້ນນັ້ນ, ຈຶ່ງໄດ້ຄາດຄະເນການຫຼຸດຜ່ອນ ການປ່ອຍທາດອາຍເຮືອນແກ້ວເປັນສາມຮູບແບບ ຄື:

- <u>ການປ່ອຍທາດອາຍເຮືອນແກ້ວ ແບບທຽບຖານ (baseline scenario)</u> ແມ່ນກໍລະນີສຶກສາທຽບເພື່ອ ສະແດງໃຫ້ເຫັນລະດັບການປ່ອຍທາດອາຍເຮືອນແກ້ວ ທີ່ຈະເກີດຂຶ້ນໃນອະນາຄົດ ຂ້ອນຂ້າງແນ່ນອນຢູ່ ແລ້ວ, ຖ້າຫາກບໍ່ມີການດຳເນີນມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວອັນໃດເລີຍ.
- <u>ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບບໍ່ມີເງື່ອນໄຂ (unconditional mitigation scenario)</u> ແມ່ນ ກໍລະນີທີ່ສະແດງໃຫ້ເຫັນເຖິງຄວາມເອົາໃຈໃສ່ໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ ສປປ ລາວ ມີ ຄວາມພະຍາຍາມໃນການດຳເນີນມາດຕະການ ໂດຍຄຳນຶງເຖິງຊັບພະຍາກອນຕ່າງໆທີ່ຕົນເອງມີ ແລະ ລະດັບການຊ່ວຍ ເຫຼືອໃນປະຈຸບັນຈາກປະເທດທີ່ພັດທະນາແລ້ວ.
- <u>ການຫຼຸດຜ່ອນທາດອາຍເຮືອນແກ້ວແບບມີເງື່ອນ ໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ (conditional mitigation scenario)</u> ແມ່ນກໍລະນີການເພີ່ມຄວາມພະຍາຍາມສູງຂຶ້ນ ໃນການຫຼຸດຜ່ອນການປ່ອຍທາດ ອາຍເຮືອນແກ້ວ ທີ່ ສປປ ລາວ ຈະສາມາດບັນລຸໄດ້, ຖ້າຫາກໄດ້ຮັບການຊ່ວຍເຫຼືອດ້ານການເງິນຈາກ ບັນດາປະເທດທີ່ພັດທະນາແລ້ວຫຼາຍຂຶ້ນ.

ຫົວຂໍ້ 2.2 ໄດ້ສັງລວມ ກ່ຽວກັບ ເສັ້ນສະແດງຂອງສາມຮູບແບບ; ຫົວຂໍ້ 2.3 ໄດ້ສັງລວມຂໍ້ມູນພື້ນຖານ ກ່ຽວກັບການປ່ອຍທາດອາຍເຮືອນແກ້ວແບບທຽບຖານ; ຫົວຂໍ້ 2.4 ແມ່ນການຄາດຄະເນລະດັບການປ່ອຍທາດ ອາຍເຮືອນແກ້ວໃນປີ 2020 ແລະ ຕີລາລາຄວາມຄືບໜ້າໃນການບັນລຸຄາດໝາຍການຫຼຸດຜ່ອນການປ່ອຍທາດ ອາຍເຮືອນແກ້ວ ທີ່ໄດ້ລະບຸໄວ້ໃນແຜນງານແຫ່ງຊາດ ສະບັບປີ 2015. ຫົວຂໍ້ 2.5 ໄດ້ນຳສະເໜີ ກ່ຽວກັບການ ຫຼຸດຜ່ອນທາດອາຍເຮືອນແກ້ວ ແບບບໍ່ມີເງື່ອນໄຂຮອດປີ 2030 ແລະ ບັນດາຄາດໝາຍທີ່ກ່ຽວຂ້ອງ. ຫົວຂໍ້ 2.6 ໄດ້ ນຳສະເໜີ ກ່ຽວກັບການຫຼຸດຜ່ອນທາດອາຍເຮືອນແກ້ວ ພາຍໃຕ້ເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມຮອດປີ 2030 ແລະ ບັນດາຄາດໝາຍ ທີ່ກ່ຽວຂ້ອງເພື່ອໃຫ້ບັນລຸຄາດໝາຍສູ້ຊົນການຫຼຸດຜ່ອນການປ່ອຍ ແລະ ການດູດຊຶມ ຊັບທາດອາຍເຮືອນແກ້ວໃຫ້ເປັນສູນ ຮອດປີ 2050.

ບັນດາຂົງເຂດທີ່ໄດ້ນຳມາວິເຄາະໃນແຜນງານສະບັບນີ້ລວມມີ: ຂົງເຂດພະລັງງານ, ອຸດສາຫະກຳປຸງແຕ່ງ, ກະສິກຳ, ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້ ແລະ ສິ່ງເສດເຫຼືອ. ທາດອາຍເຮືອນແກ້ວ ທີ່ນຳມາວິເຄາະ ປະກອບມີ: ການບອນໄດອອກໄຊ (CO_2), ມີເທນ (CH_4), ໄນຕຣັດອອກໄຊ (N_2O). ສຳລັບທາດອາຍ ໄຮ


[1] ກິໂລໂຕນການບອນທຽບເທົ່າ ເພື່ອນຳໃຊ້ເຂົ້າໃນການປຽບທຽບ ການປ່ອຍທາດອາຍເຮືອນແກ້ວ ປະເພດຕ່າງໆ ທີ່ພາໃຫ້ເກີດ ສະພາວະ ໂລກຮ້ອນ ໂດຍການປ່ຽນຫົວໜ່ວຍ ຂອງທາດອາຍເຮືອນແກ້ວປະເພດອື່ນ ມາທຽບໃສ່ ທາດອາຍການບອນໄດອົກໄຊ ເພື່ອໃຫ້ເປັນຫົວ ດຽວກັນ.

ໂດຣຟຣູໂອກາກບອນ (HFCs), ເປີຟຣູໂອກາກບອນ (PFCs) ແລະ ເຮັກຊາກຟຣູອໍໄລ (SF_6) ແມ່ນປ່ອຍອອກໃນ ປະລິມານໜ້ອຍ ແລະ ຈະບໍ່ໄດ້ຖືກລວມເຂົ້າໃນການວິເຄາະ. ຂອບເຂດຂອງການວິເຄາະແມ່ນຖືເອົາຂອບເຂດຊາຍ ແດນຂອງປະເທດໂດຍກຳນົດເອົາຂໍ້ມູນຂອງປີ 2000 ຖືເປັນປີທຽບຖານ ເພື່ອນຳໃຊ້ເຂົ້າໃນການຄິດໄລ່ທັງ 3 ຮູບ ແບບ.

2.2 ສັງລວມຫຍໍ້ ການວິເຄາະ ຮູບແບບການປ່ອຍທາດອາຍເຮືອນແກ້ວ

ຮູບ 1 ຂ້າງລຸ່ມສະແດງໃຫ້ເຫັນເຖິງພາບລວມຂອງການປ່ອຍທາດອາຍເຮືອນແກ້ວຈາກທຸກຂົງເຂດ ຈາກ ປີທຽບຖານ ປີ 2000 ຕາມທີ່ໄດ້ຄິດໄລ່ເປັນ 3 ຮູບແບບ ທີ່ກ່າວມາຂ້າງເທິງ. ປະລິມານການປ່ອຍທາດອາຍເຮືອນ ແກ້ວ ໃນປີ 2020 ແບບບໍ່ມີເງື່ອນໄຂ ຮອດປີ 2030 (ເສັ້ນສີຂຽວ) ເປັນການຄາດຄະເນລະດັບການປ່ອຍທາດອາຍ ເຮືອນແກ້ວ ໃນປະຈຸບັນ. ສຳລັບ ການປ່ອຍທາດອາຍເຮືອນແກ້ວ ແບບບໍ່ມີເງື່ອນໄຂ ພາຍຫລັງປີ 2030 ຈະໄດ້ຊີ້ ແຈງຕື່ມໃນແຜນງານແຫ່ງຊາດສະບັບຕໍ່ໄປ.

ຮູບ 1: ຮູບແບບ ການປ່ອຍທາດອາຍເຮືອນແກ້ວ ຂອງທຸກຂົງເຂດ



2.3 ການປ່ອຍທາດອາຍເຮືອນແກ້ວ ແບບທຽບຖານ

ການປ່ອຍທາດອາຍເຮືອນແກ້ວ ແບບທຽບຖານ (baseline scenario) ເປັນການອ້າງອີງແບບສົມມຸດ ຖານ ຫຼື ຄາດຄະເນຄວາມເປັນໄປໄດ້ສູງສຸດ ຂອງລະດັບການປ່ອຍທາດອາຍເຮືອນແກ້ວໃນອະນາຄົດ ໂດຍປາສະ ຈາກມາດຕະການຫຼຸດຜ່ອນ. ຮູບແບບນີ້ໄດ້ຖືກນຳໃຊ້ເປັນບ່ອນອີງ ໃຫ້ແກ່ການພັດທະນາຮູບການຫຼຸດຜ່ອນ ທາດ ອາຍເຮືອນແກ້ວ ໂດຍບໍ່ມີເງື່ອນໄຂ ແລະ ຮູບແບບຫຼຸດຜ່ອນທາດອາຍເຮືອນແກ້ວພາຍໃຕ້ເງື່ອນໄຂ ໄດ້ຮັບການ ຊ່ວຍເຫຼືອເພີ່ມເຕີມ ແລະ ໄດ້ຄຳນວນໂດຍພິຈາລະນາເຖິງແນວໂນ້ມການເຕີບໂຕຂອງຂະແໜງການ ໃນໄລຍະຜ່ານ ມາ (ລາຍລະອຽດ ຢູ່ໃນຫົວຂໍ້ 2.8: ວິທີການ). ພາຍໃຕ້ຮູບແບບທຽບຖານ ຄາດວ່າລະດັບການປ່ອຍທາດອາຍ

ເຮືອນແກ້ວທັງໝົດ ຢູ່ໃນ ສປປ ລາວ ປະມານ 82.000 ktCO2e ໃນປີ 2020 ແລະ 104.000 ktCO2e ໃນປີ 2030. ລາຍລະອຽດການຄາດຄະເນຮູບແບບ ການຫຼຸດຜ່ອນທາດອາຍເຮືອນແກ້ວ ຮອດປີ 2050 ແມ່ນສະແດງຢູ່ ໃນຮູບ 1 ຂອງຫົວຂໍ້ 2.2. ຂະແໜງການຫຼັກທີ່ຄາດວ່າຈະ ປະກອບສ່ວນໃນການປ່ອຍທາດອາຍເຮືອນແກ້ວແບບ ທຽບຖານ ລວມມີ ຂະແໜງການປ່ຽນແປງການນຳໃຊ້ ທີ່ດິນ ແລະ ປ່າໄມ້, ກະສິກຳ ແລະ ພະລັງງານ ລວມທັງ ພະລັງງານສຳລັບການຂົນສົ່ງ ແລະ ການຜະລິດພະລັງງານໄຟຟ້າໂດຍການນຳໃຊ້ຖ່ານຫີນ.

2.4 ການຄາດຄະເນການປ່ອຍທາດອາຍເຮືອນແກ້ວ ໃນທົ່ວປະເທດ ໃນປີ 2020 ແລະ ຄວາມຄືບໜ້າ ການຈັດຕັ້ງປະຕິບັດແຜນງານ ແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ ສະບັບປີ 2015

ໃນປີ 2020 ຄາດຄະເນການປ່ອຍທາດອາຍເຮືອນແກ້ວໃນທົ່ວປະເທດ ປະມານ 53.000 ktCO2e ໂດຍ ການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນຢູ່ຂົງເຂດຕ່າງໆ ນັບແຕ່ປີທຽບຖານ 2000. ເຖິງແມ່ນວ່າ ລະດັບການ ຂະຫຍາຍຕົວຂອງເສດຖະກິດ ຢູ່ ສປປ ລາວ ໃນລະຫວ່າງປີ 2000 ຫາ 2020 ຈະເພີ່ມຂຶ້ນກໍຕາມ, ແຕ່ ສປປ ລາວ ກໍຍັງສາມາດຫຼຸດຜ່ອນປະລິມານການປ່ອຍທາດອາຍເຮືອນແກ້ວໄດ້ 34% ເມື່ອທຽບໃສ່ປະລິມານການປ່ອຍແບບ ທຽບຖານ. ຄາດຄະເນວ່າ ອັດຕາການເພີ່ມຂຶ້ນຂອງປະລິມານການປ່ອຍທາດອາຍເຮືອນແກ້ວ ສະເລ່ຍແມ່ນປະມານ 0,3% ໃນແຕ່ລະປີ. ໃນເວລາດຽວກັນ, ອັດຕາການເຕີບໂຕຂອງ ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວ ຄົນ/ປີ ໂດຍສະເລ່ຍ ແມ່ນ 5,3% ໃນລະຫວ່າງປີ 2000 ຫາ 2019 (ທະນາຄານໂລກ), ຊຶ່ງຊີ້ໃຫ້ເຫັນວ່າ ການຫລຸດ ລົງຂອງທາດອາຍທາດອາຍເຮືອນແກ້ວແມ່ນຫຼາຍເທົ່າ ທຽບໃສ່ ການເຕີບໂຕຂອງເສດຖະກິດ.

ການຈັດຕັ້ງປະຕິບັດມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວສ່ວນໃຫຍ່ແມ່ນ ຢູ່ໃນຂົງເຂດການປ່ຽນ ແປງການນຳໃຊ້ທີ່ດິນ ແລະ ປ່າໄມ້ ແລະ ຂົງເຂດພະລັງງານ. ຕາຕະລາງ 1 ຂ້າງລຸ່ມນີ້ ສະແດງໃຫ້ເຫັນຄວາມຄືບ ໜ້າ ແລະ ຜົນສຳເລັດໂດຍຫຍໍ້ ຂອງບັນດາຄາດໝາຍການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ໄດ້ກຳນົດໄວ້ໃນແຜນ ງານແຫ່ງຊາດສະບັບປີ 2015.

ໃນປີ 2000 ການປ່ອຍທາດອາຍເຮືອນແກ້ວ ຈາກຂົງເຂດການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້ ມີ ທັງໝົດຈຳນວນ 44.805 ktCO2e ແລະ ດູດຊຶມຊັບຈຳນວນ 2.047 ktCO2e ຫຼື ການປ່ອຍທາດອາຍເຮືອນແກ້ວ ສຸດທິໃນປີນັ້ນ ເທົ່າກັບ 42.758 ktCO2e[2]. ໃນລະຫວ່າງປີ 2005 ຫາ 2015 ໂດຍສະເລ່ຍ ການປ່ອຍແມ່ນປະມານ 41.013 ktCO2e ແລະ ດູດຊຶມຊັບ 7.533 ktCO2e ຫຼື ການປ່ອຍທາດອາຍເຮືອນແກ້ວສຸດທິປະມານ 33.479 ktCO2e[3] (ລາຍລະອຽດຢູ່ຫົວຂໍ້ 2.8). ເຖິງຢ່າງໃດກໍຕາມ ສປປ ລາວ ຍັງບໍ່ສາມາດບັນລຸໄດ້ຕາມໝາຍສູ້ຊົນທີ 1 (M1) ຂອງແຜນງານແຫ່ງຊາດ ສະບັບປີ 2015 ກ່ຽວກັບ ການເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ ທົ່ວປະເທດໃນປີ 2020. ໂດຍອີງໃສ່ ລະດັບທຽບຖານການປ່ອຍທາດອາຍເຮືອນແກ້ວຂອງປ່າໄມ້ ຢູ່ ສປປ ລາວ (FREL) ທີ່ໄດ້ນຳສະເໜີຕໍ່ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ໃນປີ 2018 ໄດ້ຊີ້ໃຫ້ເຫັນວ່າເນື້ອທີ່ ປົກຫຸ້ມປ່າໄມ້ ໃນປີ 2015 ໄດ້ກວມເອົາ 58% ຂອງເນື້ອທີ່ປະເທດ ຊຶ່ງຖືວ່າ ລະດັບການປ່ອຍທາດອາຍເຮືອນແກ້ວ

[2]ສປປ ລາວ, ບົດລາຍງານການປະເມີນຄວາມຕ້ອງການທາງດ້ານເຕັກໂນໂລຊີ ສຳລັບການຫຼຸດຜ່ອນທາດອາຍເຮືອນແກ້ວ, ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ, ໜ້າທີ 37.

[3]ສປປ ລາວ, ລະດັບທຽບຖານການປ່ອຍທາດອາຍເຮືອນແກ້ວຂອງປ່າໄມ້ ແລະ ລະດັບທຽບຖານຂອງປ່າໄມ້ ສຳລັບລັບການຈ່າຍຕອບແທນຕາມຜົນ ຂອງ REDD+ ພາຍໃຕ້ UNFCCC, 2018, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້, ສປປ ລາວ, ໜ້າທີ 27.

ທຽບຖານໃນຂະແໜງປ່າໄມ້ ຂອງ ສປປ ລາວ ແມ່ນນຳໃຊ້ໄດ້ພາຍໃນເວລາ 11 ປີ (ແຕ່ປີ 2015 – 2025).

ຕາຕະລາງ 1: ສະພາບການຈັດຕັ້ງປະຕິຊັດບັນດາມາດຕະການ ໃນແຜນງານແຫ່ງຊາດ ສະບັບປີ 2015

#	**ມາດຕະການໃນປີ 2015**	**ຂອບເຂດປີ**	**ຄວາມຄືບໜ້າ**
M1	ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ປະເທດ	2020	ບໍ່ໄດ້ຕາມຄາດໝາຍ
M2	• ເພີ່ມອັດຕາສ່ວນຂອງພະລັງງານທົດແທນ ໃຫ້ໄດ້ 30% ເຊິ່ງບໍ່ລວມເອົາເຂື່ອນໄຟຟ້າ ຂະໜາດໃຫຍ່	2025	ບໍ່ໄດ້ຈັດຕັ້ງປະຕິບັດ
	• ເພີ່ມອັດຕາສ່ວນການນຳໃຊ້ນ້ຳມັນຊີວະພາບໃຫ້ໄດ້ 10% ຂອງຄວາມຕ້ອງການຊົມໃຊ້ນ້ຳມັນໃນຂະແໜງຂົນສົ່ງ	2025	ບໍ່ໄດ້ຈັດຕັ້ງປະຕິບັດ
M3	ສະໜອງໄຟຟ້າໃຫ້ຄົວເຮືອນ ໃຫ້ໄດ້ 90%	2020	ສຳເລັດຕາມຄາດໝາຍ
M4	ຈັດຕັ້ງປະຕິບັດບັນດາໜ້າວຽກທີ່ໄດ້ກຳນົດໄວ້ພາຍໃຕ້ ກົນໄກຫຼຸດຜ່ອນທາດອາຍເຮືອນແກ້ວ ຕາມສະພາບເງື່ອນໄຂຂອງປະເທດ ໃນຂະແໜງຂົນສົ່ງ	2025	ຍັງບໍ່ທັນໄດ້ລິເລີ່ມ
M5	• ພັດທະນາພະລັງງານນ້ຳທີ່ມີຂະໜາດໃຫຍ່ ເພື່ອໃຫ້ກຳລັງການຜະລິດທັງໝົດເພີ່ມຂຶ້ນເປັນປະມານ 5.500 MW (2020)	2020	ສຳເລັດຕາມຄາດໝາຍ
	• ແລະ 20.000 MW (2030)	2030	ກຳລັງຈັດຕັ້ງປະຕິບັດ
M6	ແຜນດຳເນີນງານ ວ່າດ້ວຍການປ່ຽນແປງດິນຟ້າອາກາດ	ບໍ່ໄດ້ກຳນົດປີ	ກຳລັງຈັດຕັ້ງປະຕິບັດ

ນອກຈາກນັ້ນ, ສປປ ລາວ ຍັງໄດ້ເພີ່ມກຳລັງການຜະລິດ ກະແສໄຟຟ້າຈາກແຫ ່ງພະລັງງານນ້ຳ ໃນປີ 2018 ໄດ້ຫ າຍກວ່າ 4.500 MW (EDL, 2018) ຕາມທີ່ໄດ້ລະບຸໄວ້ ໃນຄາດໝາຍທີ 5 (M5) ຂອງແຜນງານແຫ່ງຊາດ ສະບັບປີ 2015. ເມື່ອພິຈາລະນາຕາມຊົ່ວໂມງການດຳເນີນງານສະເລ່ຍ 5.220 ຊົ່ວໂມງຕໍ່ປີ (EDL, 2018) ແລະ ຕົວຄູນການປ່ອຍທາດອາຍເຮືອນແກ້ວສຳລັບຂະແໜງດັ່ງກ່າວ ຂອງ ສປປ ລາວ ປະມານ 0,5595 tCO2/MWh (UNFCCC, 2019), ຂະແໜງການດັ່ງກ່າວ ຈະສາມາດຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໄດ້ເຖິງ 13.000 ktCO2e ຕໍ່ປີ ໂດຍການສະໜອງພະລັງງານທີ່ສະອາດເຂົ້າໃນລະບົບສາຍສົ່ງ. ປະລິມານດັ່ງກ່າວທຽບເທົ່າກັບ 26% ຂອງການປ່ອຍທາດອາຍເຮືອນແກ້ວຂອງປະເທດ ໃນປີ 2000 (50.742 ktCO2e).

ອີກມາດຕະການໜຶ່ງທີ່ຖືວ່າໄດ້ຮັບຜົນສຳເລັດລວມທັງການຈັດຕັ້ງປະຕິບັດ ແມ່ນແຜນງານ ກ່ຽວກັບການສະໜອງໄຟຟ້າໃນເຂດຊົນນະບົດ ໂດຍການຕອບສະໜອງກະແສໄຟຟ້າໄດ້ເຖິງ 93,79% ຂອງຈ ານວນປະຊາຄອນທົ່ງໝົດ (EDL, 2018) ຊຶ່ງລື່ນຄາດໝາຍທີ່ຕັ້ງໄວ້ 90% ຕາມທີ່ໄດ້ລະບຸໄວ້ໃນຄາດໝາຍທີ 3 (M3) ຂອງແຜນ ງານແຫ່ງຊາດສະບັບປີ 2015. ຂໍ້ຈຳກັດດ້ານການເງິນ ຖືເປັນສິ່ງທ້າທາຍຫັ ກໃນການບັນລຸຄາດໝາຍ M1, M2 ແລະ M4. ຄວາມບໍ່ແນ່ນອນ, ຄວາມບໍ່ສອດຄ່ອງ ແລະ ຄວາມບໍ່ຊັດເຈນຂອງຂໍ້ມູນ, ການເຂົ້າເຖິງແຫ ່ງຂໍ້ມູນ ແລະ ການປະສານງານລະຫວ່າງຂະແໜງການທີ່ຍັງຈຳກັດຖືເປັນບັນຫາຕົ້ນຕ ໃນການຈັດຕັ້ງປະຕິບັດຄາດໝາຍສູ່ຊຸມ M1

ການຄາດຄະເນລະດັບການປ່ອຍທາດອາຍເຮືອນແກ້ວທົ່ວປະເທດໃນປີ 2020 ດັ່ງທີ່ສະເໜີ ໃນຮູບທີ່ 1 ຫົວຂໍ້ 2.2 ໄດ້ສະແດງໃຫ້ເຫັນເຖິງການຄາດຄະເນ ໃນປີ 2020 ໄດ້ເປັນພື້ນຖານດ້ານຂໍ້ມູນໃນການຄິດໄລ່ ຮູບແບບການຫຼຸດຜ່ອນທາດອາຍເຮືອນແກ້ວແບບບໍ່ມີເງື່ອນໄຂ ຮອດປີ 2030.

2.5 ຄາດໝາຍສູ້ຊົນ ແລະ ການຄາດຄະເນ ການຫຼຸດຜ່ອນທາດອາຍເຮືອນແກ້ວແບບບໍ່ມີເງື່ອນໄຂ ຮອດປີ 2030

ຄາດໝາຍສູ້ຊົນ ແລະ ການຄາດຄະເນການຫຼຸດຜ່ອນທາດອາຍເຮືອນແກ້ວແບບບໍ່ມີເງື່ອນໄຂ ແມ່ນຄວາມພະຍາຍາມທີ່ ສປປ ລາວ ວາງຄາດໝາຍສູ້ຊົນໃນການຈັດຕັ້ງປະຕິບັດວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ ຮອດປີ 2030 ໂດຍການພິຈາລະນານຳໃຊ້ຊັບພະຍາກອນທີ່ມີຢູ່ ແລະລະດັບການຊ່ວຍເຫຼືອໃນປະຈຸບັນ ຈາກບັນດາປະເທດທີ່ພັດທະນາແລ້ວ. ຕາຕະລາງ 2 ໄດ້ກຳນົດຄາດໝາຍສູ້ຊົນລະດັບຂະແໜງການ ແລະ ຕາຕະລາງ 3 ໄດ້ກຳນົດຄາດໝາຍສູ້ຊົນ ລະດັບຊາດ. ລາຍລະອຽດແມ່ນຢູ່ໃນ ເອກະສານຊ້ອນທ້າຍທີ 1.

ຕາຕະລາງ 2: ຄາດໝາຍສູ້ຊົນ ແລະ ການຄາດຄະເນການຫຼຸດຜ່ອນທາດອາຍເຮືອນແກ້ວແບບບໍ່ມີເງື່ອນໄຂຮອດປີ 2030

ຂົງເຂດ	**ຄາດໝາຍການຫຼຸດຜ່ອນທາດອາຍເຮືອນແກ້ວ (2020-2030)**	**ການຫຼຸດຜ່ອນທາດອາຍເຮືອນແກ້ວ ໂດຍສະເລ່ຍ ແຕ່ປີ 2020 ຫາ 2030 (kCO2e /ປີ)**
ການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້	ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ການອະນຸລັກປ່າໄມ້, ການຄຸ້ມຄອງປ່າໄມ້ແບບຍືນຍົງ, ເຂດກັນຊົນຂອງປ່າສະຫງວນແຫ່ງຊາດ ແລະ ເຂດສະຫງວນອື່ນໆ ແລະ ການເສີມຂະຫຍາຍມວນທາດການກອນຂອງປ່າ.	1.100
ພະລັງງານ:		
- ພະລັງງານນ້ຳ	ເພີ່ມກຳລັງການຜະລິດກະແສໄຟຟ້າພະລັງງານນ້ຳ ພາຍໃນປະເທດໃຫ້ໄດ້ທັງໝົດ 13 GW (ຊົມໃຊ້ພາຍໃນ ແລະ ການສົ່ງອອກ)	2.500
- ການປະຢັດພະລັງງານ	ການນຳໃຊ້ເຕົາປະຢັດ ຈຳນວນ 50.000 ເຕົາ	50
- ການຂົນສົ່ງ	• ຈັດຕັ້ງປະຕິບັດລະບົບການບໍລິການລົດເມດ່ວນໃນນະຄອນຫຼວງວຽງຈັນ ແລະ ການຂົນສົ່ງທີ່ບໍ່ໃຊ້ກົນຈັກ • ເສັ້ນທາງລົດໄຟ ຮ່ວມມື ລາວ-ຈີນ	25 300

ໃນຂົງເຂດການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້, ສປປ ລາວ ຈະສຸມໃສ່ການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ແຫ່ງຊາດ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ການອະນຸລັກປ່າໄມ້, ການຄຸ້ມຄອງປ່າໄມ້ແບບຍືນຍົງ, ເຂດກັນຊົນຂອງປ່າສະຫງວນແຫ່ງຊາດ ແລະ ເຂດສະຫງວນອື່ນໆ ແລະ ການເສີມຂະຫຍາຍມວນທາດການກອນປ່າໄມ້. ຄາດໝາຍສູ້ຊົນ ຂອງຂົງເຂດນີ້ແມ່ນ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃຫ້ໄດ້ 1.100 ktCO2e ຕໍ່ປີ ໃນລະຫວ່າງປີ 2020 ຫາ 2030 ເຊິ່ງ ຈະເປັນຄາດໝາຍການຫຼຸດຜ່ອນທາດອາຍເຮືອນແກ້ວໄດ້ເຖິງ 3 ເທົ່າຕົວ, ຖ້າທຽບໃສ່ລະດັບການຫຼຸດຜ່ອນທາດອາຍເຮືອນແກ້ວໃນລະຫວ່າງປີ 2000 ຫາ 2015 (ລາຍລະອຽດ ຢູ່ໃນຫົວຂໍ້ 2.4). ຄາດໝາຍສູ້ຊົນນີ້ສາມາດບັນລຸໄດ້ ໂດຍບັນດາໂຄງການທີ່ກຳລັງຈັດຕັ້ງປະຕິບັດຢູ່ ເຊັ່ນ: ໂຄງການ ທີ່ໄດ້ຮັບການສະໜັບສະໜູນ ຈາກກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) (FP117): “ໂຄງການ ການຈັດຕັ້ງປະຕິບັດການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໃນ ສປປ ລາວ ໂດຍການປັບປຸງການບໍລິຫານ ແລະ ຄຸ້ມຄອງພູມີທັດປ່າໄມ້ແບບຍືນຍົງ” ແລະ ໂຄງການ ທີ່ໄດ້ຮັບການສະໜັບສະໜູນ ຈາກທະນາຄານໂລກ(P170559): “ໂຄງການຄຸ້ມຄອງພູມີທັດ ແລະ ພັດທະນາຊີວິດການເປັນຢູ່”. ການຄຸ້ມຄອງປ່າໄມ້ຄວນເອົາໃຈໃສ່ການວາງແຜນນຳໃຊ້ ທີ່ດິນ ໃນລະດັບບ້ານ ແລະ ການຄຸ້ມຄອງຂໍ້ມູນທີ່ດິນປ່າໄມ້ ພ້ອມກັບການເຂົ້າເຖິງແຫຼ່ງຂໍ້ມູນດັ່ງກ່າວ.

ຂົງເຂດພະລັງງານ ປະກອບມີ 3 ຂົງເຂດຍ່ອຍ ເຊັ່ນ: ພະລັງງານນ້ຳ, ການປະຢັດພະລັງງານ ແລະ ການຂົນສົ່ງທີ່ຈະປະກອບສ່ວນເຂົ້າໃນຄວາມພະຍາຍາມໃນການຫຼຸດຜ່ອນທາດອາຍເຮືອນແກ້ວ. ຄາດໝາຍກຳລັງການຜະລິດກະແສໄຟຟ້າຈາກພະລັງງານນ້ຳທັງໝົດ ໃຫ້ໄດ້ 13 GW ໃນປີ 2030, ໂດຍນຳໃຊ້ອັດຕາ ຄວາມເປັນໄປໄດ້ 80% ສຳລັບກຳລັງການຕິດຕັ້ງທີ່ຄາດໄວ້ ໃນປີ 2030 ຕາມແຜນພັດທະນາພະລັງງານ 2016 – 2030 ຂອງກະຊວງ ພະລັງງານ ແລະ ບໍ່ແຮ່. ເຕົາຄົວກົນແບບປະຢັດພະລັງງານ ຈຳນວນ 50.000 ໜ່ວຍ ຈະຊ່ວຍຫຼຸດຜ່ອນການນຳໃຊ້ຊີວະມວນໃນການເຜົາໄໝ້. ນອກຈາກນີ້, ແຜນງານແຫ່ງຊາດສະບັບນີ້ ຍັງໄດ້ເພີ່ມຄາດໝາຍສູ້ຊົນໃໝ່ເຂົ້າຕື່ມ ໃນຂະແໜງຂົນສົ່ງ ເພື່ອປ່ຽນແທນຄາດໝາຍສູ້ຊົນທີ 4 (M4) ຂອງແຜນງານແຫ່ງຊາດ ສະບັບປີ 2015 ທີ່ຍັງບໍ່ໄດ້ຖືກຈັດຕັ້ງປະຕິບັດ, ໂດຍປະກອບມີການກໍ່ສ້າງ ແລະ ການຈັດຕັ້ງປະຕິບັດລະບົບການບໍລິການລົດເມດ່ວນ ຢູ່ໃນນະຄອນຫຼວງວຽງຈັນ ແລະ ການຂົນສົ່ງທີ່ບໍ່ໃຊ້ ກົນຈັກ, ພ້ອມທັງການສ້າງ ແລະ ນຳໃຊ້ເສັ້ນທາງລົດໄຟຮ່ວມມືລາວ-ຈີນ. ທັງສອງຄາດໝາຍສູ້ຊົນດັ່ງກ່າວ ຈະຊ່ວຍຫຼຸດຜ່ອນການນຳໃຊ້ພາຫະນະສ່ວນຕົວທີ່ນຳໃຊ້ນ້ຳມັນເຊື້ອໄຟ. ຄາດໝາຍສູ້ຊົນສຳລັບ ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບບໍ່ມີເງື່ອນໄຂ ໄດ້ລວມເອົາຂົງເຂດການຂົນສົ່ງ ແລະ ການປະຢັດພະລັງງານ ເນື່ອງຈາກໄດ້ມີ ການຈັດສັນທຶນໄວ້ແລ້ວ ເພື່ອຈັດຕັ້ງປະຕິບັດໂຄງການດັ່ງກ່າວ.

ການສືບຕໍ່ຄວາມພະຍາຍາມໃນການຫຼຸດຜ່ອນທາດອາຍເຮືອນແກ້ວໃນປະຈຸບັນ ແລະ ການກຳນົດຄາດໝາຍສູ້ຊົນອັນໃໝ່ ຮອດປີ 2030 ທີ່ໄດ້ລະບຸຢູ່ໃນຕາຕະລາງ 2 ຂ້າງເທິງນັ້ນ ຈະຊ່ວຍໃຫ້ ສປປ ລາວ ສາມາດບັນລຸເປົ້າໝາຍ ໃນລະດັບຊາດຂອງຕົນ ໂດຍບໍ່ມີເງື່ອນໄຂ ດັ່ງທີ່ໄດ້ສະແດງໃຫ້ເຫັນຢູ່ໃນຕາຕະລາງ 3 ຂ້າງລຸ່ມນີ້.

ຕາຕະລາງ 3: ຄາດໝາຍສູ້ຊົນ ແລະ ການຄາດຄະເນ ການຫຼຸດຜ່ອນທາດອາຍເຮືອນແກ້ວແບບບໍ່ມີເງື່ອນໄຂ ລະດັບຊາດ ຮອດປີ 2030

ຄາດໝາຍສູ້ຊົນ ແລະ ການຄາດຄະເນ ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບບໍ່ມີເງື່ອນໄຂລະດັບຊາດ ຮອດປີ 2030	ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃນທົ່ວປະເທດໃຫ້ໄດ້ 60% ຫຼື ປະມານ 62.000 ktCO2e ໂດຍສົມທຽບກັບການປ່ອຍທາດອາຍເຮືອນແກ້ວແບບທຽບຖານ

ການວາງຄາດໝາຍສູ້ຊົນແຫ່ງຊາດໃນການຫຼຸດຜ່ອນທາດອາຍເຮືອນແກ້ວໃຫ້ບັນລຸໄດ້ 60% ໃນປີ 2030 ໂດຍທຽບ ໃສ່ກັບແບບທຽບຖານ. ໃນປີ 2020 ຕີລາຄາໃນເບື້ອງຕົ້ນ ເຫັນວ່າ ສປປ ລາວ ແມ່ນສາມາດບັນລຸໄດ້ແລ້ວ 34% ເຊິ່ງເປັນການປະກອບສ່ວນສຳຄັນໃນວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ປ່ອຍອອກຢູ່ ສປປ ລາວ ຕາມຈຸດປະສົງຂອງການຈັດຕັ້ງປະຕິບັດຜັນທະຕໍ່ ສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ.

2.6 ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂ ໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ ຮອດປີ 2030 ແລະ ບັນລຸຄາດໝາຍສູ້ຊົນ ການປ່ອຍ ແລະ ການດູດຊຶມຊັບ ທາດອາຍເຮືອນແກ້ວຢູ່ ສປປ ລາວ ໃຫ້ເປັນສູນ ໃນປີ 2050

ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂໄດ້ ຮັບການຊ່ວຍເຫຼືອເພີ່ມເຕີມ ແມ່ນຄວາມພະຍາຍາມ ຂອງ ສປປ ລາວ ໃນການດຳເນີນວຽກງານການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ໂດຍໃຫ້ສາມາດບັນລຸໄດ້ຮອດປີ 2030 ພາຍໃຕ້ເງື່ອນໄຂ ໄດ້ຮັບການຊ່ວຍເຫຼືອທາງການເງິນເພີ່ມເຕີມຈາກບັນດາປະເທດທີ່ພັດທະນາແລ້ວ. ຕາຕະລາງ 4 ຂ້າງລຸ່ມນີ້ ໄດ້ນຳສະເໜີ ກ່ຽວກັບ ບັນດາຄາດໝາຍສູ້ຊົນຂອງຂົງເຂດຕ່າງໆ ລວມທັງ ຂົງເຂດທີ່ເພີ່ມເຂົ້າໃໝ່ ໂດຍທຽບໃສ່ແຜນງານແຫ່ງຊາດ ສະບັບປີ 2015. ລາຍລະອຽດຢູ່ໃນ ເອກະສານຊ້ອນທ້າຍ ທີ 1.

ຂົງເຂດການປ່ຽນແປງການນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງ ສປປ ລາວ ຈະສຸມໃສ່ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ ໂດຍສອດຄ່ອງກັບຍຸດທະສາດປ່າໄມ້ແຫ່ງຊາດ.

ຂົງເຂດພະລັງງານປະກອບມີ 3 ຂົງເຂດຍ່ອຍທີ່ຈະປະກອບສ່ວນ ໃນການບັນລຸຄາດໝາຍສູ້ຊົນພາຍໃຕ້ເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ. ສຳລັບພະລັງງານທົດແທນແມ່ນ ຈະເພີ່ມພະລັງງານແສງຕາເວັນ ແລະ ພະລັງງານລົມໃຫ້ໄດ້ 1 GW ແລະ ພະລັງງານຊີວະມວນໃຫ້ໄດ້ 300 MW, ໂດຍສອດຄ່ອງກັບ ນະໂຍບາຍພະລັງງານ ຂອງ ສປປ ລາວ ສະບັບປີ 2020 ເຊິ່ງຈະເປັນການປະກອບສ່ວນທັງໃນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ມົນລະພິດທາງອາກາດ ໂດຍການນຳໃຊ້ສິ່ງເສດເຫຼືອຈາກກະສິກຳ ເພື່ອຫຼີກລ້ຽງການຈູດເຜົາ. ຄາດໝາຍນີ້ແມ່ນປັບປຸງຈາກຄາດໝາຍທີ 2 (M2(1)) ຂອງແຜນງານແຫ່ງຊາດ ສະບັບປີ 2015. ໃນຂະແໜງຂົນສົ່ງປະກອບມີ 2 ຄາດໝາຍສູ້ຊົນຄື: ເພີ່ມການຊົມໃຊ້ພາຫະນະທີ່ແລ່ນດ້ວຍໄຟຟ້າສຳລັບລົດຈັກ ແລະ ລົດໃຫຍ່ໃຫ້ໄດ້ 30% ທຽບໃສ່ຈຳນວນພາຫະນະທັງໝົດທົ່ວປະເທດ ແລະ ເພີ່ມອັດຕາສ່ວນ ຂອງນ້ຳມັນຊີວະພາບໃຫ້ໄດ້ 10% ຂອງຄວາມຕ້ອງການນຳໃຊ້ນ້ຳມັນເຊື້ອໄຟໃນຂະແໜງຂົນສົ່ງພາຍໃນປີ 2030 ໂດຍສອດຄ່ອງກັບຄາດໝາຍສູ້ຊົນ ທີ 2 (M2(2)) ທີ່ກຳນົດໄວ້ໃນແຜນງານແຫ່ງຊາດ ສະບັບປີ 2015. ຄາດໝາຍສູ້ຊົນໃໝ່ ຂອງຂະແໜງພະລັງງານ

ແມ່ນການຫຼຸດຜ່ອນການຊົມໃຊ້ພະລັງງານຢູ່ ສປປ ລາວ ລົງ 10% ເມື່ອທຽບໃສ່ ຕາມຈັງຫວະການຂະຫຍາຍຕົວ ຂອງເສດຖະກິດ (BAU) ເຊິ່ງຖືເປັນ ການນຳໃຊ້ພະລັງງານທີ່ມີປະສິດທິພາບ ແລະ ເປັນການສະໜັບສະໜຸນ ການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດ ວ່າດ້ວຍ ການປະຢັດ ແລະ ອະນຸລັກພະລັງງານປີ 2016. ຄາດວ່າຄວາມ ຕ້ອງການນຳໃຊ້ພະລັງງານທັງໝົດ ຂອງ ສປປ ລາວ ໃນປີ 2030 ຈະມີເຖິງ 4.320 ktoe (ກິໂລໂຕນນ້ຳມັນທຽບ ເທົ່າ) (ອີງຕາມຈັງຫວະການຂະຫຍາຍຕົວຂອງເສດຖະກິດ).

ຕາຕະລາງ 4: ຄາດໝາຍສູ້ຊົນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂ້ຮັບການຊ່ວຍເຫຼືອເພີ່ມເຕີມ ຮອດປີ 2030

ຂົງເຂດ	**ຄາດໝາຍສູ້ຊົນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ (2020 - 2030)**	**ຄາດຄະເນການຫຼຸດຜ່ອນທາດອາຍເຮືອນແກ້ວໂດຍສະເລ່ຍ ແຕ່ປີ 2020 ຫາ 2030 (ktCO2e /ປີ)**
ການປ່ຽນແປງການນຳໃຊ້ທີ່ດິນ ແລະປ່າໄມ້	ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ (ໃຫ້ໄດ້ 16,58 ລ້ານເຮັກຕາ), ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ສົ່ງເສີມການອະນຸລັກປ່າໄມ້, ການຄຸ້ມຄອງປ່າໄມ້ແບບຍືນຍົງ, ເຂດກັນຊົນຂອງປ່າສະຫງວນແຫ່ງຊາດ ແລະ ເຂດສະຫງວນອື່ນໆ ແລະ ການເສີມຂະຫຍາຍມວນທາດການກອນຂອງປ່າ.	45.000
ພະລັງງານ:		
- **ພະລັງງານທົດແທນ**	ພະລັງງານແສງຕາເວັນ ແລະ ພະລັງງານລົມ: ໃຫ້ມີ ກຳລັງຕິດຕັ້ງລວມທັງໝົດ 1GW ໃນທົ່ວປະເທດ	100
	ຊີວະມວນ: ໃຫ້ມີ ກຳລັງຕິດຕັ້ງລວມທັງໝົດ 300MW ໃນທົ່ວປະເທດ	84
- **ຂົນສົ່ງ**	ເພີ່ມການນຳໃຊ້ພາຫະນະທີ່ແລ່ນດ້ວຍໄຟຟ້າສຳລັບລົດຈັກ ແລະ ລົດໃຫຍ່ໃຫ້ໄດ້ 30% ທຽບໃສ່ ຈຳນວນພາຫະນະທັງໝົດທົ່ວປະເທດ	30
	ເພີ່ມອັດຕາສ່ວນຂອງນ້ຳມັນຊີວະພາບໃຫ້ໄດ້ 10% ຂອງຄວາມຕ້ອງການນຳໃຊ້ນ້ຳມັນເຊື້ອໄຟສຳລັບຂະແໜງຂົນສົ່ງ	29
- ການປະຢັດພະລັງງານ	ຫຼຸດຜ່ອນການນຳໃຊ້ພະລັງງານລົງ 10% ເມື່ອທຽບໃສ່ ຕາມຈັງຫວະການຂະຫຍາຍຕົວ ຂອງເສດຖະກິດ	280
ກະສິກຳ	ນຳໃຊ້ວິທີການບໍລິຫານຈັດການນ້ຳໃນການເຮັດນາເຂົ້າ ຢູ່ເຂດທົ່ງພຽງ ໃນເນື້ອທີ່ 50.000 ເຮັກຕາ	128

ສິ່ງເສດເຫຼືອ	ຈັດຕັ້ງປະຕິບັດໂຄງການຄຸ້ມຄອງຂີ້ເຫຍື້ອ ໃນເຂດຕົວເມືອງແບບຍືນຍົງໃຫ້ໄດ້ ໃນປະລິມານ 500 ໂຕນ/ມື້	40

ອີກໜຶ່ງຄາດໝາຍສູ້ຊົນໃໝ່ ສຳລັບຂົງເຂດກະສິກຳພາຍໃຕ້ເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມແມ່ນ ການນຳໃຊ້ວິທີການບໍລິຫານຈັດການນ້ຳໃນການເຮັດນາເຂົ້າຢູ່ເຂດທົ່ງພຽງໃນເນື້ອທີ່ 50.000 ເຮັກຕາ. ຂົງເຂດ ກະສິກຳຖືເປັນຂົງເຂດໜຶ່ງ ທີ່ມີການປ່ອຍທາດອາຍເຮືອນແກ້ວອອກຫຼາຍ ເປັນອັນດັບສອງຂອງປະເທດ, ແຕ່ບໍ່ໄດ້ ຖືກລະບຸໃນແຜນງານແຫ່ງຊາດ ສະບັບປີ 2015 ທີ່ຜ່ານມາ.

ນອກຈາກນີ້, ການຈັດຕັ້ງປະຕິບັດໂຄງການຄຸ້ມຄອງຂີ້ເຫຍື້ອໃນຕົວເມືອງແບບຍືນຍົງໃນນະຄອນຫຼວງ ວຽງຈັນ ໃຫ້ໄດ້ໃນປະລິມານ 500 ໂຕນ/ມື້ ທີ່ນອນຢູ່ໃນຂົງເຂດສິ່ງເສດເຫຼືອ ຖືເປັນອີກໜຶ່ງຄາດໝາຍສູ້ຊົນ ໃໝ່ ພາຍໃຕ້ເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ. ເຖິງແມ່ນວ່າຂົງເຂດນີ້ຈະປະກອບສ່ວນໃນການປ່ອຍທາດອາຍ ເຮືອນແກ້ວໃນປີທຽບຖານ ຕ່ຳກ່ວາ 1% ກໍຕາມ, ແຕ່ວ່າ ການຈູດຂີ້ເຫຍື້ອສະຊາຍ ແລະ ການໝັກບົ່ມຂອງຂີ້ເຫຍື້ອ ຊີວະພາບໃນສະໜາມຖິ້ມຂີ້ເຫຍື້ອທີ່ບໍ່ມີລະບົບການສະກັດອາຍກາສ ເຊິ່ງຈະເຮັດໃຫ້ມີ ການປ່ອຍທາດອາຍມີເທນ ເພີ່ມຂຶ້ນຢ່າງຕໍ່ເນື່ອງໄປຄຽງຄູ່ກັບການພັດທະນາເສດຖະກິດ-ສັງຄົມ. ນອກຈາກນີ້, ການຫັນໄປສູ່ເສດຖະກິດແບບ ຮອບວຽນ (circular economy) ຖືເປັນໜຶ່ງໃນຂົງເຂດບຸລິມະສິດ ທີ່ຈະນອນຢູ່ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX. ຄາດໝາຍສູ້ຊົນນີ້ຈະປະກອບສ່ວນໃຫ້ກັບ ການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນ ຈັດຕັ້ງປະຕິບັດການຄຸ້ມຄອງຂີ້ເຫຍື້ອແບບຍືນຍົງ ໃນນະຄອນຫຼວງວຽງຈັນ ປີ 2020-2030 ເຊິ່ງລວມເອົາການ ແຍກຂີ້ເຫຍື້ອອິນຊີ ແລະ ການນຳເອົາຂີ້ເຫຍື້ອມານຳໃຊ້ຄືນ. ສປປ ລາວ ຍັງຊອກຫາທ່າແຮງບົ່ມຊ້ອນຂອງ ການ ຫຼຸດຜ່ອນທາດອາຍເຮືອນແກ້ວ ຈາກການຈັດຕັ້ງປະຕິບັດເສດຖະກິດແບບຮອບວຽນ ລວມທັງ ການໝຸນໃຊ້ວັດຖຸ ດິບ ແລະ ຜະລິດຕະພັນຄືນໃໝ່, ຕົວແບບການດຳເນີນທຸລະກິດແບບຮອບວຽນ, ປະສິດທິພາບໃນການນຳໃຊ້ ຊັບພະຍາກອນເພື່ອການຜະລິດ ແລະ ໃຫ້ບຸລິມະສິດຕໍ່ກັບ ການນຳໃຊ້ຊັບພະຍາກອນ ທີ່ສາມາດຜະລິດຄືນໃໝ່ໄດ້.

ການເພີ່ມມາດຕະການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ເຂົ້າໃນວຽກງານປະສິດທິພາບດ້ານພະລັງ ງານ, ການກະສິກຳ ແລະ ສິ່ງເສດເຫຼືອ ສະແດງໃຫ້ເຫັນເຖິງຄວາມພະຍາຍາມຢ່າງຈິງຈັງ ຂອງ ສປປ ລາວ ໃນການ ປະກອບສ່ວນ ເພື່ອບັນລຸຕາມຈຸດປະສົງຂອງສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ. ຄວາມພະຍາຍາມ ໃນການຫຼຸດຜ່ອນທາດອາຍເຮືອນແກ້ວໃນປະຈຸບັນ ບວກກັບ ຄາດໝາຍສູ້ຊົນໃໝ່ຮອດປີ 2030 ພາຍໃຕ້ຮູບແບບ ບໍ່ມີເງື່ອນໄຂ ແລະ ໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ ຈະຊ່ວຍໃຫ້ປະເທດສາມາດບັນລຸ ເປົ້າໝາຍ ການປ່ອຍ ແລະ ການດູດຊຶມຊັບທາດອາຍເຮືອນແກ້ວໃຫ້ເປັນສູນໃນປີ 2050 ໄດ້ ຫຼື ອາດຈະໄວກວ່ານັ້ນ ຖ້າຫາກຂະແໜງປ່າໄມ້ໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ.

2.7 ຄວາມຕ້ອງການຂອງປະເທດ

ຄາດຄະເນຄວາມຕ້ອງການທາງດ້ານການເງິນ ໃນການຈັດຕັ້ງປະຕິບັດບັນດາມາດຕະການຫຼຸດຜ່ອນທາດ ອາຍເຮືອນແກ້ວເຖິງປີ 2030 ພາຍໃຕ້ເງື່ອນໄຂທີ່ໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ ແມ່ນປະມານ 4.762 ລ້ານໂດລາ ສະຫະລັດ. ການຄາດຄະເນດັ່ງກ່າວແມ່ນໄດ້ອີງໃສ່ຂໍ້ມູນທີ່ເກັບກຳໄດ້ ຫຼື ຂໍ້ມູນທີ່ຖືກບັນທຶກໄວ້ຂອງປະເທດ (ຄິດເປັນໂດລາສະຫະລັດ/ໜ່ວຍ) ຕາມແບບຈຳລອງຕົ້ນທຶນ ສຳລັບກິດຈະກຳ ຫຼຸດຜ່ອນທາດອາຍເຮືອນແກ້ວ (GACMO) ຈາກຄູ່ຮ່ວມງານຂອງອົງການສະຫະປະຊາຊາດເພື່ອສິ່ງແວດລ້ອມ (UNEP DTU Partnership).

ນອກຈາກນີ້, ສປປ ລາວ ຍັງໄດ້ຊອກຫາແຫຼ່ງທຶນການສະໜັບສະໜູນ ຈາກບັນດາປະເທດທີ່ພັດທະນາແລ້ວ ຕໍ່ວຽກງານການອອກແບບກົນໄກການເງິນທີ່ເປັນນະວັດຕະກຳໃໝ່ ໂດຍສາມາດລວບລວມທຶນຂອງພາກລັດ ແລະ ພາກເອກະຊົນເຂົ້ານຳກັນໄດ້ ເຊິ່ງຖືວ່າເປັນວິທີການຫຼຸດຜ່ອນຄວາມສ່ຽງ ແລະ ເພີ່ມການລົງທຶນ ຂອງພາກເອກະຊົນເຂົ້າໃນໂຄງການທີ່ຕິດພັນກັບວຽກງານການປ່ຽນແປງດິນຟ້າອາກາດໃຫ້ຫຼາຍຂຶ້ນໄດ້.

ຕາຕະລາງ 5: ຄາດຄະເນຄວາມຕ້ອງການດ້ານການເງິນ-ມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ

ຄາດໝາຍສູ້ຊົນເພື່ອຫຼຸດຜ່ອນທາດອາຍເຮືອນແກ້ວແບບມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມຮອດປີ 2030	**ຄວາມຕ້ອງການດ້ານການເງິນ (ລ້ານ ໂດລາ ສະຫະລັດ)**
ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ປະເທດ	1.700
ພະລັງງານແສງຕາເວັນ ແລະ ພະລັງງານລົມ: ໃຫ້ມີ ກຳລັງຕິດຕັ້ງ 1GW	1.500
ພະລັງງານຊີວະມວນ: ໃຫ້ມີ ກຳນລັງຕິດຕັ້ງ 300MW	720
ເພີ່ມການນຳໃຊ້ພາຫະນະທີ່ແລ່ນດ້ວຍໄຟຟ້າສຳລັບລົດຈັກ ແລະ ລົດໃຫຍ່ໃຫ້ໄດ້ 30%	500
ເພີ່ມອັດຕາສ່ວນຂອງນ້ຳມັນຊີວະພາບໃຫ້ໄດ້ 10% ຂອງຄວາມຕ້ອງການນຳໃຊ້ນ້ຳມັນເຊື້ອໄຟສຳລັບຂະແໜງຂົນສົ່ງ	230
ຫຼຸດຜ່ອນການນຳໃຊ້ພະລັງງານລົງ 10% ເມື່ອທຽບໃສ່ສະພາບການຕາມຈັງຫວະການຂະຫຍາຍຕົວຂອງເສດຖະກິດ	30
ນຳໃຊ້ວິທີການບໍລິຫານຈັດການນ້ຳໃນການເຮັດນາເຂົ້າ ຢູ່ເຂດທົ່ງພຽງ ໃນເນື້ອທີ່ 50.000 ເຮັກຕາ	65
ຈັດຕັ້ງປະຕິບັດໂຄງການຄຸ້ມຄອງຂີ້ເຫຍື້ອ ໃນເຂດຕົວເມືອງ ແບບຍືນຍົງໃຫ້ໄດ້ ໃນປະລິມານ 500 ໂຕນ/ມື້	17
ລວມທັງໝົດ	**4.762**

ພ້ອມດຽວກັນນີ້, ສປປ ລາວ ຍັງໄດ້ຮຽກຮ້ອງໃຫ້ມີການຊ່ວຍເຫຼືອຢ່າງຕໍ່ເນື່ອງ ໃນການສ້າງຄວາມສາມາດ ດ້ານການບໍລິຫານ, ນິຕິກຳ, ເຕັກນິກ ແລະ ດ້ານສະຖາບັນ ລວມທັງສະໜັບສະໜູນໃນການສ້າງນະໂຍບາຍ ແລະ ສ້າງຄວາມພ້ອມ ເພື່ອຈັດຕັ້ງປະຕິບັດແຜນງານແຫ່ງຊາດ ປະກອບມີວຽກງານການວັດແທກ, ການລາຍງານ ແລະ ການຢັ້ງຢືນ, ການເກັບກຳຂໍ້ມູນ, ການສຳຫຼວດການປ່ອຍທາດອາຍເຮືອນແກ້ວ, ການສ້າງແບບຈຳລອງ ກ່ຽວກັບການປ່ອຍທາດອາຍເຮືອນແກ້ວ ແລະ ສະພາບພູມອາກາດ, ການຊື້-ຂາຍການປ່ອຍ ແລະ ເສີມຂະຫຍາຍການເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດເຂົ້າໃນນະໂຍບາຍລະດັບຊາດ ແລະ ທ້ອງຖິ່ນ ໂດຍຜ່ານການນຳໃຊ້ເຄື່ອງມືຕ່າງໆໃນການສ້າງແຜນຈັດຕັ້ງປະຕິບັດກ່ຽວກັບວຽກງານການປ່ຽນແປງດິນຟ້າອາກາດ ເຊັ່ນ: ການກັ່ນຕອງຄວາມສ່ຽງ ແລະ ການກຳນົດງົບປະມານສຳລັບວຽກງານການປ່ຽນແປງດິນຟ້າອາກາດ.

ສປປ ລາວ ຍິນດີຮັບເອົາການຊ່ວຍເຫຼືອດ້ານນິຕິກຳ ແລະ ເຕັກນິກ ເພື່ອດັດປັບການກຳນົດເຂດແດນປ່າໄມ້ ໃຫ້ແທດເໝາະກັບ ເນື້ອທີ່ປົກຫຸ້ມປ່າໄມ້ທີ່ມີຢູ່ ແລະ ຫຼີກເວັ້ນການຫັນປ່ຽນທີ່ດິນທີ່ມີປ່າໄມ້ ເຊິ່ງໃນປັດຈຸບັນຖືກກຳນົດຢູ່ນອກເຂດພື້ນທີ່ປ່າໄມ້ ໄປເປັນດິນປະເພດອື່ນ.

2.8 ວິທີການ

ການຄິດໄລ່ການປ່ອຍທາດອາຍເຮືອນແກ້ວ ທັງຮູບແບບທຽບຖານ ແລະ ຮູບແບບອື່ນໆນັ້ນ ແມ່ນໄດ້ນຳໃຊ້ແບບຈຳລອງຕົ້ນທຶນສຳລັບກິດຈະກຳຫຼຸດຜ່ອນທາດອາຍເຮືອນແກ້ວ (GACMO) ຈາກຄູ່ຮ່ວມງານຂອງອົງການສະຫະປະຊາຊາດເພື່ອສິ່ງແວດລ້ອມ (UNEP DTU Partnership). ແຫຼ່ງຂໍ້ມູນຕົ້ນຕໍທີ່ນຳໃຊ້ເຂົ້າໃນການຄິດໄລ່ແມ່ນໄດ້ມາຈາກບົດສື່ສານແຫ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດ ສະບັບທີ 2 ທີ່ໄດ້ນຳສົ່ງໃຫ້ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ, ບົດລາຍງານການປະເມີນຄວາມຕ້ອງການດ້ານເຕັກໂນໂລຊີ ພາກການຫຼຸດຜ່ອນທາດອາຍເຮືອນແກ້ວຂອງ ສປປ ລາວ, ບົດລາຍງານລະດັບທຽບຖານການປ່ອຍທາດອາຍເຮືອນແກ້ວຂອງປ່າໄມ້ ແລະ ລະດັບທຽບຖານຂອງປ່າໄມ້ (FREL/FRL) ສຳລັບລັບການຈ່າຍຕອບແທນຕາມຜົນຂອງ REDD+ ພາຍໃຕ້ ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ເພື່ອນຳໃຊ້ເປັນບ່ອນອີງໃນການຄິດເປັນມູນຄ່າທາງດ້ານການເງິນ ສຳລັບກິດຈະກຳ REDD+, ບົດລາຍງານສະຖິຕິໄຟຟ້າລາວ ປະຈຳປີ 2018 ຈາກລັດວິສາຫະກິດໄຟຟ້າລາວ, ສະຖິຕິພະລັງງານຂອງ ສປປ ລາວ ປະຈຳປີ 2018, ບົດສະເໜີໂຄງການທີ່ໄດ້ຮັບການສະໜັບສະໜູນຈາກ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) ກ່ຽວກັບການຈັດຕັ້ງປະຕິບັດການສ້າງຄວາມເຂັ້ມແຂງໃນວຽກງານປ່າໄມ້, ການຄຸ້ມຄອງປ່າໄມ້ແບບພູມີທັດ ແລະ ສິ່ງເສີມຊີວິດການເປັນຢູ່ (ລະຫັດໂຄງການ: FP117). ການຄິດໄລ່ຕົວຄູນການປ່ອຍທາດອາຍເຮືອນແກ້ວ ຈາກຕາຂ່າຍໄຟຟ້າຂອງປະເທດ ໂດຍການນຳໃຊ້ເຄື່ອງມືໃນການຄິດໄລ່ການປ່ອຍທາດອາຍເຮືອນແກ້ວສຳລັບລະບົບໄຟຟ້າ ຂອງສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ. ການສຳຫຼວດການປ່ອຍທາດອາຍເຮືອນແກ້ວ ໃນບົດສື່ສານແຫ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດ ສະບັບທີ 2 ທີ່ໄດ້ສົ່ງໃຫ້ ສົນທິສັນຍາ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ແມ່ນປະຕິບັດຕາມ ຄູ່ມືແນະນຳຂອງ ຄະນະກຳມະການສາກົນ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ (IPCC) ສະບັບປັບປຸງ. ຂໍ້ມູນພື້ນຖານ ກ່ຽວກັບ ຄາດໝາຍຫຼຸດຜ່ອນທາດອາຍເຮືອນແກ້ວ ແມ່ນຢູ່ໃນ ເອກະສານຊ້ອນທ້າຍທີ 1.

ແຜນງານແຫ່ງຊາດ ສະບັບນີ້ ໄດ້ກຳນົດເອົາ ການຄາດຄະເນການປ່ອຍ ແລະ ການດູດຊຶມຊັບທາດອາຍກາກບອນ ຈາກພື້ນທີ່ປ່າໄມ້ ໃຫ້ມີຄວາມສອດຄ່ອງກັບ ບົດລາຍງານຜົນການສຳຫຼວດທາດອາຍເຮືອນແກ້ວ ຂອງປີ 2000 ທີ່ລະບຸໄວ້ໃນ ບົດສື່ສານແຫ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດ ສະບັບທີ 2 [ນຳໃຊ້ຄູ່ມືແນະນຳຂອງ IPCC ສະບັບປີ 1996]. ເຖິງຢ່າງໃດກໍຕາມ ການຄິດໄລ່ດັ່ງກ່າວບໍ່ສາມາດປຽບທຽບ ກັບປະລິມານການດູດຊຶມຊັບສຸດທິ ໃນຂະແໜງປ່າໄມ້ ທີ່ໄດ້ລະບຸໄວ້ ໃນບົດລາຍງານຄວາມຄືບໜ້າ ທຸກສອງປີ (BUR) ສະບັບທຳອິດ [ນຳໃຊ້ຄູ່ມືແນະນຳຂອງ IPCC ສະບັບປີ 2006], ແຕ່ໂດຍລວມແລ້ວ ການຄິດໄລ່ດັ່ງກ່າວ ແມ່ນມີຄວາມສອດຄ່ອງກັບປະລິມານການປ່ອຍທາດອາຍເຮືອນແກ້ວສຸດທິ ສຳລັບການຈ່າຍຕອບແທນຕາມຜົນຂອງ REDD+ ທີ່ເປັນເອກະສານຊ້ອນທ້າຍ ໃນບົດລາຍງານ ຄວາມຄືບໜ້າ ທຸກສອງປີ. ຄວາມແຕກຕ່າງຕົ້ນຕໍ ຂອງຂໍ້ມູນການສຳຫຼວດທາດອາຍເຮືອນແກ້ວ ທີ່ລະບຸຢູ່ໃນບົດລາຍງານທຸກສອງປີ ແມ່ນການນຳເອົາຂໍ້ມູນ ການປະເມີນການເພີ່ມຂຶ້ນຂອງຊີວະມວນ ໃນພື້ນທີ່ປ່າໄມ້ທີ່ມີຢູ່ກ່ອນ ເຂົ້າຕື່ມອີກ ໂດຍນຳໃຊ້ວິທີການຄິດໄລ່ການປ່ອຍ ແລະ ດູດຊຶມຊັບທາດອາຍກາກບອນ, ຈຶ່ງເຮັດໃຫ້ ການຄິດໄລ່ອັດຕາ ການດູດຊຶມຊັບທາດອາຍກາກບອນຂອງເນື້ອທີ່ປ່າໄມ້ທີ່ມີຢູ່ກ່ອນນັ້ນຫຼາຍຂຶ້ນ. ຍ້ອນວ່າຍັງຂາດຂໍ້ມູນອ້າງອີງທີ່ ສາມາດນຳມາຢັ້ງຢືນໄດ້ຢ່າງຊັດເຈນ, ສະນັ້ນ ແຜນງານແຫ່ງຊາດ ສະບັບນີ້ ໄດ້ຄາດຄະເນວ່າ ພື້ນທີ່ປ່າໄມ້ທີ່ມີຢູ່ກ່ອນ ມີອັດຕາການປ່ອຍ ແລະ ດູດຊຶມຊັບອາຍກາກບອນໃນລະດັບເກົ່າ ເພື່ອຫຼຸດຄວາມບໍ່ແນ່ນອນ.

ສປປ ລາວ ຮັບຮູ້ວ່າ ຄວາມບໍ່ສອດຄ່ອງຂອງຂໍ້ມູນດັ່ງກ່າວນີ້ ເປັນຂົງເຂດທີ່ຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະ ມີຄວາມໝາຍໝັ້ນ ທີ່ຈະເຮັດໃຫ້ບົດລາຍງານລະດັບທຽບຖານ ການປ່ອຍທາດອາຍເຮືອນແກ້ວຂອງປ່າໄມ້/ລະດັບທຽບຖານຂອງປ່າໄມ້ (FREL/FRL) ແລະ ບົດລາຍງານການສຳຫຼວດການປ່ອຍທາດອາຍເຮືອນແກ້ວໃນຂະແໜງປ່າໄມ້ ແລະ ການນຳໃຊ້ທີ່ດິນມີຄວາມສອດຄ່ອງກັນຫຼາຍຂຶ້ນໃນອະນາຄົດ ໂດຍຜ່ານ ການດັດປັບຕົວເລກຄາດຄະເນອັດຕາການປ່ອຍ ແລະ ການດູດຊຶມຊັບທາດອາຍການກບອນ ຂອງ ພື້ນທີ່ປ່າໄມ້ ທີ່ມີຢູ່ ໂດຍການນຳໃຊ້ວິທີການຄິດໄລ່ການປ່ຽນແປງມວນທາດການກບອນ.

III. ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

3.1 ສະພາບລວມ ກ່ຽວກັບ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນດິນຟ້າອາກາດ

ສປປ ລາວ ເປັນປະເທດໜຶ່ງທີ່ມີຄວາມບອບບາງສູງ ຕໍ່ບັນຫາການປ່ຽນແປງດິນຟ້າອາກາດ ຍ້ອນທີ່ຕັ້ງພູມສັນຖານ ແລະ ສະພາບພູມປະເທດ, ເປັນປະເທດທີ່ຍັງອີງໃສ່ຊັບພະຍາກອນທຳມະຊາດ ແລະ ການຜະລິດກະສິກຳ, ຄວາມສາມາດໃນການປັບຕົວຍັງຕ່ຳ ແລະ ສ່ວນໜຶ່ງ ກໍຍ້ອນວ່າຍັງເປັນປະເທດດ້ອຍພັດທະນາ. ບັນຫາໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ຖືວ່າຍັງເປັນໄພຂົ່ມຂູ່ທີ່ຮ້າຍແຮງທີ່ສຸດຂອງປະເທດ. ຄວາມເສຍຫາຍ ແລະ ການສູນເສຍ ຈາກໄພນ້ຳຖ້ວມໃນປີ 2018 ໄດ້ສົ່ງຜົນກະທົບ ຕໍ່ປະຊາຊົນຫຼາຍກວ່າ 600.000 ຄົນໃນຂອບເຂດທົ່ວປະເທດ ແລະ ມີມູນຄ່າເສຍຫາຍປະມານ 371 ລ້ານໂດລາສະຫະລັດ ຫຼືປະມານ 2% ຂອງ GDP[4]. ໃນປີ 2019, ໃນ 2 ແຂວງພາກກາງ ແລະ 4 ແຂວງພາກໃຕ້ ໄດ້ປະເຊີນກັບພາຍຸໝຸນລະດູຮ້ອນ ແລະ ພາຍຸດີເພຣສເຊັນ ເຮັດໃຫ້ເກີດມີນ້ຳຖ້ວມໃນວົງກວ້າງ ເຊິ່ງໄດ້ສົ່ງຜົນກະທົບຕໍ່ປະຊາຊົນ ຫຼາຍກວ່າ 764.000 ຄົນ[5] ແລະ ເຮັດໃຫ້ມີຜູ້ເສຍຊີວິດ, ສ້າງຄວາມເສຍຫາຍຕໍ່ ການດຳລົງຊີວິດ ແລະ ຊັບສິນຂອງປະຊາຊົນ. ຄວາມສ່ຽງຈາກບັນຫາໄພແຫ້ງແລ້ງກໍມີສູງເຊັ່ນດຽວກັນ ເຊິ່ງອາດຈະສົ່ງຜົນກະທົບຕໍ່ຊັບພະຍາກອນນ້ຳ, ການຜະລິດກະສິກຳ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ, ການຜະລິດກະແສໄຟຟ້າຈາກແຫຼ່ງພະລັງງານນ້ຳ, ສຸຂະພາບຂອງປະຊາຊົນ ແລະ ອື່ນໆ.

ໃນອະນາຄົດ ໄດ້ມີການຄາດຄະເນໄວ້ວ່າ ອຸນຫະພູມ ຢູ່ໃນພາກພື້ນແມ່ນ້ຳຂອງຈະເພີ່ມສູງຂຶ້ນ ໃນທຸກລະດູການ. ປະລິມານນ້ຳຝົນອາດຈະເພີ່ມຂຶ້ນ ຫຼື ຫຼຸດລົງ ຂຶ້ນກັບ ຄວາມຜັນຜວນຂອງການປ່ຽນແປງ ແລະ ພື້ນທີ່ ທີ່ຈະໄດ້ຮັບຜົນກະທົບ. ການປ່ຽນແປງຂອງອຸນຫະພູມ ແລະ ປະລິມານນ້ຳຝົນ ຈະເຮັດໃຫ້ເກີດການປ່ຽນແປງ ດ້ານອຸທົກກະສາດ, ໄພນ້ຳຖ້ວມທີ່ຮຸນແຮງຂຶ້ນ, ສົ່ງຜົນກະທົບຕໍ່ຊີວະນາໆພັນ, ລະບົບນິເວດ ແລະ ການບໍລິການຂອງລະບົບດັ່ງກ່າວ. ຄາດວ່າຄວາມຜັນຜວນຂອງສະພາບອາກາດ ດັ່ງກ່າວ ຈະເຮັດໃຫ້ຜົນຜະລິດເຂົ້າ ແລະ ສາລີຫຼຸດລົງ, ສົ່ງຜົນກະທົບຕໍ່ ການຜະລິດໄຟຟ້າພະລັງງານນ້ຳ, ການເດີນເຮືອ, ຖະໜົນຫົນທາງ, ພື້ນຖານໂຄງລ່າງໃນການສະໜອງນ້ຳ ແລະ ການຄ້ຳປະກັນສະບຽງອາຫານ.[6]

ແຜນດຳເນີນງານແຫ່ງຊາດໃນການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ (2009), ຍຸດທະສາດການປ່ຽນແປງດິນຟ້າອາກາດຂອງ ສປປ ລາວ (2010), ແຜນດຳເນີນງານການປ່ຽນແປງດິນຟ້າອາກາດຂອງ ສປປ ລາວ (2013-2020) ແລະ ແຜນງານແຫ່ງຊາດການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ ສະບັບປີ 2015 ໄດ້ເນັ້ນໃຫ້ເຫັນເຖິງຄວາມຈຳເປັນໃນການສ້າງຄວາມທົນທານໃຫ້ກັບຂະແໜງການ ທີ່ມີຄວາມ

[4]ລັດຖະບານແຫ່ງ ສປປ ລາວ. ການປະເມີນ ຄວາມຕ້ອງການ ພາຍຫຼັງໄພພິບັດ. ໄພນ້ຳຖ້ວມປີ 2018, ສປປ ລາວ. 2018.
[5]https://reliefweb.int/sites/reliefweb.int/files/resources/AHA-Situation_Update-no6-LaoPDR_TS-PODUL-TD-KAJIKI.pdf
[6] Mekong Climate Change Adaptation Strategy and Action Plan (2017), Mekong River Commission

ບອບບາງຕໍ່ ການປ່ຽນແປງດິນຟ້າອາກາດ ເປັນຕົ້ນ: ກະສິກຳ, ປ່າໄມ້ ແລະ ການນຳໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ຂົນສົ່ງ ແລະ ການພັດທະນາຕົວເມືອງ ແລະ ສາທາລະນະສຸກ. ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຮອດປີ 2030 (2019) ໄດ້ກຳນົດເອົາວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເປັນວຽກງານຈຸດສຸມໜຶ່ງ ທີ່ກວມເອົາຫຼາຍຂົງເຂດ ເພື່ອຫຼຸດຜ່ອນຄວາມບອບບາງຂອງປະເທດ ແລະ ປະຊາຊົນ ໂດຍສະເພາະແມ່ນ ກຸ່ມຄົນທີ່ ມີຄວາມສ່ຽງ ຕໍ່ໄພພິບັດທຳມະຊາດ ແລະ ຄວາມບໍ່ໝັ້ນຄົງຂອງເສດຖະກິດໂລກ ທີ່ນັບມື້ນັບຮ້າຍແຮງຂຶ້ນ ແລະ ບໍ່ ສາມາດຄາດການໄດ້. ມາດຕະການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຍັງສ້າງໃຫ້ເກີດມີຜົນປະໂຫຍດ ຮ່ວມກັນກັບ ມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວ ແລະ ປະກອບສ່ວນຕໍ່ກັບການສ້າງຄວາມຫຼາກຫຼາຍທາງ ເສດຖະກິດ. ຍົກຕົວຢ່າງ: ການປັບປຸງ ການຄຸ້ມຄອງປ່າໄມ້ ໃນເຂດປ່າສະຫງວນ ຈະຊ່ວຍຫຼຸດຜ່ອນທາດອາຍເຮືອນ ແກ້ວ ແລະ ເພີ່ມຄວາມທົນທານ ຕໍ່ກັບຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ເຊັ່ນ: ຈາກໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ. ນອກຈາກນີ້, ເສດຖະກິດແບບຮອບວຽນ ຍັງສາມາດຊ່ວຍເສີມສ້າງ ຄວາມທົນທານ ຂອງ ສປປ ລາວ ຕໍ່ກັບການປ່ຽນແປງ ຂອງສະພາບດິນຟ້າອາກາດ. ຕົວຢ່າງ: ໃນເວລາທີ່ຂຸມຊຸ ສຸມໃສ່ການນຳໃຊ້ຊັບພະຍາກອນ ຂອງທ້ອງຖິ່ນ ທີ່ສາມາດຜະລິດຄືນໃໝ່ ພ້ອມທັງ ຮັກສາວົງຈອນຂອງສານອາຫານ ໃນລະດັບທ້ອງຖິ່ນ, ຂຸມຊຸ ກໍ ຈະສາມາດຫຼຸດຜ່ອນການເອື່ອຍອີງໃສ່ ການນຳເຂົ້າຈາກຕ່າງປະເທດ ໂດຍສະເພາະຕ່ອງໂສ້ມູນຄ່າສິນຄ້າທີ່ມີຄວາມ ບອບບາງຕໍ່ກັບການປ່ຽນແປງດິນຟ້າອາກາດ.

ໂດຍອີງໃສ່ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 10 ປີ (2015 – 2025) ແລະ ແຜນ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ (2021 – 2025), ບັນດາຈຸດປະສົງທີ່ເປັນບຸລິມະສິດ ຂອງວຽກງານ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂົງເຂດສຳຄັນ ທີ່ໄດ້ລະບຸໄວ້ໃນແຜນງານແຫ່ງຊາດ ສະບັບປີ 2015 ແມ່ນມີການປັບປຸງ ແລະ ເພີ່ມເຂົ້າຕື່ມ ເຊິ່ງລວມເອົາບັນດາມາດຕະການທີ່ຈະຊ່ວຍ ຫຼຸດຜ່ອນຄວາມສ່ຽງ ແລະ ການເສີມສ້າງຄວາມທົນທານໃນໄລຍະຍາວ ໂດຍສະເພາະໃນຂະແໜງ ພະລັງງານທີ່ເພີ່ມເຂົ້າມາໃໝ່ ເຊິ່ງໄດ້ ສັງລວມຢູ່ໃນຕາຕະລາງ 6 ຂ້າງລຸ່ມນີ້. ນອກຈາກນີ້, ແຜນງານແຫ່ງຊາດ ສະບັບປີ 2020 ແລະ ແຜນງານແຫ່ງຊາດ ການປັບຕົວເຂົ້າກັບການປ່ຽແປງດິນຟ້າອາກາດ (NAP) ທີ່ກຳລັງຈະສ້າງຂຶ້ນໃໝ່ ຈະຊ່ວຍຊຸກຍູ້ການຈັດຕັ້ງປະຕິບັດ ວຽກງານສ້າງແຜນດຳເນີນງານດ້ານການປັບຕົວເຂົ້າໃນແຕ່ລະຂະແໜງການ ລວມທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໃນແຕ່ລະໄລຍະ ພ້ອມທັງໃຫ້ມີການຕິດຕາມກວດກາ, ການວັດແທກ, ການລາຍງານ ແລະ ການຢັ້ງຢືນ.

ຕາຕະລາງ 6: ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຢູ່ຂົງເຂດສຳຄັນ ໃນໄລຍະຍາວ

ລ.ດ	ຂົງເຂດ	ຈຸດປະສົງ
1	ກະສິກຳ	• ສົ່ງເສີມການສ້າງຄວາມທົນທານໃນລະບົບການປູກຝັງ, ລ້ຽງສັດ ແລະ ພື້ນຖານໂຄງລ່າງ ດ້ານກະສິກຳ ຕໍ່ກັບການປ່ຽນແປງດິນຟ້າອາກາດ; • ສົ່ງເສີມເຕັກໂນໂລຊີທີ່ເໝາະສົມ ເພື່ອການປັບຕົວເຂົ້າກັບການປ່ຽນແປງ ດິນຟ້າອາກາດ ລວມທັງວິທີການແກ້ໄຂບັນຫາໂດຍນຳໃຊ້ທຳມະຊາດ ເປັນພື້ນຖານ ແລະ ສົ່ງເສີມຮູບແບບເສດຖະກິດແບບຮອບວຽນ
2	ປ່າໄມ້ ແລະ ການ ປ່ຽນແປງການນຳໃຊ້ ທີ່ດິນ	• ສົ່ງເສີມການສ້າງຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ ໃນ ການຜະລິດ ແລະ ລະບົບນິເວດ ຂອງປ່າໄມ້, ລວມທັງເຂດກັນຊົນຂອງປ່າ ສະຫງວນ ແລະ ເຂດປ່າໄມ້ອື່ນໆ

		• ສົ່ງເສີມການສ້າງຄວາມສາມາດດ້ານວິຊາການ ກ່ຽວກັບການຄຸ້ມຄອງປ່າໄມ້ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃຫ້ແກ່ຂະແໜງປ່າໄມ້; • ສົ່ງເສີມການວາງແຜນການຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ
3	ຊັບພະຍາກອນນ້ຳ	• ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບຂໍ້ມູນຂ່າວສານ ດ້ານຊັບພະຍາກອນນ້ຳ ເພື່ອການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ; • ການຄຸ້ມຄອງຊັບພະຍາກອນນ້ຳໜ້າດິນ, ນ້ຳໃຕ້ດິນ ແລະ ທີ່ດິນບໍລິເວນນ້ຳ ເພື່ອສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ; • ເພີ່ມຄວາມທົນທານໃຫ້ແກ່ໂຄງລ່າງພື້ນຖານດ້ານຊັບພະຍາກອນນ້ຳ ຕໍ່ການປ່ຽນແປງດິນຟ້າອາກາດໃຫ້ຫຼາຍຂຶ້ນ ລວມທັງວິທີການແກ້ໄຂບັນຫາໂດຍນຳໃຊ້ທຳມະຊາດເປັນພື້ນຖານ; • ສົ່ງເສີມການສ້າງ ແລະ ປັບປຸງລະບົບເຕືອນໄພລ່ວງໜ້າໃຫ້ທັນການຫຼາຍຂຶ້ນ
4	ຂົນສົ່ງ ແລະ ການຜັດທະນາຕົວເມືອງ	• ເພີ່ມຄວາມທົນທານໃຫ້ແກ່ການຜັດທະນາ ແລະ ພື້ນຖານໂຄງລ່າງ ຕົວເມືອງ ຕໍ່ການປ່ຽນແປງດິນຟ້າອາກາດໃຫ້ຫຼາຍຂຶ້ນ ລວມທັງ ການສ້າງພື້ນຖານໂຄງລ່າງສີຂຽວ ແລະ ວິທີການແກ້ໄຂບັນຫາໂດຍນຳໃຊ້ທຳມະຊາດເປັນພື້ນຖານ; • ສົ່ງເສີມວຽກງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການຄຸ້ມຄອງ ແລະ ນຳໃຊ້ທ່າແຮງຂອງລະບົບນິເວດ
5	ສາທາລະນະສຸກ	• ເພີ່ມຄວາມທົນທານໃຫ້ແກ່ພື້ນຖານໂຄງລ່າງ ດ້ານສາທາລະນະສຸກ ແລະ ລະບົບການສະໜອງນ້ຳສະອາດ ຕໍ່ການປ່ຽນແປງດິນຟ້າອາກາດໃຫ້ຫຼາຍຂຶ້ນ; • ປັບປຸງການບໍລິການດ້ານສາທາລະນະສຸກ ເພື່ອການປັບຕົວເຂົ້າກັບການປ່ຽນ ແປງດິນຟ້າອາກາດ ແລະ ການຮັບມືກັບຜົນກະທົບທີ່ເກີດຈາກການປ່ຽນແປງດິນຟ້າອາກາດ.
6	ພະລັງງານ	• ສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໃນຂະແໜງພະລັງງານນ້ຳ ໂດຍການປັບປຸງນິຕິກຳ ແລະ ຄູ່ມືແນະນຳ ວ່າດ້ວຍຄວາມປອດໄພຂອງເຂື່ອນໄຟຟ້າ; • ເສີມສ້າງຄວາມສາມາດດ້ານເຕັກນິກ ເພື່ອນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ໃໝ່ ເຂົ້າໃນການສ້າງຄວາມທົນທານ ແລະ ການຄຸ້ມຄອງທີ່ມີປະສິດທິພາບໃນຂະແໜງພະລັງງານ; • ສົ່ງເສີມການນຳໃຊ້ນ້ຳໃນເຂື່ອນແບບປະສົມປະສານ ແລະ ນຳໃຊ້ແບບຫຼາຍຈຸດປະສົງ ເພື່ອເສີມສ້າງຄວາມທົນທານໃຫ້ກັບຊຸມຊົນທີ່ຢູ່ໃກ້ຄຽງ ແລະ ສ້າງໃຫ້ມີຜົນປະໂຫຍດສູງສຸດແກ່ຂະແໜງການອື່ນ.

3.2 ການຈັດຕັ້ງປະຕິບັດໃນປະຈຸບັນ ແລະ ແຜນການໃນຕໍ່ໜ້າ

ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໄດ້ຖືກເຊື່ອມສານ ເຂົ້າໃນບັນດານະໂຍບາຍ ແຫ່ງຊາດເຊັ່ນ: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016 – 2020), ຍຸດທະສາດການເຕີບ ໂຕສີຂຽວແຫ່ງຊາດຮອດປີ 2030 ລວມທັງໄດ້ສັງລວມ ເຂົ້າໃນບັນດາຍຸດທະສາດ ຂອງຂະແໜງການຕ່າງໆ ເປັນຕົ້ນ: ຍຸດທະສາດຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໄລຍະ 10 ປີ ແຕ່ 2015-2025, ຮ່າງຍຸດທະ ສາດການພັດທະນາຕົວເມືອງຮອດປີ 2030, ຍຸດທະສາດການພັດທະນາກະສິກຳ ຮອດປີ 2025 ແລະ ວິໄສທັດຮອດ ປີ 2030, ຍຸດທະສາດດ້ານການປັບຕົວຂອງຂະແໜງການສາທາລະນະສຸກຕໍ່ການປ່ຽນແປງດິນຟ້າອາກາດ ປີ 2018-2025 ແລະ ແຜນການຈັດຕັ້ງປະຕິບັດ ປີ 2018-2020. ກົດໝາຍ ວ່າດ້ວຍ ການຄຸ້ມຄອງໄພພິບັດ ໄດ້ຖືກຮັບຮອງ ໃນປີ 2019 ເຊິ່ງໄດ້ເສີມສ້າງ ກອບນິຕິກຳ ໃນວຽກງານ ການປັບຕົວ ໃຫ້ມີຄວາມເຂັ້ມແຂງ, ພ້ອມກັບກຳນົດ ຄວາມສຳຄັນໃນການຫຼຸດຜ່ອນຄວາມສ່ຽງ ແລະ ສະແດງ ໃຫ້ເຫັນເຖິງການຫັນປ່ຽນວິທີການ ຂອງ ລັດຖະບານ ສປປ ລາວ ຈາກການເນັ້ນໃສ່ແຕ່ການແກ້ໄຂ ຜົນກະທົບຂອງໄພພິບັດ ມາເປັນ ການກຽມພ້ອມລ່ວງໜ້າ. ດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດປີ 2019 ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ, ຕິດຕາມກວດກາວຽກງານປ່ຽນແປງດິນຟ້າອາກາດ ເພື່ອສະກັດກັ້ນ, ປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບ ຂອງການປ່ຽນແປງດິນຟ້າອາກາດ ຕໍ່ກັບຊີວິດ, ຊັບສິນ, ສິ່ງແວດລ້ອມ, ຊີວະນາໆພັນ ແລະ ພື້ນຖານໂຄງລ່າງ.

ຍຸດທະສາດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ຂອງ ສປປ ລາວ (ສະບັບປີ 2010) ທີ່ກຳລັງດຳເນີນ ການປັບປຸງຄືນໃໝ່ ໃນປະຈຸບັນແມ່ນຈະສຸມໃສ່ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ລວມ ທັງໃຫ້ຄວາມສຳຄັນ ຕໍ່ບົດບາດຍິງ-ຊາຍ ແລະ ເສີມຂະຫຍາຍຄວາມພະຍາຍາມໃນການປັບຕົວ ຂອງຂະແໜງການ ທີ່ມີຄວາມບອບບາງໃຫ້ສູງຂຶ້ນ. ນອກຈາກນີ້, ແຜນງານການປັບຕົວເຂົ້າກັບການປ່ຽແປງດິນຟ້າອາກາດແຫ່ງຊາດ (NAP) ກຳລັງຢູ່ໃນໄລຍະກະກຽມ ແລະ ຄາດວ່າຈະໄດ້ເລີ່ມຈັດຕັ້ງປະຕິບັດໃນປີ 2021 ເຊິ່ງຄາດວ່າ ທັງໝົດເຫຼົ່ານີ້ ຈະເປັນຂໍ້ມູນ ແລະ ເສີມສ້າງປະສົບການເພີ່ມຂຶ້ນຈາກການຈັດຕັ້ງປະຕິບັດແຜນງານດັ່ງກ່າວ ແລະ ກຳນົດບຸລິມະສິດ ຂອງ ແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃຫ້ເໝາະສົມກັບສະພາບຕົວຈິງ ໃຫ້ໄດ້ດີກວ່າເກົ່າ. ພ້ອມນີ້ ກໍຈະມີການກຳນົດບາດກ້າວຕ່າງໆຂຶ້ນມາ ເພື່ອຊ່ວຍເຊື່ອມສານ ແຜນງານການປັບຕົວເຂົ້າກັບການປ່ຽນ ແປງດິນຟ້າອາກາດແຫ່ງຊາດ ເຂົ້າໃນຂະບວນການສ້າງແຜນໃນລະດັບທ້ອງຖິ່ນ.

ໃນໄລຍະປີ 2015 ຫາ 2020, ສາມາດຕີລາຄາຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານ ການປັບ ຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຂອງບັນດາຂະແໜງການທີ່ມີຄວາມບອບບາງ ໄດ້ດັ່ງນີ້:

ຂົງເຂດກະສິກຳ

ວຽກງານການຄົ້ນຄວ້າ ແລະ ການພັດທະນາແນວພັນພືດ (ລວມທັງ ເຂົ້າ ແລະ ພືດຜັກ) ທີ່ມີຄວາມທົນ ທານຕໍ່ໄພນ້ຳຖ້ວມ ຫຼື ແຫ້ງແລ້ງ ພ້ອມທັງໄດ້ນຳສະເໜີໃຫ້ຊາວກະສິກອນເອົາໄປທົດລອງນຳໃຊ້, ນຳໃຊ້ເຕັກນິກ ການຜະລິດກະສິກຳທີ່ທັນສະໄໝ ໂດຍພິຈາລະນາບັນຫາການປ່ຽນແປງດິນຟ້າອາກາດເຊັ່ນ: ການນຳໃຊ້ເຄື່ອງຢອດ ເຂົ້າ, ການປູກເຂົ້າໂດຍນຳໃຊ້ລະບົບກະເສດສຸມ, ການນຳໃຊ້ຝຸ່ນປົ່ມເພື່ອປັບປຸງດິນ ໂດຍສະເພາະການປູກຜັກ, ການນຳໃຊ້ເຮືອນຮົ່ມເຂົ້າໃນ ການປູກຜັກ, ການຄຸ້ມຄອງນ້ຳໂດຍເຕັກນິກການເກັບກັກນ້ຳ, ນຳໃຊ້ນ້ຳໃຕ້ດິນ ແລະ ວິທີການອື່ນໆ. ໃນຂະແໜງລ້ຽງສັດ ກໍມີການດຳເນີນການສັກຢາວັກແຊັງເປັນປະຈຳ ເພື່ອປ້ອງກັນສັດຈາກພະຍາດ ແລະ ມີການທົດລອງລ້ຽງປາໃສ່ໃນໜອງ ໂດຍນຳໃຊ້ແຜ່ນ ປລາສຕິກຮອງ, ເສີມສ້າງຄວາມເຂັ້ມແຂງລະບົບການ

ບໍລິການຂໍ້ມູນອຸຕຸກະເສດ ເພື່ອສະໜອງໃຫ້ຊາວກະສິກອນສາມາດເຂົ້າເຖິງ ແລະ ນຳໃຊ້ຂໍ້ມູນທີ່ມີຄວາມເຊື່ອຖືຫຼາຍຂຶ້ນ ເພື່ອການຕັດສິນໃຈສຳລັບການຜະລິດກະສິກຳ. ໃນປະຈຸບັນກະຊວງກະສິກຳ ແລະ ປ່າໄມ້ ກຳລັງຍົກລະດັບຕ່ອງໂສ້ມູນຄ່າດ້ານກະສິກຳໂດຍການເພີ່ມຄວາມທົນທານໃຫ້ແກ່ພື້ນຖານໂຄງລ່າງດ້ານກະສິກຳ, ຍົກສູງສະມັດຕະພາບຂອງການຜະລິດ, ສົ່ງເສີມຄວາມຫຼາກຫຼາຍດ້ານຜົນລະປູກ ແລະ ການຜະລິດເປັນສິນຄ້າ.

ຂົງເຂດປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ

ຄຳສັ່ງຂອງທ່ານນາຍົກ ເລກທີ 15/ນຍ ທີ່ກ່າວຢູ່ຂ້າງເທິງນັ້ນ ນອກຈາກເປັນມາດຕະການ ສຳຄັນ ໃນວຽກງານ ການຫຼຸດຜ່ອນທາດອາຍເຮືອນແກ້ວແລ້ວ ຍັງເປັນການປະກອບສ່ວນທີ່ສຳຄັນ ສຳລັບ ວຽກງານປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ. ແຜນແມ່ບົດການຈັດສັນທີ່ດິນແຫ່ງຊາດທີ່ຖືກຮັບຮອງໃນປີ 2018 ໄດ້ກຳນົດຂອບເຂດ, ປະເພດ ແລະເປົ້າ ໝາຍການນຳໃຊ້ເພື່ອຄຸ້ມຄອງ, ປົກປ້ອງ, ພັດທະນາ ແລະ ນຳໃຊ້ທີ່ດິນໃຫ້ມີຄວາມຍືນຍົງ ໂດຍສະເພາະໃນປະຈຸບັນກຳລັງດຳເນີນການຈັດສັນທີ່ດິນ. ໃນປະຈຸບັນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກຳລັງສືບຕໍ່ຜັນຂະຫຍາຍ ແຜນແມ່ບົດດັ່ງກ່າວລົງສູ່ລະດັບທ້ອງຖິ່ນ ໂດຍເສື່ອມສານວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ລວມທັງ ວຽກງານການປ່ຽນແປງດິນຟ້າອາກາດ. ການມີສ່ວນຮ່ວມໃນການຄຸ້ມຄອງປ່າໄມ້ແບບຍືນຍົງ ໂດຍສະເພາະຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານການມອບສິດ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງທີ່ດິນທີ່ຕິດພັນກັບຊັບພະຍາກອນປ່າໄມ້ ແລະ ການສ້າງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານໃຫ້ບາງບ້ານທີ່ຖືກຄັດເລືອກ. ການສົ່ງເສີມການປູກຕົ້ນໄມ້ໃຫຍ່ໄວເພື່ອປ້ອງກັນການເຊາະເຈື່ອນຢູ່ເຂດທີ່ມີຄວາມສ່ຽງ. ພ້ອມດຽວກັນນີ້ ຍຸດທະສາດປ່າໄມ້ ສະບັບທີ່ກຳລັງປັບປຸງໃໝ່ນີ້ຈະລະບຸແຈ້ງ ກ່ຽວກັບການເພີ່ມຄວາມທົນທານ ແລະ ການເຊື່ອມໂຍງຜົນປະໂຫຍດຮ່ວມກັນ ທີ່ຈະໄດ້ຮັບຈາກຄວາມພະຍາຍາມໃນວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ ແລະ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ.

ຂົງເຂດຊັບພະຍາກອນນ້ຳ

ກົດໝາຍ ວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ ໄດ້ຖືກຮັບຮອງ ໃນປີ 2017 ແລະ ປະຈຸບັນ ກຳກຳລັງ ສ້າງຍຸດທະສາດການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແຫ່ງຊາດ ຮອດ ປີ 2030, ດຳລັດ ວ່າດ້ວຍ ອ່າງຮັບ ແລະ ອ່າງເກັບນ້ຳ, ລະບຽບການວ່າດ້ວຍ ການຄຸ້ມຄອງທີ່ດິນບໍລິເວນນ້ຳ, ການຄຸ້ມຄອງນ້ຳໃຕ້ດິນ. ນອກຈາກນີ້ ຍັງມີບັນດານິຕິກຳລຸ່ມກົດໝາຍ ວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ ທີ່ກຳລັງກະກຽມ ເຊັ່ນ: ຄູ່ມືແນະນຳ ກ່ຽວກັບ ການອະນຸຍາດນຳໃຊ້ນ້ຳໜ້າດິນ, ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງຄຸນນະພາບນ້ຳ ແລະ ການປ່ອຍນ້ຳເປື້ອນ ແລະ ຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງເຂດສະຫງວນນ້ຳ ແລະ ຊັບພະຍາກອນນ້ຳ. ລະບຽບການ ວ່າດ້ວຍ ແຜນການຄຸ້ມຄອງນ້ຳໃຕ້ດິນ ໄດ້ຖືກຮອງຮັບ ແລະ ປະຈຸບັນ ກຳລັງກະກຽມສ້າງ ແຜນຄຸ້ມຄອງນ້ຳໃຕ້ດິນ ສຳລັບແຂວງສະຫວັນນະເຂດ. ພ້ອມດຽວກັນນີ້ ກໍໄດ້ມີການຮ່າງບົດປະເມີນ ແລະ ແບບຈຳລອງ ກ່ຽວກັບ ສະພາບລວມຂອງອ່າງຮັບນ້ຳ ແລະ ແຜນການຄຸ້ມຄອງອ່າງຮັບນ້ຳ, ການພັດທະນາລະບົບຂໍ້ມູນຂ່າວສານ ກ່ຽວກັບ ຊັບພະຍາກອນນ້ຳ ເພື່ອເກັບກຳຂໍ້ມູນຈາກທຸກແຫຼ່ງທີ່ຕິດພັນກັບຊັບພະຍາກອນນ້ຳ. ພ້ອມດຽວກັນນີ້ ກໍໄດ້ມີການປະເມີນຄວາມສ່ຽງ ແລະ ຄວາມບອບບາງຂອງທີ່ດິນບໍລິເວນນ້ຳທີ່ສຳຄັນ 2 ແຫ່ງຄື: ບຶງກຽດໂງ້ງ ແລະ ເຊຈຳພອນ ພ້ອມທັງສົ່ງເສີມການສ້າງຄວາມທົນທານໃຫ້ແກ່ຊຸມຊົນທີ່ຢູ່ໃນ ແລະ ອ້ອມຮອບທີ່ດິນບໍລິເວນນ້ຳ

ດັ່ງກ່າວ. ນ້ຳໃຕ້ດິນຖືເປັນອີກໜຶ່ງ ຂົງເຂດບຸລິມະສິດ ເພື່ອການເສີມສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໃນຂະແໜງການຊັບພະຍາກອນນ້ຳ.

ກົດໝາຍ ວ່າດ້ວຍ ອຸຕຸນິຍົມ ແລະ ອຸທົກກະສາດ ທີ່ໄດ້ຖືກຮັບຮອງໃນປີ 2017 ແນ່ໃສ່ ປ້ອງກັນ ແລະ ຫຼຸດຜ່ອນຜົນກະທົບຂອງໄພພິບັດທາງທຳມະຊາດ ຕໍ່ກັບຊີວິດ ແລະ ຊັບສິນ, ຮັບປະກັນ ການສະໜອງຂໍ້ມູນທີ່ຖືກຕ້ອງ ແລະ ທັນເວລາ. ໄດ້ມີການປັບປຸງ ແລະ ຂະຫຍາຍຕາໜ່າງສະຖານີອຸຕຸນິຍົມ ແລະ ສະຖານີອຸທົກກະສາດ ແລະສ້າງຄວາມສາມາດໃນການພະຍາກອນໃຫ້ດີຂຶ້ນ.

ອີງຕາມ ສັນຍາແມ່ນ້ຳຂອງ ປີ 1995, ສປປ ລາວ ຍັງໄດ້ປະຕິບັດງານຮ່ວມກັບ ບັນດາປະເທດພາຄີໃນພາກພື້ນແມ່ນ້ຳຂອງ ເພື່ອຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນດຳເນີນງານ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນອ່າງແມ່ນ້ຳຂອງ ແລະ ຍຸດທະສາດການພັດທະນາອ່າງແມ່ນ້ຳຂອງ ແຕ່ປີ 2021 ຫາ 2030 ເຊິ່ງໄດ້ກຳນົດບຸລິມະສິດ ໃນການສ້າງຄວາມທົນທານ ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ ການປ່ຽນແປງດິນຟ້າອາກາດ, ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງຮຸນແຮງ. ຍຸດທະສາດ ດັ່ງກ່າວ ໄດ້ລວມເອົາວຽກງານການຮ່ວມມືກັບ ບັນດາປະເທດໃນອ່າງແມ່ນ້ຳຂອງ ເພື່ອຫຼຸດຜ່ອນ ແລະ ຄຸ້ມຄອງໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ແນ່ໃສ່ເພື່ອ ການສ້າງຜົນປະໂຫຍດຮ່ວມກັນ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາຊີວິດການເປັນຢູ່ ທີ່ເອົາໃຈໃສ່ບົດບາດຍິງ-ຊາຍ ໃນພື້ນທີ່ເຂດຂ້າມຜ່ານຊາຍແດນ, ພ້ອມທັງເສີມຂະຫຍາຍການພັດທະນາ ເສດຖະກິດແບບຍືນຍົງ ໃນບັນດາຂະແໜງການທີ່ກ່ຽວຂ້ອງກັບຊັບພະຍາກອນນ້ຳ.

ຂົງເຂດການຂົນສົ່ງ ແລະການພັດທະນາຕົວເມືອງ

ຄູ່ມືແນະນຳ ກ່ຽວກັບ ຕົວເມືອງທີ່ມີຄວາມຍືນຍົງ ທາງດ້ານສິ່ງແວດລ້ອມຂອງ ສປປ ລາວ ໄດ້ຖືກສ້າງຂຶ້ນ ເພື່ອເປັນບ່ອນອີງ ແລະ ວິທີການ ໃຫ້ກັບ ອົງການຄຸ້ມຄອງ ແລະ ບໍລິຫານຕົວເມືອງ ໃນການວິເຄາະບັນຫາທີ່ຕິດພັນ ແລະ ສິ່ງເສີມການຄຸ້ມຄອງດ້ານສິ່ງແວດລ້ອມໃນຕົວເມືອງ ເພື່ອຊຸກຍູ້ສິ່ງເສີມ ຕົວເມືອງຢູ່ ສປປ ລາວ ໃຫ້ກາຍເປັນ ຕົວເມືອງສະອາດ, ສີຂຽວ ແລະ ງາມຕາ. ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຮັບຮອງນະໂຍບາຍ ກ່ຽວກັບ ການເຊື່ອມສານຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດເຂົ້າໃນຂະແໜງການຂອງຕົນ. ຮ່າງແຜນຍຸດທະສາດ ການພັດທະນາຕົວເມືອງຮອດປີ 2030 ໄດ້ລະບຸກ່ຽວກັບ ການເສີມສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ. ໃນປະຈຸບັນ ໄດ້ມີການລົງທຶນເຂົ້າໃນຫຼາຍໂຄງການຂອງຂະແໜງການ, ລວມທັງການປັບປຸງຫົນທາງໃຫ້ມີຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ ໃນຕາໜ່າງທາງຫຼວງແຫ່ງຊາດ ແລະ ຫົນທາງໃນທ້ອງຖິ່ນ, ການປ້ອງກັນຕາຝັ່ງເຈື່ອນ ແລະ ການປັບປຸງຮ່ອງລະບາຍນ້ຳໃນບັນດາຕົວເມືອງ ເພື່ອປ້ອງກັນນ້ຳຖ້ວມລົ້ນຕາຝັ່ງ ແລະ ນ້ຳຖ້ວມຂັງ. ພ້ອມດຽວກັນນີ້ ໄດ້ມີການເອົາໃຈໃສ່ຫຼາຍຂຶ້ນໃນການເສີມສ້າງຄວາມທົນທານຂອງຕົວເມືອງໂດຍອີງໃສ່ລະບົບນິເວດ ໂດຍສະເພາະແມ່ນ ທີ່ຕິດພັນກັບ ການຄຸ້ມຄອງນ້ຳ ໃນເຂດຕົວເມືອງ. ນອກຈາກນີ້ ກໍຍັງໄດ້ໃຫ້ຄວາມສຳຄັນຕໍ່ການສ້າງຄວາມທົນທານ ໃນວຽກງານການກໍ່ສ້າງ ແລະບຳລຸງຮັກສາໂຄງລ່າງພື້ນຖານທີ່ສຳຄັນຕ່າງໆ ເຊັ່ນ: ເສັ້ນທາງ, ຂົວ, ຕຶກອາຄານ. ປະຈຸບັນ ກຳລັງພັດທະນາລະບົບການຄຸ້ມຄອງຫົນທາງ ໃຫ້ມີຄວາມທົນທານ ເຊິ່ງລວມມີຂໍ້ມູນດ້ານຄວາມບອບບາງ ເຊັ່ນ: ດິນເຈື່ອນ ແລະ ນ້ຳຖ້ວມ ເຊິ່ງລະບົບດັ່ງກ່າວຈະຖືກນຳໃຊ້ ເຂົ້າໃນແຜນງານ ການບຳລຸງຮັກສາ, ການຈັດລຽງບຸລິມະສິດ ແລະ ການວາງງົບປະມານ.

ຂົງເຂດສາທາລະນະສຸກ

ຜົນສຳເລັດສຳຄັນໃນຂົງເຂດນີ້ແມ່ນການສ້າງ ແລະ ຮັບຮອງເອົາຍຸດທະສາດດ້ານການປັບຕົວຂອງຂະແໜງການສາທາລະນະສຸກ ຕໍ່ການປ່ຽນແປງດິນຟ້າອາກາດ ປີ 2018-2025 ແລະ ແຜນການຈັດຕັ້ງປະຕິບັດປີ 2018-2020 ໂດຍໄດ້ກຳນົດແນວທາງຍຸດທະສາດ ດ້ານການສ້າງຄວາມທົນທານຕໍ່ການປ່ຽນແປງດິນຟ້າອາກາດ. ຍຸດທະສາດດັ່ງກ່າວ ປະກອບດ້ວຍ 10 ອົງປະກອບຍ່ອຍ ໄດ້ແກ່ ຄວາມເປັນຜູ້ນຳ ແລະ ການບໍລິຫານ, ການເສີມສ້າງຄວາມສາມາດສຳລັບພະນັກງານ ແລະ ອົງການຈັດຕັ້ງ, ການປະເມີນ ຄວາມບອບບາງ, ການເຊື່ອມສານລະບົບການຕິດຕາມຄວາມສ່ຽງ ແລະ ລະບົບແຈ້ງເຕືອນລ່ວງໜ້າ, ການສຶກສາຄົ້ນຄວ້າ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ແລະ ສາທາລະນະສຸກ, ຄວາມຍືນຍົງຂອງເຕັກໂນໂລຊີ ແລະ ພື້ນຖານໂຄງລ່າງ, ການຄຸ້ມຄອງປັດໄຈທາງສິ່ງແວດລ້ອມ ຕໍ່ສຸຂະພາບ, ແຜນງານສາທາລະນະສຸກທີ່ອີງໃສ່ ຂໍ້ມູນການປ່ຽນແປງດິນຟ້າອາກາດ, ການກະກຽມໃນສະຖານະການສຸກເສີນ, ການສະໜອງເງິນທຶນດ້ານການປ່ຽນແປງດິນຟ້າອາກາດ ແລະ ສາທາລະນະສຸກ. ລາຍລະອຽດກ່ຽວກັບຕົວຊີ້ວັດໄດ້ລະບຸໃນ ເອກະສານຊ້ອນທ້າຍທີ 2.

ເຖິງແມ່ນວ່າ ການຈັດຕັ້ງຜັນຂະຫຍາຍ ແຜນການຈັດຕັ້ງປະຕິບັດດັ່ງກ່າວ ຍັງຊັກຊ້າກໍຕາມ, ແຕ່ກໍຍັງມີການຈັດຕັ້ງປະຕິບັດວຽກງານອື່ນ ເຊັ່ນ: ການສ້າງຄູຝຶກໃນຫົວຂໍ້ການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ສຸຂະພາບ ເພື່ອຝຶກອົບຮົມໃຫ້ແກ່ຂະແໜງການສາທາລະນະສຸກ ໃນ 7 ແຂວງ ແນໃສ່ເພື່ອຊ່ວຍຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ໃຫ້ບັນດາແຂວງເຫຼົ່ານັ້ນ. ພ້ອມນີ້, ກໍຍັງມີການສ້າງເຄື່ອງມືສື່ສານເພື່ອເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຕໍ່ສຸຂະພາບໃຫ້ແກ່ມວນຊົນໄດ້ຮັບຮູ້ ແລະ ເຂົ້າໃຈຂຶ້ນຕື່ມ. ນອກຈາກນີ້, "ໂຄງການເສີມຂະຫຍາຍການສະໜອງນ້ຳປະປາ, ສຸຂາພິບານ ແລະ ສຸຂະອະນາໄມ" ຈະຍັງປະກອບສ່ວນ ໃຫ້ແກ່ວຽກງານການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ ໃນຂະແໜງສາທາລະນະສຸກໂດຍການເຂົ້າເຖິງແຫຼ່ງນ້ຳສະອາດ ແລະ ການບໍລິການດ້ານສຸຂາພິບານ ໃນເຂດຊົນນະບົດທີ່ເພີ່ມຂຶ້ນ ພ້ອມທັງເອົາໃຈໃສ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ. ລາຍລະອຽດ ກ່ຽວກັບ ຕົວຊີ້ວັດ ແລະ ຄາດໝາຍສູ້ຊົນ ທີ່ກ່ຽວຂ້ອງໄດ້ລະບຸໄວ້ໃນ ເອກະສານຊ້ອນທ້າຍທີ 2.

ຂົງເຂດພະລັງງານ

ຂະແໜງພະລັງງານ ເປັນຂະແໜງການໜຶ່ງ ທີ່ມີຄວາມພະຍາຍາມສູງ ໃນການຫຼຸດຜ່ອນ ທາດອາຍເຮືອນແກ້ວ ໂດຍສົ່ງເສີມ ການນຳໃຊ້ ພະລັງງານທົດແທນ ແລະ ການນຳໃຊ້ພະລັງງານ ທີ່ມີປະສິດທິພາບ, ແຕ່ການຜະລິດໄຟຟ້າຂອງປະເທດ ສ່ວນໃຫຍ່ແມ່ນມາຈາກແຫຼ່ງໄຟຟ້າພະລັງງານນ້ຳ ຊຶ່ງມີຄວາມບອບບາງສູງຕໍ່ສະພາບອາກາດທີ່ຮຸນແຮງ. ໃນຊ່ວງໄລຍະປີ 2018 ຫາ 2020, ໄດ້ມີການປະເມີນຄວາມບອບບາງ ແລະ ສ້າງແຜນດຳເນີນງານດ້ານຄວາມທົນທານຂອງຂະແໜງພະລັງງານ ຕໍ່ກັບໄພອັນຕະລາຍທີ່ເກີດຈາກການປ່ຽນແປງດິນຟ້າອາກາດ ແລະ ສາເຫດອື່ນໆ ໄດ້ຊີ້ໃຫ້ເຫັນຢ່າງຮອບດ້ານບັນດາໄພອັນຕະລາຍ ແລະ ຄວາມສ່ຽງທີ່ສຳຄັນ ພ້ອມທັງກຳນົດແຜນດຳເນີນງານ ເພື່ອແກ້ໄຂຄວາມສ່ຽງດັ່ງກ່າວ. ໃນກໍລະນີທີ່ມີສັນເຂື່ອນພັງ ຢູ່ແຂວງອັດຕະປື ໃນປີ 2018 ເນື່ອງຈາກພາຍຸ ແລະ ຝົນຕົກໜັກ ໄດ້ພາໃຫ້ເກີດມີການສູນເສຍ ແລະ ຄວາມເສຍຫາຍຢ່າງຫຼວງຫຼາຍ. ສະນັ້ນ, ການປັບປຸງພື້ນຖານໂຄງລ່າງ ຂອງເຂື່ອນໄຟຟ້າໃຫ້ມີຄວາມທົນທານ ຈຶ່ງເປັນວຽກງານບຸລິມະສິດ ທີ່ສຳຄັນ. ໃນປີ 2018 ໄດ້ມີການສ້າງ ຄູ່ມືແນະນຳ ກ່ຽວກັບ ຄວາມປອດໄພຂອງເຂື່ອນ, ແຜນດຳເນີນງານ ກ່ຽວກັບສະຖານະການສຸກເສີນ ເພື່ອໃຫ້ຄຳແນະນຳແກ່ບັນດາບໍລິສັດ ເຂື່ອນໄຟຟ້າພະລັງງານນ້ຳ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນສະຖານະ

ການສຸກເສີນ. ນອກຈາກນີ້, ກໍຈະໄດ້ມີການຄຸ້ມຄອງອ່າງ ເກັບນ້ຳຢ່າງມີປະສິດທິຜົນ ແລະ ນຳໃຊ້ໃນຫຼາຍຈຸດປະສົງ ເພື່ອເສີມສ້າງຄວາມທົນທານໃຫ້ແກ່ ຊຸມຊົນອ້ອມຂ້າງ ແລະ ສ້າງຜົນປະໂຫຍດໃຫ້ກັບ ຂະແໜງ ການອື່ນ ໂດຍ ການປັບປຸງມາດຕະການແກ້ໄຂບັນຫາ ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ, ຍົກສູງສະມັດຕະພາບການຜະລິດ ແລະ ການນຳໃຊ້ອ່າງເກັບນ້ຳ ເພື່ອຈຸດປະສົງດ້ານການທ່ອງທ່ຽວ ແລະ ການນຳໃຊ້ໃນຄົວເຮືອນ.

ຂົງເຂດການສຶກສາ ແລະ ສ້າງຈິດສຳນຶກ

ການສຶກສາ ແລະ ການສ້າງຈິດສຳນຶກ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ເປັນວຽກງານໜຶ່ງທີ່ສຳຄັນ ເຊິ່ງໄດ້ມີການດຳເນີນກິດຈະກຳຕ່າງໆ ໃນທົ່ວປະເທດ ເພື່ອເສີມສ້າງຄວາມເຂົ້າໃຈຂອງປະຊາຊົນ ຕໍ່ກັບ ການ ປ່ຽນແປງດິນຟ້າອາກາດ. ໃນປີ 2018 ໄດ້ມີການຮັບຮອງເອົາ ຍຸດທະສາດແຫ່ງຊາດດ້ານການສຶກສາ ແລະ ສ້າງຈິດ ສຳນຶກດ້ານສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ (2018 – 2025) ແລະ ວິໄສທັດ ຮອດປີ 2030 ເພື່ອ "ຮັບປະກັນໃຫ້ພົນລະເມືອງລາວມີຄວາມຮູ້, ມີຈິດສຳນຶກຮັກ, ຫວງແຫນ ແລະ ເປັນເຈົ້າການເຂົ້າຮ່ວມ ໃນການຄຸ້ມ ຄອງຊັບພະຍາກອນທຳມະຊາດ, ປົກປັກຮັກສາສິ່ງແວດລ້ອມ ແລະ ສາມາດປັບຕົວເຂົ້າກັບສະພາບການປ່ຽນແປງ ດິນຟ້າອາກາດ, ຮັບປະກັນການພັດທະນາເສດຖະກິດ-ສັງຄົມ ໄປຕາມທິດ ສີຂຽວ ແລະ ຍືນຍົງ". ມະຫາວິທະຍາໄລ ແຫ່ງຊາດລາວ ໄດ້ມີການສິດສອນ ວິຊາການປ່ຽນແປງດິນຟ້າອາກາດ ຢູ່ຄະນະວິທະຍາສາດສິ່ງແວດລ້ອມ ແລະ ວິຊາອື່ນໆ ທີ່ກ່ຽວຂ້ອງກັບ ການປ່ຽນແປງດິນຟ້າອາກາດຢູ່ຄະນະວິຊາອື່ນໆ. ການສ້າງຈິດສຳນຶກ ກ່ຽວກັບ ສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ ລວມທັງ ເສດຖະກິດແບບຮອບວຽນ ຖືເປັນອົງປະກອບທີ່ສຳຄັນ ຂອງບັນດາໂຄງການທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ເພື່ອເສີມສ້າງຄວາມເຂົ້າໃຈ ຂອງພາກສ່ວນທີ່ ກ່ຽວຂ້ອງໃນລະດັບຕ່າງໆ ກ່ຽວກັບ ການປ່ອຍທາດອາຍເຮືອນແກ້ວ ທີ່ເປັນສາຍເຫດຕົ້ນຕໍ ຂອງການປ່ຽນແປງດິນ ຟ້າອາກາດ ແລະ ຜົນກະທົບທີ່ຕາມມາ.

3.3 ບັນຫາ, ຂໍ້ຫຍຸ້ງຍາກ ແລະ ຄວາມຕ້ອງການ

ສປປ ລາວ ຍັງມີບັນຫາ ແລະ ຂໍ້ຫຍຸ້ງຍາກຫຼາຍອັນ ສຳລັບການດຳເນີນວຽກງານ ການປັບຕົວເຂົ້າກັບການ ປ່ຽນແປງດິນຟ້າອາກາດ ກໍ່ຄືການດຳເນີນວຽກງານ ການຫຼຸດຜ່ອນທາດອາຍເຮືອນແກ້ວ ທີ່ຈະຕ້ອງໄດ້ແກ້ໄຂເພື່ອ ໃຫ້ບັນລຸວິໄສທັດ ແລະ ເປົ້າໝາຍການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ທີ່ໄດ້ກຳນົດໄວ້ໃນຍຸດທະສາດ ແຫ່ງຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ໃນລະດັບຂະແໜງການ ຄືດັ່ງລຸ່ມນີ້:

- ຂໍ້ມູນຂ່າວສານ ແລະ ຄວາມຮູ້ ກ່ຽວກັບ ຜົນກະທົບຂອງການປ່ຽນແປງດິນຟ້າອາກາດຕໍ່ຂະແໜງການທີ່ມີ ຄວາມບອບບາງຍັງຈຳກັດ, ໃນນີ້ ບັນດາຂະແໜງການທີ່ກ່ຽວຂ້ອງ ຍັງຂາດແບບຈຳລອງສະພາບພູມອາ ກາດທີ່ມີຄວາມລະອຽດສູງ, ຄວາມຮູ້ ແລະ ຄວາມສາມາດດ້ານວິຊາການ ກໍຍັງມີຈຳກັດ;
- ຄວາມສາມາດຂອງອົງກອນ ໃນການເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າໃນແຜນການ ພັດທະນາ ຫຼື ນຳໄປຈັດຕັ້ງປະຕິບັດຕົວຈິງໃນລະດັບທ້ອງຖິ່ນຍັງຈຳກັດ;
- ຂະແໜງການຕົ້ນຕໍສ່ວນໃຫຍ່ຍັງບໍ່ທັນມີຍຸດທະສາດ, ແຜນດຳເນີນງານ ແລະ ຕົວຊີ້ວັດ ກ່ຽວກັບການປັບ ຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ;
- ການປະສານງານ ລະຫວ່າງ ຂະແໜງການຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ;

- ແຫຼ່ງທຶນສຳລັບວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນໄລຍະຍາວຍັງບໍ່ທັນມີຫຼາຍ ຫຼາຍ, ການດຶງດູດ ພາກສ່ວນທຸລະກິດ ແລະ ເອກະຊົນ ເພື່ອລົງທຶນເຂົ້າໃນຂົງເຂດວຽກງານນີ້ຍັງເປັນ ບັນຫາທ້າທາຍ. ສະນັ້ນ, ການສະໜອງທຶນຂອງພາກລັດລວມທັງຮູບການຊ່ວຍເຫຼືອການພັດທະນາທາງ ການ (ODA) ແລະ ການຊ່ວຍເຫຼືອດ້ານການພັດທະນາອື່ນໆຍັງຖືວ່າເປັນແຫຼ່ງທຶນຕົ້ນຕໍ;
- ຄວາມສາມາດດ້ານເຕັກນິກວິຊາການ ແລະ ຊັບພະຍາກອນມະນຸດໃນການເກັບກຳຂໍ້ມູນ, ການພະຍາ ກອນ ແລະ ການແຈ້ງເຕືອນລ່ວງໜ້າຍັງຈຳກັດ;
- ລະບົບການຕິດຕາມກວດກາ ແລະ ການປະເມີນຜົນ ລວມທັງລະບົບການຕິດຕາມການເງິນດ້ານການ ປ່ຽນແປງດິນຟ້າອາກາດຍັງຈຳກັດ;
- ການເຂົ້າເຖິງເຕັກໂນໂລຊີທີ່ເໝາະສົມ ໃນການສົ່ງເສີມວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າ ອາກາດຍັງຈຳກັດ.

ເພື່ອແກ້ໄຂບັນຫາ ແລະ ຂໍ້ຫຍຸ້ງຍາກ ຂອງວຽກງານການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ ຂອງປະເທດ, ສປປ ລາວ ມີຄວາມຕ້ອງການດັ່ງລຸ່ມນີ້:

- ການສະໜັບສະໜູນດ້ານວິຊາການ ເພື່ອສ້າງແບບຈຳລອງສະພາບອາກາດ ທີ່ມີຄວາມລະອຽດສູງ ໂດຍນຳ ໃຊ້ ຂໍ້ມູນຜົນກະທົບ ແລະ ການປະເມີນຄວາມບອບບາງຂອງ ສະພາບພູມອາກາດໂລກ ແລະ ພາກພື້ນ ໃຫ້ ເປັນລະດັບຊາດ ແລະ ທ້ອງຖິ່ນ ເພື່ອສະໜັບສະໜູນການວາງແຜນ ລວມທັງ ການກຳນົດມາດຕະການປັບ ຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ ຂອງຂະແໜງການ ໃນລະດັບສູນກາງ ແລະ ທ້ອງຖິ່ນ;
- ລົງທຶນໃສ່ການສ້າງລະບົບ ແລະ ເຄື່ອງມື ໃນການຕິດຕາມ, ການພະຍາກອນ, ການວິເຄາະ, ການແຈ້ງ ເຕືອນລ່ວງໜ້າ ແລະ ການກຽມຄວາມພ້ອມຮັບມືກັບໄພທຳມະຊາດ ພ້ອມກັບເຊື່ອມສານ ເຂົ້າໃນລະບົບ ແລະ ຮູບແບບການສະໜັບສະໜູນໃນລະດັບພາກພື້ນ;
- ປັບປຸງກົນໄກການຄຸ້ມຄອງ ແລະ ການປະສານງານລະຫວ່າງຂະແໜງການ ໂດຍນຳໃຊ້ປະສົບການ ແລະ ບົດຮຽນທີ່ຖອດຖອນໄດ້ຈາກສາກົນ;
- ລົງທຶນໃສ່ການສຶກສາ ແລະ ການພັດທະນາທັກສະດ້ານວິຊາການ ເພື່ອສະໜັບສະໜູນການວາງແຜນ ແລະ ການຄຸ້ມຄອງ ມາດຕະການການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃຫ້ເປັນສ່ວນໜຶ່ງ ຂອງ ຈຸດປະສົງ ແລະ ແຜນງານຂອງຂະແໜງການ;
- ສະໜອງເງິນທຶນ ເພື່ອເຂົ້າເຖິງ ແລະ ຮຽນຮູ້ ກ່ຽວກັບເຕັກໂນໂລຊີ ຂອງພາກພື້ນ ແລະ ສາກົນ.

ແຜນງານແຫ່ງຊາດ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເຊິ່ງຄາດວ່າຈະລິເລີ່ມສ້າງ ໃນປີ 2021 ຈະຊ່ວຍຍົກລະດັບຄວາມສາມາດດ້ານວິຊາການ ແລະ ການຈັດຕັ້ງ ໃນລະດັບສູນກາງ ແລະທ້ອງຖິ່ນ ເພື່ອເຊື່ອມສານວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດເຂົ້າໃນແຜນພັດທະນາຕ່າງໆ, ປັບປຸງລະ ບົບຂໍ້ມູນຂ່າວສານເພື່ອຮັບໃຊ້ການຈັດບຸລິມະສິດຄວາມຕ້ອງການ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນ ຟ້າອາກາດ, ສ້າງກົນໄກເພື່ອວັດແທກປະສິດທິຜົນຂອງການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດ, ຍຸດທະສາດ ແລະ ແຜນການຕ່າງໆ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໃນລະດັບສູງກາງ ແລະ ທ້ອງຖິ່ນ. ແຫຼ່ງ ທຶນທີ່ສາມາດເຫັນໄດ້ໃນປະຈຸບັນ ແມ່ນມາຈາກກອງທຶນສິ່ງແວດລ້ອມໂລກສຳລັບບັນດາປະເທດດ້ອຍພັດທະ ນາ (GEF LDCF) ໃນການສ້າງແຜນງານແຫ່ງຊາດ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເຊິ່ງ ຈະສະໜັບສະໜູນວຽກງານການປະເມີນຄວາມບອບບາງ ແລະ ສ້າງແຜນປັບຕົວເຂົ້າກັບການປ່ຽນແປງດິນຟ້າອາ ກາດໃນລະດັບແຂວງ ແລະ ລະດັບເມືອງ.

ນອກຈາກ ຂະແໜງສາທາລະນະສຸກ ທີ່ມີຄາດໝາຍກຳນົດໄວ້ໃນຍຸດທະສາດ ດ້ານການປັບຕົວຂອງ ຂະແໜງການສາທາລະນະສຸກ ຕໍ່ການປ່ຽນແປງດິນຟ້າອາກາດ ຮອດປີ 2025, ຂະແໜງການອື່ນໆ ທີ່ມີຄວາມບອບບາງ ຍັງບໍ່ທັນມີຍຸດທະສາດສະເພາະ ກ່ຽວກັບ ການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດ ແລະ ແຜນດຳເນີນງານ ຂອງຕົນເທື່ອ ລວມທັງຍັງບໍ່ທັນມີການສ້າງກອບການຕີລາຄາຜົນສຳເລັດຕາມເປົ້າໝາຍ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເພື່ອຮັບໃຊ້ການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ການປະເມີນຜົນ ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ ໃນໄລຍະຍາວ. ສະນັ້ນ, ແຜນງານແຫ່ງຊາດ ສະບັບປີ 2020 ນີ້ ໄດ້ກຳນົດຄາດ ໝາຍສູ້ຊົນ ໃນການປັບຕົວໃນໄລຍະສັ້ນ ຮອດປີ 2025 ເຊິ່ງຈະເປັນເຄື່ອງມືອັນສຳຄັນໃນການແນະນຳ ແລະ ນຳໃຊ້ເຂົ້າໃນການຕິດຕາມກວດກາ ວຽກງານການປັບຕົວເຂົ້າກັບ ການປ່ຽນແປງດິນຟ້າອາກາດໃນລະດັບຊາດ ແລະ ຂະແໜງການໃນແຜນໄລຍະຍາວ, ດັ່ງລາຍລະອຽດລຸ່ມນີ້:

ຕາຕະລາງ 7: ຄາດໝາຍສູ້ຊົນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ແຜນການໃນຕໍ່ໜ້າຮອດປີ 2025

ລ.ດ	ຂົງເຂດ	ຄາດໝາຍສູ້ຊົນຮອດປີ 2025
1	ກະສິກຳ	ເຊື່ອມສານມາດຕະການການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານຂອງຂະແໜງການ ລວມທັງກອບການຕີລາຄາຜົນສຳເລັດຕາມເປົ້າໝາຍທີ່ໄດ້ວາງໄວ້
2	ປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ	ເຊື່ອມສານມາດຕະການການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານຂອງຂະແໜງການ ລວມທັງກອບການຕີລາຄາຜົນສຳເລັດຕາມເປົ້າໝາຍທີ່ໄດ້ວາງໄວ້
3	ຊັບພະຍາກອນນ້ຳ	ເຊື່ອມສານມາດຕະການການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານຂອງຂະແໜງການ ລວມທັງກອບການຕີລາຄາຜົນສຳເລັດຕາມເປົ້າໝາຍທີ່ໄດ້ວາງໄວ້
4	ຂົນສົ່ງ ແລະ ການພັດທະນາຕົວເມືອງ	ເຊື່ອມສານມາດຕະການການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານຂອງຂະແໜງການ ລວມທັງກອບການຕີລາຄາຜົນສຳເລັດຕາມເປົ້າໝາຍທີ່ໄດ້ວາງໄວ້
5	ສາທາລະນະສຸກ	ຈັດຕັ້ງປະຕິບັດຍຸດທະສາດດ້ານການປັບຕົວ ຂອງຂະແໜງການສາທາລະນະສຸກ ຕໍ່ການປ່ຽນແປງດິນຟ້າອາກາດ ຮອດປີ 2025
		ຈັດຕັ້ງປະຕິບັດ “ໂຄງການເສີມຂະຫຍາຍການສະໜອງນ້ຳປະປາ, ສຸຂາພິບານ ແລະ ສຸຂະອະນາໄມ”. ລາຍລະອຽດກ່ຽວກັບ ຄາດໝາຍ ໄດ້ລະບຸໃນ ເອກະສານຊ້ອນທ້າຍທີ 2
6	ພະລັງງານ	ເຊື່ອມສານມາດຕະການການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານຂອງຂະແໜງການ ລວມທັງກອບການຕີລາຄາຜົນສຳເລັດຕາມເປົ້າໝາຍທີ່ໄດ້ວາງໄວ້

ຈຸດປະສົງໂດຍລວມ ຂອງຂະແໜງສາທາລະນະສຸກ ແມ່ນ “ສົ່ງເສີມຄວາມສາມາດ ຂອງຂະແໜງສາທາລະນະສຸກ ແລະ ຊຸມຊົນ ເພື່ອປ້ອງກັນ ແລະ ຮັກສາສຸຂະພາບຂອງປະຊາຊົນ ຈາກສະພາບການປ່ຽນແປງດິນຟ້າອາກາດທີ່ບໍ່ຄົງທີ່”. ລາຍລະອຽດຂອງແຕ່ລະອົງປະກອບ, ກິດຈະກຳຫຼັກ, ໄລຍະເວລາໃນການຈັດຕັ້ງປະຕິບັດ, ໜ້າ

ທີ່ຄວາມຮັບຜິດຊອບ, ຄວາມຕ້ອງການດ້ານງົບປະມານ ແມ່ນຢູ່ໃນ ເອກະສານຊ້ອນທ້າຍທີ 1 ແລະ ກົນໄກ ການຈັດຕັ້ງປະຕິບັດ ແມ່ນສອດຄ່ອງກັບ ພາກທີ 5 ຂອງຍຸດທະສາດດັ່ງກ່າວ.

ສ່ວນວ່າ ແຜນງານການປັບຕົວເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ ຂອງຂະແໜງການອື່ນໆ ຈະ ຖືກເຊື່ອມສານເຂົ້າໃນ ຍຸດທະສາດ ແລະ ແຜນດຳເນີນງານ ຂອງແຕ່ລະຂະແໜງການ ເພື່ອກຳນົດແນວທາງ ແລະ ຂົງເຂດບຸລິມະສິດ ໂດຍອີງໃສ່ຄວາມຈຳເປັນຕົວຈິງ ໃນການສ້າງຄວາມທົນທານ ຢູ່ໃນຂະແໜງການຂອງຕົນ. ນອກຈາກນັ້ນ, ຍັງຈະໄດ້ສ້າງກອບການຕີລາຄາຜົນສຳເລັດຕາມເປົ້າໝາຍທີ່ໄດ້ວາງໄວ້ ເຊິ່ງຈະລວມມີ ບັນດາຕົວຊີ້ ວັດ ເພື່ອໃຊ້ເຂົ້າໃນ ການຕິດຕາມກວດກາ, ຄວາມຕ້ອງການດ້ານການເງິນ ແລະ ແຫຼ່ງທຶນ ເພື່ອຮັບໃຊ້ການຈັດຕັ້ງ ປະຕິບັດບັນດາມາດຕະການທີ່ເປັນບຸລິມະສິດ. ວິທີການແກ້ໄຂບັນຫາໂດຍນຳໃຊ້ທຳມະຊາດເປັນພື້ນຖານ ຖືເປັນ ບຸລິມະສິດ ຍ້ອນວ່າ ວິທີການດັ່ງກ່າວ ແມ່ນເປັນຕົວເລືອກທີ່ມີຕົ້ນທຶນຕ່ຳ ແລະ ມີປະສິດທິພາບ ໃນການຮັບມືກັບ ໄພພິບັດ ທີ່ເກີດຈາກສະພາບການປ່ຽນແປງດິນຟ້າອາກາດ ເຊັ່ນ: ໄພນ້ຳຖ້ວມ, ດິນເຈື່ອນ ແລະ ໄພແຫ້ງແລ້ງ. ຍິ່ງ ໄປກວ່ານັ້ນ, ຍຸດທະສາດ ແລະ ແຜນດຳເນີນງານ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຂອງຂະແໜ ງການ ຍັງຈະເປັນທ່າແຮງທີ່ສ້າງຜົນປະໂຫຍດຮ່ວມ ຕໍ່ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວອີກດ້ວຍ. ບັນດາຍຸດທະສາດ, ແຜນດຳເນີນງານ ແລະ ກອບການຕີລາຄາຂອງຂະແໜງການ ທີ່ໄດ້ກ່າວມາຂ້າງເທິງນັ້ນແມ່ນ ຈຳເປັນຕ້ອງໄດ້ມີການປັບປຸງ ເພື່ອໃຫ້ສອດຄ່ອງກັບໂຄງປະກອບການຈັດຕັ້ງ ໃນແຕ່ລະໄລຍະ. ກົມຄຸ້ມຄອງການ ປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຈຸດໃຈກາງໃນການປະສານ ສົມທົບກັບ ບັນດາກະຊວງຕ່າງໆ ເພື່ອໃຫ້ບັນລຸຄາດໝາຍສູ່ຊຸມໃນໄລຍະສັ້ນຂອງ ການປັບຕົວເຂົ້າກັບການ ປ່ຽນແປງດິນຟ້າອາກາດ ສອດຄ່ອງກັບນະໂຍບາຍ ແລະ ຍຸດທະສາດ ຂອງຂະແໜງການທີ່ກ່ຽວຂ້ອງ.

IV. ການຈັດຕັ້ງປະຕິບັດ

4.1 ກົນໄກການປະສານງານແຫ່ງຊາດ

ສ້າງຕັ້ງກົນໄກການປະສານງານໃນລະດັບຊາດຂຶ້ນ ເພື່ອຕິດຕາມການຈັດຕັ້ງປະຕິບັດ ແຜນງານແຫ່ງຊາດ ການປະກອບສ່ວນການແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ. ກົນໄກດັ່ງກ່າວ ຈະລວມເອົາ ບັນດາຜູ້ຕາງໜ້ າຈາກ ຂະ ແໜງການລັດ, ຄູ່ຮ່ວມພັດທະນາ, ພາກທຸລະກິດ ແລະ ເອກະຊົນ. ດຳລັດ ວ່າດ້ວຍ ການປ່ຽນແປງດິນ ຟ້າອາກາດ ທີ່ໄດ້ຖືກຮັບຮອງ ໃນວັນທີ 19 ກັນຍາ 2019 ໄດ້ມອບໃຫ້ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໜ່ວຍງານຮັບຜິດຊອບ ແລະ ປະສານງານໂດຍກົງກັບ ບັນດາກະຊວງ, ອົງການຈັດຕັ້ງ ແລະ ການຈັດຕັ້ງລະດັບທ້ອງຖິ່ນທີ່ກ່ຽວຂ້ອງ. ບັນດາອົງການຈັດຕັ້ງ ທີ່ຮັບຜິດຊອບການຄຸ້ມຄອງ ແລະ ຕິດຕາມການ ປ່ຽນແປງດິນຟ້າອາກາດ ໄດ້ແກ່ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ. ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນລະດັບທ້ອງຖິ່ນ ຈະລາຍງານກ່ຽວກັບ ສະພາບ ການປ່ຽນແປງດິນຟ້າອາກາດຂອງທ້ອງຖິ່ນນັ້ນໆ ໃຫ້ແກ່ການຈັດຕັ້ງທີ່ຢູ່ໃນລະດັບສູງກວ່າ ໂດຍມີການປະສານງານ ກັບກົມ, ຫ້ອງການ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງ.

ອີງຕາມດຳລັດ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ມີໜ້າທີ່ຮັບຜິດຊອບ ໃນການສ້າງ ແລະ ເກັບກຳຮັກສາລະບົບຂໍ້ມູນຂ່າວສານ ດ້ານການປ່ຽນແປງ

ດິນຟ້າອາກາດ ເພື່ອເກັບກຳ, ລວບລວມ, ຄຸ້ມຄອງ, ສະໜອງ ແລະ ບໍລິການຂໍ້ມູນ ຢ່າງຖືກຕ້ອງ, ໜ້າເຊື່ອຖື ແລະ ທັນຕໍ່ສະພາບການ, ນຳໃຊ້ຂໍ້ມູນ ແລະ ສະຖິຕິໄພຜິບັດ ແຫ່ງຊາດ ໂດຍການປະສານງານກັບ ບັນດາກະຊວງ ແລະ ການຈັດຕັ້ງທ້ອງຖິ່ນທີ່ກ່ຽວຂ້ອງ. ບັນດາກະຊວງທີ່ກ່ຽວຂ້ອງ ຈະສະໜອງຂໍ້ມູນການປ່ຽນແປງດິນຟ້າອາກາດ ຈາກຂະແໜງການຂອງຕົນ ໃຫ້ແກ່ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ກະຊວງຖະແຫຼ່ງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ, ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງສາທາລະນະສຸກ ຈະເຊື່ອມສານ ວຽກງານການປ່ຽນແປງດິນຟ້າອາກາດ ເຂົ້າໃນບັນດາກິດຈະກຳຂອງຕົນ ລວມທັງດຳເນີນ ການສຶກສາ, ຄົ້ນຄວ້າ ແລະ ສົ່ງເສີມ ການນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແລະ ເພີ່ມຄວາມທົນທານ ຕໍ່ການປ່ຽນແປງດິນຟ້າອາກາດ.

ການຈັດຕັ້ງປະຕິບັດ ບັນດາມາດຕະການທັງໝົດເຫຼົ່ານີ້ ຕ້ອງສອດຄ່ອງກັບນະໂຍບາຍ ແລະ ຍຸດທະສາດ ຂອງຂະແໜງການ ແລະ ອີງໃສ່ທຶນຮອນທີ່ໄດ້ຮັບ ຫຼື ຈະໄດ້ກຳນົດເພີ່ມເຕີມໃຫ້ເປັນສ່ວນໜຶ່ງໃນຂະບວນການ ລະດົມທຶນ ເຊິ່ງ ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຈະເຮັດໜ້າທີ່ໃນການປະສານງານ.

4.2 ການຕິດຕາມກວດກາ ແລະ ການປະເມີນຜົນ

ວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ

ຂັ້ນຕອນ ການຕິດຕາມ ມາດຕະການຫຼຸດຜ່ອນທາດອາຍເຮືອນແກ້ວ ໄດ້ຊີ້ແຈງລະອຽດຢູ່ໃນ ເອກະສານ ຊ້ອນທ້າຍທີ 1. ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີໜ້າທີ່ຮັບຜິດຊອບລວມໃນການວັດແທກ, ການລາຍງານ ແລະ ການຢັ້ງຢືນ (Measurement, Reporting and Verification - MRV) ຕາມຈຸດປະສົງຂອງວຽກງານການຫຼຸດຜ່ອນທາດອາຍເຮືອນແກ້ວ. ໃນແຜນການສ້າງຄວາມສາມາດ ສຳລັບ 5 ປີ ຕໍ່ໜ້ານີ້ ຈະໄດ້ສຸມໃສ່ວຽກງານການຄິດໄລ່ ແລະ ການຕິດຕາມ ການປ່ອຍທາດອາຍເຮືອນແກ້ວ. ໃນນີ້ ການຄິດໄລ່ຕົວເລກຕ່າງໆ ຕາມເປົ້າໝາຍທີ່ໄດ້ວາງໄວ້ໃນແຜນງານແຫ່ງຊາດ ສະບັບນີ້ ແມ່ນໄດ້ນຳໃຊ້ຫົວໜ່ວຍວັດແທກ ອັນດຽວ ສະເລ່ຍເປັນ ktCO2e/ປີ ແຕ່ປີ 2020 ຫາ 2030 ເພື່ອເປັນການເສີມສ້າງຄວາມໂປ່ງໃສ ແລະ ຄວາມສອດຄ່ອງ.

ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

ກຳນົດຕາຕະລາງສົມທຽບໃນການຕີລາຄາຄວາມຄືບໜ້າ, ປະສິດທິຜົນ ແລະ ຊ່ອງຫວ່າງໃນລະດັບຊາດ ເຊິ່ງເປັນສ່ວນໜຶ່ງຂອງ “ການລາຍງານ, ການຕິດຕາມກວດກາ ແລະ ການທົບທວນ” ຂອງແຜນງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແຫ່ງຊາດ (NAP). ແຜນງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແຫ່ງຊາດ ຈະຊ່ວຍສົ່ງເສີມ ການປະສານງານລະຫວ່າງຂະແໜງການ ກ່ຽວກັບ ການລາຍງານ ແລະ ການແລກປ່ຽນ

ຂໍ້ມູນ-ຂ່າວສານ, ການສ້າງຄວາມສາມາດໃນການຕິດຕາມ, ປະເມີນຜົນຂອງ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ປັບປຸງລະບົບການຕິດຕາມການເງິນ ສຳລັບການຈັດຕັ້ງປະຕິບັດໂຄງການ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂອບເຂດທົ່ວປະເທດ.

ຕົວຊີ້ວັດທີ່ນຳໃຊ້ເຂົ້າໃນການວັດແທກ, ການລາຍງານ ແລະ ການຢັ້ງຢືນ ຄວາມຄືບໜ້າ ກ່ຽວກັບ ລະດັບ ຜົນສຳເລັດດ້ານການສ້າງຄວາມທົນທານ ໃຫ້ແກ່ພື້ນຖານໂຄງລ່າງ ຂອງຂະແໜງການສາທາລະນະສຸກ ແລະ ການ ສະໜອງ ນ້ຳສະອາດ ໄດ້ລະບຸໃນຕາຕະລາງ 1 ຂອງເອກະສານຊ້ອນທ້າຍທີ 2 ຂອງຍຸດທະສາດດ້ານການປັບຕົວຂອງ ຂະແໜງການສາທາລະນະສຸກ ຕໍ່ການປ່ຽນແປງດິນຟ້າອາກາດ ປີ 2018-2025 ແລະ ໄດ້ສັງລວມຢູ່ໃນເອກະສານ ຊ້ອນທ້າຍທີ 2 ຂອງແຜນງານແຫ່ງຊາດ ສະບັບນີ້. ຕົວຊີ້ວັດທີ່ນຳໃຊ້ເຂົ້າໃນການວັດແທກ, ການລາຍງານ ແລະ ການຢັ້ງຢືນ ຂອງຄວາມຄືບໜ້າລະດັບຜົນສຳເລັດຕາມຈຸດປະສົງຂອງການປັບຕົວໃນໄລຍະຍາວ ຂອງຂະແໜງການ ກະສິກຳ, ປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ, ພະລັງງານ, ຊັບພະຍາກອນນ້ຳ, ການຂົນສົ່ງ ແລະ ການ ຜັດທະນາຕົວເມືອງ ຈະລະບຸຢູ່ໃນຍຸດທະສາດ ແລະ ແຜນດຳເນີນງານ ດ້ານການປັບຕົວເຂົ້າກັບການປ່ຽນແປງດິນຟ້າ ອາກາດ ແລະ ຈະຖືກສັງລວມເຂົ້າໄວ້ໃນ ແຜນງານແຫ່ງຊາດ ສະບັບປີ 2025. ການຢັ້ງຢືນຄວາມຖືກຕ້ອງຂອງຄາດ ໝາຍສູ້ຊົນ ໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຮອດປີ 2025 ທີ່ໄດ້ລະບຸຢູ່ຂ້າງເທິງນັ້ນ ໝາຍເຖິງ ການຮັບຮອງເອົາ ຍຸດທະສາດ ຫຼື ເຊື່ອມສານເອົາ ວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຂອງ ຂະແໜງການຕ່າງໆ ໂດຍບັນດາກະຊວງທີ່ກ່ຽວຂ້ອງ.

4.3 ການຮ່ວມມືສາກົນດ້ວຍຄວາມສະໝັກໃຈ

ສປປ ລາວ ໃຫ້ຄວາມສຳຄັນ ໃນການຮ່ວມມືກັບປະເທດອື່ນໆ ເພື່ອໃຫ້ບັນລຸຈຸດປະສົງ ຂອງສັນຍາປາຣີ ວ່າດ້ວຍ ການປ່ຽນແປງດິນຟ້າອາກາດ ລວມທັງການຊື້-ຂາຍຜົນໄດ້ຮັບ ຈາກການຫຼຸດຜ່ອນການປ່ອຍທາດອາຍ ເຮືອນແກ້ວລະຫວ່າງປະເທດ, ການສະໜອງກະແສໄຟຟ້າ ທີ່ໄດ້ຈາກແຫຼ່ງພະລັງງານນ້ຳ ທີ່ເປັນພະລັງງານທົດແທນ ທີ່ສະອາດ ເພື່ອສົ່ງອອກປະເທດໃກ້ຄຽງ ແລະ ອື່ນໆ.

ເອກະສານຊ້ອນທ້າຍທີ 1: ມາດຕະການການຫຼຸດຜ່ອນທາດອາຍເຮືອນແກ້ວ

ມາດຕະການການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບບໍ່ມີເງື່ອນໄຂ

ມາດຕະການ	**ຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ສົ່ງເສີມການອະນຸລັກປ່າໄມ້, ການຄຸ້ມຄອງປ່າໄມ້ແບບຍືນຍົງ, ເຂດກັນຊົນຂອງປ່າສະຫງວນແຫ່ງຊາດ ແລະ ເຂດສະຫງວນອື່ນໆ ແລະ ການເສີມຂະຫຍາຍ ການກັກເກັບມວນທາດກາກບອນຂອງປ່າ.**
ຂະແໜງການ	ປ່າໄມ້ ແລະ ການປ່ຽນແປງການນຳໃຊ້ທີ່ດິນ
ເປົ້າໝາຍຫຼຸດຜ່ອນ ທາດອາຍເຮືອນແກ້ວ	ສະເລ່ຍ 1.100 ktCO2e/ປີ ລະຫວ່າງປີ 2020 ແລະ 2030
ຂະບວນການການຕິດຕາມ ກວດກາ	ຕ້ອງສອດຄ່ອງກັບ ແຜນຕິດຕາມກວດກາ ຂອງບັນດາໂຄງການ ຂ້າງລຸ່ມນີ້
ຂໍ້ມູນອະທິບາຍເພີ່ມເຕີມ	- “ໂຄງການການຈັດຕັ້ງປະຕິບັດການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວໃນ ສປປ ລາວ ໂດຍຜ່ານການປັບປຸງການບໍລິຫານ ແລະ ການຄຸ້ມຄອງຜູ່ມີທັດ ແບບຍືນຍົງ”, ໂດຍຮ່ວມມືກັບ ກອງທຶນສີຂຽວດ້ານການປ່ຽນແປງດິນຟ້າອາກາດສາກົນ (GCF) FP117 ແລະ “ໂຄງການຄຸ້ມຄອງຜູ່ມີທັດ ແລະ ພັດທະນາຊີວິດການເປັນຢູ່ (P170559)” ໂດຍຮ່ວມມືກັບ ທະນາຄານໂລກ; - ຄາດໝາຍສູ້ຊົນໃນການຫຼຸດຜ່ອນທາດອາຍເຮືອນແກ້ວ ສຳລັບ ມາດຕະການນີ້ ແມ່ນທຽບເທົ່າກັບ ການເພີ່ມຂຶ້ນຂອງເນື້ອທີ່ປ່າໄມ້ ປະມານ 8.300 ຮຕ/ປີ, ສະເລ່ຍການດູດຊຶມຊັບກາກບອນຂອງປ່າປູກ ໃນປະລິມານ 37,2 ໂຕນກາກບອນ/ຮຕ ອີງຕາມ ບົດລາຍງານລະດັບທຽບຖານ ການປ່ອຍທາດອາຍເຮືອນແກ້ວ ຂອງປ່າໄມ້ ແລະ ລະດັບທຽບຖານຂອງປ່າໄມ້ ຂອງ ສປປ ລາວ (UNFCCC, 2018)

ມາດຕະການ	**ເພີ່ມກຳລັງການຕິດຕັ້ງການຜະລິດໄຟຟ້າພະລັງງານນ້ຳ ເປັນ 13 GW (ຊຶ່ມໃຊ້ ພາຍໃນ ແລະ ສົ່ງອອກ) ໃນປະເທດ ພາຍໃນປີ 2030**
ຂະແໜງການ	ພະລັງງານ
ຄາດໝາຍຫຼຸດຜ່ອນ ທາດອາຍເຮືອນແກ້ວ	ສະເລ່ຍ 2.500 ktCO2e ຕໍ່ປີ ລະຫວ່າງ 2020 ຫາ 2030
ຂະບວນການການຕິດຕາມກວດກາ	ໃນແຕ່ລະປີ ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບ ກັບ ກະຊວງ ພະລັງງານ ແລະ ບໍ່ແຮ່ ໃນການຕິດຕາມການເພີ່ມກຳລັງຕິດຕັ້ງການຜະລິດໄຟຟ້າພະລັງງານນ້ຳ ແລະ ການປ່ອຍທາດອາຍແກ້ວ
ຂໍ້ມູນອະທິບາຍເພີ່ມເຕີມ	- ໃນປີ 2018 ມີກຳລັງການຕິດຕັ້ງການຜະລິດໄຟຟ້າ ປະມານ 4,5 GW (EDL, 2018) - ຄາດໝາຍສູ້ຊົນ ສຳລັບກຳລັງການຕິດຕັ້ງການຜະລິດໄຟຟ້າ ໃນປີ 2030 ແມ່ນຄິດໄລ່ຕາມ ຄວາມເປັນໄປໄດ້ 80% ຂອງກຳລັງການຕິດຕັ້ງທີ່ຄາດຄະເນໄວ້ ໃນປີ 2030 ອີງຕາມແຜນພັດທະນາພະລັງງານ 2016 – 2030 ຂອງກະຊວງພະລັງງານ ແລະ ບໍ່ແຮ່. - ຄາດໝາຍການຫຼຸດຜ່ອນທາດອາຍເຮືອນແກ້ວ ແມ່ນອີງຕາມ ການຄາດຄະເນຂອງກຳລັງການຕິດຕັ້ງການຜະລິດໄຟຟ້າພະລັງງານນ້ຳ ທີ່ຄາດວ່າຈະເພີ່ນຂຶ້ນອີກ 8,5 GW ລະຫວ່າງປີ 2019 ຫາ 2030.

ມາດຕະການ	**ການນຳໃຊ້ເຕົາປະຢັດ ຈຳນວນ 50.000 ໜ່ວຍ**
ຂະແໜງການ	ພະລັງງານ
ຄາດໝາຍຫຼຸດຜ່ອນ ທາດອາຍເຮືອນແກ້ວ	ສະເລ່ຍ 50 ktCO2e ຕໍ່ປີ ລະຫວ່າງ 2020 ຫາ 2030
ຂະບວນການການຕິດຕາມກວດກາ	ອີງຕາມ ໂຄງການ ລິເລີ່ມ ກ່ຽວກັບ ເຕົາປະຢັດ ຢູ່ ສປປ ລາວ ທີ່ຮ່ວມມືກັບ ທະນາຄານໂລກ
ຂໍ້ມູນອະທິບາຍເພີ່ມເຕີມ	ຈັດຕັ້ງປະຕິບັດໃນສາມແຂວງ: ນະຄອນຫຼວງວຽງຈັນ, ສະຫວັນນະເຂດ ແລະ ຈຳປາສັກ.

ມາດຕະການ	**ໂຄງການລົດເມດ່ວນໃນນະຄອນຫຼວງວຽງຈັນ ແລະ ການຂົນສົ່ງທີ່ບໍ່ໃຊ້ ເຄື່ອງ ຍົນ**
ຂະແໜງການ	ຂົນສົ່ງ
ຄາດໝາຍຫຼຸດຜ່ອນ ທາດ ອາຍເຮືອນແກ້ວ	ສະເລ່ຍ 25 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມ ກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບ ຮ່ວມກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບ ໃນການຕາມກວດກາ ຈຳນວນຖ້ຽວ ແລະ ຈຳນວນ ຜູ້ໂດຍສານ ທີ່ໃຊ້ບໍລິການ ຂົນສົ່ງຂອງໂຄງການ ແລະ ປະລິມານການຊົມໃຊ້ ເຊື້ອໄຟ/ໄຟຟ້າ ໂດຍລວມ ໃນແຕ່ລະປີ ໂດຍ ນຳໃຊ້ຂໍ້ມູນຈາກ ຜູ້ໃຫ້ບໍລິການ ລົດເມດ່ວນ.
ຂໍ້ມູນອະທິບາຍເພີ່ມເຕີມ	- ການຄາດຄະເນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແມ່ນອີງໃສ່ ໄລຍະທາງ 13 ກິໂລແມັດ ທີ່ເປັນເລນສະເພາະສຳລັບ ລົດເມເທົ່ານັ້ນ - ຄາດໝາຍແມ່ນສອດຄ່ອງກັບ ໂຄງການ ຂົນສົ່ງ ແບບຍືນຍົງ ໃນຕົວເມືອງ ນະຄອນຫລວງວຽງຈັນ ຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ໂດຍການ ຮ່ວມມືກັບ ທະນາຄານພັດທະນາ ອາຊີ

ມາດຕະການ	**ໂຄງການ ເສັ້ນທາງລົດໄຟ ລາວ-ຈີນ**
ຂະແໜງການ	ຂົນສົ່ງ
ຄາດໝາຍຫຼຸດຜ່ອນ ທາດ ອາຍເຮືອນແກ້ວ	ສະເລ່ຍ 300 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມ ກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ຕິດຕາມ ຈຳນວນຖ້ຽວ, ຜູ້ໂດຍສານ, ນ້ຳໜັກເຄື່ອງ (ພັດສະດຸ) ຫົວໜ່ວຍເປັນ ໂຕນ ແລະ ພະລັງງານທີ່ນຳໃຊ້ເຂົ້າໃນ ການຂົນສົ່ງໂດຍ ເສັ້ນທາງລົດໄຟ ລາວ-ຈີນ ເປັນແຕ່ລະປີ.
ຂໍ້ມູນອະທິບາຍເພີ່ມເຕີມ	- ການຄາດຄະເນການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ແມ່ນອີງ ຕາມ ຈຳນວນ ຜູ້ໂດຍສານ 3,4 ລ້ານ ຄົນ-ກິໂລແມັດ ແລະ ປະລິມານການ ຂົນສົ່ງເຄື່ອງ 1 ລ້ານ ໂຕນ-ກິໂລແມັດ ຕໍ່ມື້. - ເສັ້ນທາງລົດໄຟ ລາວ-ຈີນ ສາມາດນຳໃຊ້ໃນທ້າຍປີ 2021 ເປັນຕົ້ນໄປ

ການຫຼຸດຜ່ອນທາດອາຍເຮືອນແກ້ວ ແບບມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອເພີ່ມເຕີມ

ມາດຕະການ	**ເພີ່ມເນື້ອທີ່ປົກຫຸ້ມປ່າໄມ້ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ (ໃຫ້ໄດ້ 16,58 ລ້ານ ເຮັກຕາ) ເຊິ່ງຈະຊ່ວຍຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍ ແລະ ການເຮັດໃຫ້ປ່າໄມ້ເຊື່ອມໂຊມ, ສົ່ງເສີມການອະນຸລັກ ປ່າໄມ້, ການຄຸ້ມຄອງປ່າໄມ້ແບບຍືນຍົງ, ເຂດກັນຊົນຂອງປ່າສະຫງວນແຫ່ງ ຊາດ ແລະ ເຂດສະຫງວນອື່ນໆ ແລະ ການເສີມຂະຫຍາຍການກັກເກັບມວນ ທາດການກບອນຂອງປ່າ.**
ຂະແໜງການ	ປ່າໄມ້ ແລະການປ່ຽນແປງການນຳໃຊ້ທີ່ດິນ
ຄາດໝາຍຫຼຸດຜ່ອນທາດອາຍ ເຮືອນແກ້ວ	ສະເລ່ຍ 45.000 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມ ກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງ ກະສິກຳ ແລະ ປ່າໄມ້ ໂດຍ ອີງໃສ່ ການສຳຫຼວດປ່າໄມ້ແຫ່ງຊາດ
ຂໍ້ມູນອະທິບາຍເພີ່ມເຕີມ	ຄາດໝາຍສູ້ຊົນສອດຄ່ອງກັບ ຍຸດທະສາດປ່າໄມ້ແຫ່ງຊາດ ທີ່ແນ່ໃສ່ ການເພີ່ມ ເນື້ອທີ່ປ່າໄມ້ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ.

ມາດຕະການ	**ເພີ່ມການຜະລິດພະລັງງານແສງຕາເວັນ ແລະ ພະລັງງານລົມ ໃນທົ່ວປະເທດ ໃຫ້ໄດ້ 1 GW ພາຍໃນປີ 2030**
ຂະແໜງການ	ພະລັງງານ
ຄາດໝາຍຫຼຸດຜ່ອນ ທາດ ອາຍເຮືອນແກ້ວ	ສະເລ່ຍ 100 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມ ກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງ ພະລັງງານ ແລະ ບໍ່ແຮ່ ຕິດຕາມ ກວດກາ ກຳລັງການຕິດຕັ້ງພະລັງງານ ແສງຕາເວັນ ທີ່ເພີ່ມຂຶ້ນໃໝ່ ແລະ ທາດ ອາຍເຮືອນແກ້ວ ໃນແຕ່ລະປີ
ຂໍ້ມູນອະທິບາຍເພີ່ມເຕີມ	- ກຳລັງການຕິດຕັ້ງຂອງພະລັງງານແສງຕາເວັນ ໃນປີ 2018 ມີປະມານ 32 MW (EDL, 2018) - ບໍ່ມີກຳລັງການຕິດຕັ້ງຂອງພະລັງງານລົມໃນປີ 2020 - ຄາດໝາຍກຳລັງການຕິດຕັ້ງໃນປີ 2030 ແມ່ນຄາດຄະເນໂດຍນຳໃຊ້ ອັດຕາ ຄວາມເປັນໄປໄດ້ 50% ຂອງກຳລັງການຕິດຕັ້ງທີ່ຄາດໝາຍໄວ້ໃນປີ 2030 ໂດຍກະຊວງພະລັງງານ ແລະ ບໍ່ແຮ່. ຄາດໝາຍແມ່ນສອດຄ່ອງກັບນະໂຍ

	ນາຍພະລັງງານຂອງ ສປປ ລາວສະບັບປີ 2020 ຊຶ່ງມີເປົ້າໝາຍໃນການສະໜອງພະລັງງານໄຟຟ້າຈາກແຫລ່ງພະລັງງານທົດແທນອື່ນໆໃຫ້ໄດ້ 5%

ມາດຕະການ	**ເພີ່ມການຜະລິດພະລັງງານຊີວະມວນ ໃນທົ່ວປະເທດ ໃຫ້ໄດ້ 300 MW ພາຍໃນປີ 2030**
ຂະແໜງການ	ພະລັງງານ
ຄາດໝາຍຫຼຸດຜ່ອນ ທາດອາຍເຮືອນແກ້ວ	ສະເລ່ຍ 84 ktCO2e ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງພະລັງງານ ແລະ ບໍ່ແຮ່ ຕິດຕາມກຳລັງການຕິດຕັ້ງພະລັງຊີວະມວນ ທີ່ເພີ່ມຂຶ້ນໃໝ່ ແລະ ທາດອາຍເຮືອນແກ້ວ ໃນແຕ່ລະປີ
ຂໍ້ມູນອະທິບາຍເພີ່ມເຕີມ	- ກຳລັງການຕິດຕັ້ງ ໃນປີ 2019 ແມ່ນປະມານ 40 MW - ຄາດໝາຍ ແມ່ນສອດຄ່ອງກັບ ນະໂຍບາຍ ພະລັງງານ ຂອງ ສປປ ລາວ ສະບັບປີ 2020 ຊຶ່ງມີເປົ້າໝາຍ ໃນການສະໜອງພະລັງງານໄຟຟ້າຈາກແຫລ່ງພະລັງງານທົດແທນອື່ນໆ ໃຫ້ໄດ້ 5%

ມາດຕະການ	**ເພີ່ມການນຳໃຊ້ພາຫະນະທີ່ແລ່ນດ້ວຍໄຟຟ້າສຳລັບລົດຈັກ ແລະ ລົດໃຫຍ່ໃຫ້ໄດ້ 30% ທຽບໃສ່ ຈຳນວນພາຫະນະທັງໝົດທົ່ວປະເທດ**
ຂະແໜງການ	ຂົນສົ່ງ
ຄາດໝາຍຫຼຸດຜ່ອນ ທາດອາຍເຮືອນແກ້ວ	ສະເລ່ຍ 30 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ ຕິດຕາມ ອັດຕາສ່ວນຂອງພາຫະນະທີ່ນຳໃຊ້ໄຟຟ້າ ໃນຈຳນວນພາຫະນະທັງໝົດໃນທົ່ວປະເທດ ໃນແຕ່ລະປີ.
ຂໍ້ມູນອະທິບາຍເພີ່ມເຕີມ	ມາດຕະການນີ້ສອດຄ່ອງກັບ “ນະໂຍບາຍສົ່ງເສີມ ການໃຊ້ພະລັງງານ ສະອາດ ໃນຂະແໜງການຂົນສົ່ງ, ແຜນພັດທະນາ ຮອດປີ 2025, ຍຸດທະສາດ ຮອດປີ 2030 ແລະ ວິໄສທັດ ຮອດປີ 2050” ຂອງ ກະຊວງພະລັງງານ ແລະ ບໍ່ແຮ່

ມາດຕະການ	**ເພີ່ມອັດຕາສ່ວນຂອງນ້ຳມັນຊີວະພາບໃຫ້ໄດ້ 10% ຂອງຄວາມຕ້ອງການຊົມໃຊ້ນ້ຳມັນໃນຂະແໜງຂົນສົ່ງ**
ຂະແໜງການ	ຂົນສົ່ງ / ພະລັງງານ
ຄາດໝາຍຫຼຸດຜ່ອນ ທາດອາຍເຮືອນແກ້ວ	ສະເລ່ຍ 29 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງພະລັງ ງານ ແລະ ບໍ່ແຮ່ ຕິດຕາມ ອັດຕາສ່ວນຂອງນ້ຳມັນຊີວະພາບ ທີ່ຊົມໃຊ້ໃນຂະແໜງຂົນສົ່ງໃນແຕ່ ລະປີ ໂດຍ ນຳໃຊ້ຂໍ້ມູນຈາກ.
ຂໍ້ມູນອະທິບາຍເພີ່ມເຕີມ	- ຄາດໝາຍສູ້ຊົນນີ້ ສອດຄ່ອງກັບ ດຳລັດ ຂອງທ່ານນາຍົກລັດຖະມົນຕີ ວ່າ ດ້ວຍ ການສົ່ງເສີມ ແລະ ພັດທະນາ ນ້ຳມັນຊີວະພາບ (ເລກທີ 410/ລບ, ລົງວັນທີ 10 ພະຈິກ 2016) - ເບິ່ງລະອຽດ ກ່ຽວກັບ ການດຳເນີນງານ, ໜ່ວຍງານຮັບຜິດຊອບ ແລະ ການຈັດຕັ້ງປະຕິບັດ ໃນ ຍຸດທະສາດພະລັງງານທົດແທນ ຂອງ ສປປ ລາວ - ຜົນຜະລິດ ແລະ ສິ່ງເສດເຫລືອ ຈາກກະສິກຳ, ລວມທັງ ທັນຍາຫານ ເຊັ່ນ ນ້ຳມັນປາມ, ຖົ່ວເຫລືອງ ແລະ ໝາກເຍົ່າ ສາມາດນຳໃຊ້ເຂົ້າໃນ ການ ຜະລິດ ເຊື້ອໄຟຊີວະພາບໄດ້; - ອັດຕາສ່ວນ ຂອງນ້ຳມັນຊີວະພາບ ຂອງນ້ຳມັນທີ່ຊົມໃຊ້ໃນຂະແໜງ ຂົນສົ່ງ ແມ່ນຢູ່ລະຫວ່າງ 0,5% ຫາ 1% ໃນປີ 2019.

ມາດຕະການ	**ຫຼຸດຜ່ອນການນຳໃຊ້ພະລັງງານລົງ 10% ເມື່ອທຽບໃສ່ ຕາມຈັ່ງຫວະການຂະຫຍາຍຕົວເສດຖະກິດ**
ຂະແໜງການ	ພະລັງງານ
ຄາດໝາຍຫຼຸດຜ່ອນ ທາດອາຍເຮືອນແກ້ວ	ສະເລ່ຍ 280 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງພະລັງງານ ແລະ ບໍ່ແຮ່ ຄວນ ມີການຕິດຕາມ ການປະຢັດພະລັງງານ ໃນແຕ່ລະປີ.
ຂໍ້ມູນອະທິບາຍເພີ່ມເຕີມ	- ມາດຕະການນີ້ ສອດຄ່ອງກັບນະໂຍບາຍແຫ່ງຊາດ ວ່າດ້ວຍ ການປະຢັດ ແລະ ອະນຸລັກພະລັງງານ, ປີ 2016.

	- ຄາດຄະເນຄວາມຕ້ອງການພະລັງງານລວມຕາມຈັງຫວະການ ຂະຫຍາຍຕົວຂອງເສດຖະກິດ ປະມານ 4.320 ktoe ພາຍໃນປີ 2030. - ເບິ່ງລະອຽດກ່ຽວກັບ ໂຄງຮ່າງການຈັດຕັ້ງ, ແນວທາງການຈັດຕັ້ງປະຕິບັດ ແລະ ມາດຕະການປະຢັດພະລັງງານ ຢູ່ ນະໂຍບາຍແຫ່ງຊາດ ວ່າດ້ວຍ ການ ປະຢັດ ແລະ ອະນຸລັກພະລັງງານ, ປີ 2016.

ມາດຕະການ	**ນຳໃຊ້ວິທີການບໍລິຫານຈັດການນ້ຳໃນການເຮັດນາເຂົ້າ ຢູ່ເຂດທົ່ງພຽງໃນ ເນື້ອທີ່ 50.000 ເຮັກຕາ**
ຂະແໜງການ	ກະສິກຳ
ຄາດໝາຍຫຼຸດຜ່ອນ ທາດ ອາຍເຮືອນແກ້ວ	ສະເລ່ຍ 128 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມ ກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້ ຕິດຕາມກວດກາຈຳນວນເນື້ອທີ່ດິນທັງໝົດ ທີ່ມີການປະຕິບັດວິທີການ ບໍລິຫານຈັດການນ້ຳໃນ ການເຮັດນາເຂົ້າ ໃນແຕ່ລະປີ
ຂໍ້ມູນອະທິບາຍເພີ່ມເຕີມ	ມາດຕະການນີ້ ລວມເອົາ ວິທີການຍ່ອຍສະຫຼາຍທີ່ບໍ່ໃຊ້ອາກາດ ຂອງທາດ ອິນ ຊີ ໃນດິນທີ່ເຮັດນາເຂົ້າ. ຄວນຈະແນ່ໃສ່ ການເສີມສ້າງດ້ານການ ປະຕິບັດການ ຈັດການບໍລິຫານນ້ຳ ເຊິ່ງປະກອບມີ (1) ການສ້າງຄວາມອາດ ສາມາດໃນທຸກ ລະດັບ ລວມເຖິງ ລະດັບຊຸມຊົນ; (2) ສ້າງແຮງຈູງໃຈເພື່ອ ການປ່ຽນແປງພຶດຕິ ກຳ. ເພື່ອສົ່ງເສີມວິທີການປະຕິບັດດັ່ງກ່າວ ກໍຄວນມີ ການປັບປຸງລະບົບ ຊົນລະປະທານເຊິ່ງຕ້ອງໄດ້ເຂົ້າໃຈວ່າ ຊົນລະປະທານໃນ ສປປ ລາວ ແມ່ນ ມີ ຂະໜາດນ້ອຍ ແລະ ມີລັກສະນະກະແຈກກະຈາຍ ແລະ ມີອັດຕາການຮັບເອົາ ວິທີການປະຕິບັດແບບໃໝ່ ກໍມີຂ້ອນຂ້າງຕ່ຳ.

ມາດຕະການ	**ຈັດຕັ້ງປະຕິບັດໂຄງການຄຸ້ມຄອງຂີ້ເຫຍື້ອ ໃນເຂດຕົວເມືອງແບບຍືນຍົງໃຫ້ໄດ້ ໃນປະລິມານ 500 ໂຕນ / ມື້**
ຂະແໜງການ	ຂີ້ເຫຍື້ອ
ຄາດໝາຍຫຼຸດຜ່ອນ ທາດ ອາຍເຮືອນແກ້ວ	ສະເລ່ຍ 40 ktCO2e ຕໍ່ປີ ລະຫວ່າງປີ 2020 ຫາ 2030
ຂະບວນການການຕິດຕາມ ກວດກາ	ກົມຄຸ້ມຄອງການປ່ຽນແປງດິນຟ້າອາກາດ, ກະຊວງຊັບພະຍາກອນທຳມະ ຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ຫ້ອງການຄຸ້ມຄອງ ແລະ ບໍລິຫານຕົວ ເມືອງວຽງຈັນ ຕິດຕາມ ປະລິມານລວມຂອງຂີ້ເຫຍື້ອ ແລະ ປະເພດຂອງຂີ້ ເຫຍື້ອ ທີ່ຖືກນຳມາໃຊ້ພາຍໃຕ້ໂຄງການນີ້ ໃນແຕ່ລະປີ.
ຂໍ້ມູນອະທິບາຍເພີ່ມເຕີມ	ມາດຕະການນີ້ ສອດຄ່ອງກັບ ຍຸດທະສາດການຄຸ້ມຄອງຂີ້ເຫຍື້ອ ແບບຍືນຍົງ ແລະ ແຜນປະຕິບັດງານ ສຳລັບນະຄອນຫຼວງວຽງຈັນ ປີ 2020 ຫາ 2030

ເອກະສານຊ້ອນທ້າຍທີ 2: ມາດຕະການການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ

ຍຸດທະສາດການປັບຕົວ ຂອງຂະແໜງສາທາລະນະສຸກ – ສັງລວມຫຍໍ້ ອົງປະກອບ ແລະ ຕົວຊີ້ວັດ

ອົງປະກອບ	ຕົວຊີ້ວັດຕົ້ນຕໍ
ອົງປະກອບ 1: ພາວະຜູ້ນຳ ແລະ ການປົກຄອງ	• ຄະນະກຳມະການ, ໜ່ວຍງານ, ຜູ້ປະສານງານ ແລະ ທີມງານດ້ານ ການປັບຕົວຂອງຂະແໜງສາທາລະນະສຸກ ຈາກການປ່ຽນແປງດິນຟ້າອາກາດ ໄດ້ຈັດຕັ້ງຂຶ້ນຢູ່ກະຊວງສາທາລະນະສຸກ ໃນທ້າຍປີ 2018 • ສຳເລັດການສ້າງກົນໄກການປະສານງານ ແລະ ລາຍງານ ໃນທ້າຍປີ 2018 • ຢ່າງໜ້ອຍ 3 ກອງປະຊຸມ/ສຳມະນາໄດ້ດຳເນີນກັບກົມກອງ ຫຼື ຂະແໜງການ ທີ່ກ່ຽວຂ້ອງ • ຢ່າງໜ້ອຍ 2 ໂຄງການ/ປີ ໄດ້ພັດທະນາມີບົດລາຍງານ ດ້ານຜົນກະທົບຕໍ່ ສຸຂະພາບ • ຢ່າງໜ້ອຍ 3 ບົດບັນທຶກຄວາມເຂົ້າໃຈ ໄດ້ລົງລາຍເຊັນ ກັບພາກສ່ວນທີ່ກ່ຽວຂ້ອງ
ອົງປະກອບ 2: ການສ້າງຄວາມເຂັ້ມແຂງດ້ານ ການຈັດຕັ້ງ ແລະ ຄວາມສາມາດ ຂອງພະນັກງານ ສາທາລະນະສຸກ	• 100 ຄົນຕໍ່ປີ ໄດ້ເຂົ້າຮ່ວມອົບຮົມ (ໃຫ້ມີແມ່ຍິງເຂົ້າ 50% ຂຶ້ນໄປ) • ມະຫາວິທະຍາໄລແຫ່ງຊາດ ແລະ ມະຫາວິທະຍາໄລວິທະຍາສາດສຸຂະພາບ ເອົາເຂົ້າໃນຫຼັກສູດການຮຽນການສອນ ຢ່າງໜ້ອຍ 8 ຊົ່ວໂມງ • ສ້າງ ແລະ ປັບປຸງຂໍ້ແນະນຳດ້ານວິຊາການກ່ຽວກັບການບິ່ງມະຕິ, ການສອບ ສວນ, ການຄວບຄຸມ, ການປ້ອງກັນ ແລະ ການປິ່ນປົວພະຍາດ, ການບາດເຈັບ ແລະ ພະຍາດທີ່ເກີດຈາກອາຫານ ຢ່າງໜ້ອຍ 5 ຂໍ້ແນະນຳ • ຈັດຊຸດອົບຮົມໃຫ້ໄດ້ 3 ຄັ້ງຕໍ່ປີ • ຜະລິດໂປສະເຕີ/ແຜ່ນພັບ ແລະ ແຈກຢາຍໃຫ້ຊຸມຊົນເປົ້າໝາຍ 10,000 ສະບັບ • ອອກລາຍການໂຄສະນາ ທາງໂທລະພາບ, ວິທະຍຸ 2 ຄັ້ງຕໍ່ເດືອນ • ມີແຜນຍຸດທະສາດດ້ານການສື່ສານ ກ່ຽວຂ້ອງກັບປ່ຽນແປງດິນຟ້າອາກາດ ແລະ ສຸຂະພາບ • ມີແຜນຈັດຕັ້ງປະຕິບັດດ້ານບົດບາດຍິງຊາຍ ທີ່ກ່ຽວຂ້ອງກັບການປ່ຽນແປງດິນຟ້າອາກາດ ແລະ ສຸຂະພາບ
ອົງປະກອບ 3: ການປະເມີນ ຄວາມ ບອບບາງ, ຄວາມ	• ກຳນົດເຂດຊຸມຊົນທີ່ມີຄວາມບອບບາງທີ່ສຸດ ຕໍ່ກັບການພັນແປ ແລະ ການ ປ່ຽນແປງສະພາບພູມອາກາດ ໃຫ້ໄດ້ 100 ຊຸມຊົນ • ດຳເນີນກອງປະຊຸມ ເພື່ອເຊື່ອມສານວຽກງານປະເມີນຜົນກະທົບ ຕໍ່ສຸຂະພາບເຂົ້າໃນ ທຸກໂຄງການພັດທະນາ 3 ຄັ້ງຕໍ່ປີ • ສ້າງໂຄງການ ແລະ ແຜນການສຳລັບການປັບຕົວ 4 ໂຄງການ

ສາມາດ ແລະ ການປັບຕົວ	• ມີບັນຊີລາຍການຂອງພື້ນທີ່ບອບບາງທາງດ້ານສາທາລະນະສຸກ • ສ້າງກົດຈະກຳທີ່ມີມາດຕະການການປັບຕົວ ໃນ 100 ຊຸມຊົນທີ່ບອບບາງ • ມີແຜນທີ່ຂອງຊຸມຊົນທີ່ບອບບາງ ທີ່ໄດ້ເຮັດການປັບຕົວຕໍ່ການປ່ຽນແປງ ດິນຟ້າອາກາດ
ອົງປະກອບ 4: ການເຊື່ອມສານ ການຕິດຕາມ ຄວາມສ່ຽງ ແລະ ລະບົບເຕືອນໄພ	• ມີການວິເຄາະຂໍ້ມູນດ້ານການປ່ຽນແປງດິນຟ້າອາກາດ ແລະ ພະຍາດ 1 ຄັ້ງຕໍ່ເດືອນ • ມີການລາຍງານພະຍາດທີ່ອ່ອນໄຫວ ຕໍ່ກັບການປ່ຽນແປງດິນຟ້າອາກາດ 1 ຄັ້ງຕໍ່ເດືອນ • ມີການລາຍງານການຕິດຕາມ ແລະ ກົດຈະກຳຄວບຄຸມ/ຫຼຸດຜ່ອນພະຍາດ ທີ່ເກີດຈາກແມງໄມ້ 1 ຄັ້ງຕໍ່ອາທິດ • ມີການລາຍງານລະບົບເຕືອນໄພ ລ່ວງໜ້າທຸກ 3 ເດືອນ
ອົງປະກອບ 5: ການສຶກສາ ຄົ້ນຄວ້າ ກ່ຽວກັບ ການປ່ຽນແປງ ດິນຟ້າອາກາດ ແລະ ສຸຂະພາບ	• ຈັດກອງປະຊຸມ ທີ່ກ່ຽວຂ້ອງກັບ ວາລະການສຶກສາຄົ້ນຄວ້າແຫ່ງຊາດ ຢ່າງໜ້ອຍ 3 ຫົວຂໍ້ຕໍ່ປີ • ດຳເນີນການສຶກສາຄົ້ນຄວ້າ ຢ່າງໜ້ອຍ 2 ຫົວຂໍ້ຕໍ່ປີ • ປະຕິບັດການສຶກສາຄົ້ນຄວ້າ ຢ່າງໜ້ອຍ 2 ຫົວຂໍ້ຕໍ່ປີ
ອົງປະກອບ 6: ຄວາມທົນທານ ຕໍ່ກັບສະພາບ ການປ່ຽນແປງດິນ ຟ້າອາກາດ ແລະ ຄວາມຍືນຍົງຂອງ ເຕັກໂນໂລຊີ ແລະ ໂຄງລ່າງພື້ນຖານ	• ສ້າງ ແລະ ປັບປຸງບູລະນະ ເພື່ອຮັບປະກັນໃຫ້ມີນ້ຳສະອາດ, ໄຟຟ້າ, ການສື່ສານ, ວັດຖຸອຸປະກອນ ແລະ ຢາປົວພະຍາດ ໃນ ໂຮງໝໍເມືອງ 10 ແຫ່ງ ແລະ ສຸກສາລາ 50 ແຫ່ງ • ນຳໃຊ້ເຕັກໂນໂລຊີໃໝ່ ເຊັ່ນ E-Health ຫຼື ພາບຖ່າຍຈາກດາວທຽມໃນການປັບປຸງປະສິດທິພາບ ຂອງລະບົບສາທາລະນະສຸກ ໃນ ໂຮງໝໍເມືອງ 10 ແຫ່ງ ແລະ ສຸກສາລາ 50 ແຫ່ງ • ການກໍ່ສ້າງ 10 ສຸກສາລາໃໝ່ ແມ່ນຕັ້ງຢູ່ໃນພື້ນຖານ ບໍ່ມີຄວາມສ່ຽງ ຈາກການປ່ຽນແປງດິນຟ້າອາກາດ ແລະ ເຂົ້າເຖິງໄດ້ • ສ້າງບົດສະເໜີໂຄງການສຳລັບການພັດທະນາໂຮງໝໍສີຂຽວ, ໂຮງໝໍປອດໄພຢູ່ຂັ້ນສູນກາງ ແລະ ຂັ້ນແຂວງ ໄດ້ 3 ໂຄງການ
ອົງປະກອບ 7: ການຄຸ້ມຄອງ ປັດໄຈສິ່ງແວດ ລ້ອມ ທີ່ກະທົບ ໃສ່ ສຸຂະພາບ	• ຈັດກອງປະຊຸມກັບຂະແໜງການທີ່ກ່ຽວຂ້ອງ ໃນການທົບທວນ ແລະ ປັບປຸງນິຕິກຳ ດ້ານຄຸນນະພາບອາກາດ, ຄຸນນະພາບນ້ຳ, ສຸຂະພິບານອາຫານ, ຄວາມປອດໄພຂອງ ທີ່ຢູ່ອາໄສ, ການຄຸ້ມຄອງສິ່ງເສດເຫຼືອ, ການຜັດທະນາຕົວເມືອງ 5 ຄັ້ງຕໍ່ປີ • ມີບົດລາຍງານດ້ານການລາຍງານຜົນກະທົບ 2 ໂຄງການຕໍ່ປີ
ອົງປະກອບ 8: ການສ້າງ ແຜນງານ ສາທາລະນະສຸກ	• ລົງໄປຕິດຕາມ 4 ເທື່ອຕໍ່ປີ

ຈາກຂໍ້ມູນ ການປ່ຽນແປງ ດິນຟ້າອາກາດ ທີ່ແຈ້ງໃຫ້ຮູ້	• ໄດ້ຈັດຕັ້ງປະຕິບັດວຽກງານນ້ຳ, ສຸຂະພິບານ, ສຸຂະອານາໄມ, ຄວບຄຸມໄຂ້ຍຸງລາຍ, ວຽກງານໂພສະນາການ, ສຸຂະພາບຈະເລີນພັນ ແມ່ຍິງ ແລະ ເດັກນ້ອຍ ຢູ່ໃນ 20 ຊຸມຊົນບອບບາງ • ໄຈ້ດຕັ້ງປະຕິບັດ ການຄວບຄຸມພະຍາດບໍ່ຕິດຕໍ່ ຢູ່ໃນ 10 ຊຸມຊົນບອບບາງ • ຈັດຕັ້ງປະຕິບັດດ້ານສຸຂະພາບຈິດ ຢູ່ໃນ 10 ຊຸມຊົນບອບບາງ
ອົງປະກອບ 9: ການກະກຽມ ແລະ ຄຸ້ມຄອງເຫດ ການສຸກເສີນ	• ມີແຜນການ ແລະ ຂັ້ນຕອນໃນການກະກຽມ ແລະ ຕອບໂຕ້ເຫດການສຸກເສີນ • ຢ່າງໜ້ອຍມີພະນັກງງານ 50 ຄົນ ມີສ່ວນຮ່ວມໃນເວລາເກີດມີ ໄພພິບັດຮ້າຍແຮງ • ທີມງານຄຸ້ມຄອງໄພພິບັດ ໄດ້ດຳເນີນການພາຍຫຼັງເກີດເຫດການ ສະພາບອາກາດຮຸນແຮງ/ປະເມີນຄວາມເສຍຫາຍທີ່ເກີດຈາກໄພພິບັດ ແລະ ເຜີຍແຜ່ປະຊາສຳພັນ 10 ຄັ້ງ
ອົງປະກອບ 10: ການເງິນ ສາທາລະນະສຸກ ແລະ ການປ່ຽນແປງ ດິນຟ້າອາກາດ	• ຈຳນວນບົດສະເໜີໂຄງການ ດ້ານການປັບຕົວຂອງຂະແໜງສາທາລະນະສຸກ ຈາກການປ່ຽນແປງດິນຟ້າອາກາດທີ່ສົ່ງໃຫ້ລັດຖະບານ ແລະ ອົງການຈັດຕັ້ງສາກົນ

ຕົວຊີ້ວັດ ແລະ ຄາດໝາຍຂອງ 'ໂຄງການ ເສີມຂະຫຍາຍການສະໜອງນ້ຳປະປາ, ສຸຂາພິບານ ແລະ ສຸຂະອານາໄມ

ຕົວຊີ້ວັດ	**ທຽບຖານ**	**ຄາດໝາຍ 2024 (ຄົນ)**
ປະຊາຊົນສາມາດເຂົ້າເຖິງແຫຼ່ງນ້ຳທີ່ໄດ້ຮັບການປັບປຸງດີຂຶ້ນ	0	192,000
ປະຊາຊົນສາມາດເຂົ້າເຖິງແຫຼ່ງນ້ຳທີ່ໄດ້ຮັບການປັບປຸງດີຂຶ້ນ- ແມ່ຍິງ	0	96,000
ປະຊາຊົນສາມາດເຂົ້າເຖິງແຫຼ່ງນ້ຳທີ່ໄດ້ຮັບການປັບປຸງດີຂຶ້ນ- ຊົນນະບົດ	0	192,000
ປະຊາຊົນສາມາດເຂົ້າເຖິງການບໍລິການສຸຂາພິບານໄດ້ຮັບການປັບປຸງດີຂຶ້ນ	0	96,000
ປະຊາຊົນສາມາດເຂົ້າເຖິງການບໍລິການສຸຂາພິບານທີ່ໄດ້ຮັບການປັບປຸງດີຂຶ້ນ- ແມ່ຍິງ	0	48,000
ປະຊາຊົນສາມາດເຂົ້າເຖິງການບໍລິການສຸຂາພິບານທີ່ໄດ້ຮັບການປັບປຸງດີຂຶ້ນ- ຊົນນະບົດ	0	96,000

ແຫຼ່ງຂໍ້ມູນ: ທະນາຄານໂລກ)

Lao People's Democratic Republic

Peace Independence Democracy Unity Prosperity

Nationally Determined Contribution (NDC)

09 March 2021

Table of Contents

1. INTRODUCTION 1
2. MITIGATION 2
2.1. National context 2
2.2. Summary of the scenario analysis 3
2.3. Baseline scenario 3
2.4. Estimated national GHG emissions in 2020 and NDC implementation progress 4
2.5. 2030 Unconditional mitigation scenario and targets 5
2.6. 2030 Conditional mitigation scenario and targets towards net zero emissions 2050 7
2.7. Country needs 9
2.8. Methodology 10
3. ADAPTATION 11
3.1. National context 11
3.2. Current and near-term planning and actions 13
3.3. Gaps, barriers and needs 17
4. IMPLEMENTATION 19
4.1. National Coordination Mechanism 19
4.2. Monitoring and Evaluation 20
4.3. Voluntary International cooperation 20
ANNEX 1: Mitigation Measures 21
Unconditional measures 21
Conditional measures 23
ANNEX 2: Adaptation Measures 27
Health Adaptation Strategy – Summary of components and indicators 27
Indicators and targets for the ‘Water Supply, Sanitation and Hygiene’ project 29

1. INTRODUCTION

Lao People's Democratic Republic herewith presents its 2020 updated and enhanced Nationally Determined Contribution, in accordance with decision 1/CP.21 of the Conference of the Parties and following the country's Intended Nationally Determined Contribution (INDC) to the objectives of the Paris Agreement submitted to the UNFCCC on September 30th, 2015, and ratified by the Government on September 7th, 2016.

As per Paris Agreement Article 4, the 2020 NDC update builds upon the 2015 submission with a view to enhancing its ambition through the introduction of three national level greenhouse gas (GHG) emissions scenarios, namely a baseline emissions scenario, an unconditional mitigation scenario to 2030, as well as a more ambitious conditional mitigation scenario to 2030 towards achieving net zero GHG emissions by 2050. 2015 NDC targets have been updated and extended, including to new sectors, while new national level emission reductions targets have been formulated. The 2020 NDC also sets forth increased transparency and consistency between quantitative targets, new short-term objectives for climate change adaptation towards a strengthened measurement, reporting and verification system, as well as the country's expression of interest to pursue voluntary cooperation to allow for higher ambition, in accordance with the Paris Agreement.

With this new submission, the Government of Lao PDR intends to report on the progress of the country's contribution to the objectives of the Paris Agreement, and to bring forward enhanced action with the aim of strengthening Lao PDR's response to the threat of climate change while reflecting its common but differentiated responsibility and respective capability in a fair and ambitious manner, in light of the country's Least Developed Country (LDC) status and very limited contribution to global GHG emission levels. The long-term vision on how to address climate change will not be reiterated while only significant evolutions in the national circumstances will be elaborated upon.

All mitigation and adaptation measures in the 2020 NDC contribute to the Paris Agreement, including but not limited to "holding the increase in the global average temperature to well below 2°C above pre-industrial levels and pursuing efforts to limit the temperature increase to 1.5°C above pre-industrial levels", as well as "increasing the ability to adapt to the adverse impacts of climate change". Proposed interventions will also serve the country's post COVID-19 economic recovery by increasing resilience and accelerating decarbonization. The 2020 NDC is aligned with the country's Sustainable Development Goals to be set out in the 9th five-year National Socio-Economic Development Plan (2021-2025), with a focus on combating climate change and its impacts.

This document has been subject to four formal rounds of consultation with stakeholders, including Government agencies, development partners, as well as public and private actors. At the end of 2019 an assessment of the progress for each target set out in the 2015 NDC was undertaken. This also provided an opportunity to get an update on the current situation and near-term future planning. The second and third rounds between April and August 2020 aimed to receive comprehensive feedback and comments from all relevant

stakeholders on the draft NDC. The last round of consultation was conducted as part of the final validation workshop. Participation of the private sector will be instrumental in the implementation of the NDC and shall be facilitated through adequate policies for licensing and regulations for investment at sectoral level.

2. MITIGATION

2.1. National context

Complementing existing national level policy framework (2015 NDC), the Prime Minister's Office issued on September 19th, 2019, the Decree on Climate Change which defines principles, regulations, and measures on management, monitoring of climate matters. Simultaneously, the Decree states that climate change must be mainstreamed into the national socio-economic development plans, sectoral as well as local strategies and plans.

As per the Second National Communication to the UNFCCC in June 2013, total emissions of greenhouse gases in Lao PDR amounted to 50,742.91 ktCO2e[1] in year 2000, with Land Use Change & Forestry (LUCF) and Agriculture responsible for over 95% of the total. Emission drivers such as economic and population growth increased by 7.17% and 1.6% per year respectively between 2000 and 2018. Besides, the total number of vehicles registered in the country grew drastically from 367,900 in year 2004 to 2,133,500 in year 2017 (+480%), while transport fuel consumption grew from 855 million liters in 2013 to 1,442 Million liters in 2016.

The following four sections provide the results of the scenario analysis undertaken for the 2020 NDC update as part of the country's enhanced ambition. Three scenarios are developed:

- A baseline scenario which is a reference case that illustrates future GHG emission levels most likely to occur in the absence of GHG mitigation activities.
- An unconditional mitigation scenario that reflects GHG emission reductions efforts that Lao PDR can commit to, considering own resources and existing levels of support from developed country Parties.
- A conditional mitigation scenario that represents additional GHG emission reductions efforts that Lao PDR could achieve, contingent upon increased levels of financial support from developed country Parties.

Section 2.2 is a graph summary of all scenarios. Section 2.3 provides background information about the baseline scenario. Section 2.4 estimates 2020 emissions level and discusses the country's progress against the mitigation targets set out in the 2015 NDC. Section 2.5 introduces the 2030 unconditional mitigation scenario and associated updated

[1] Kilotons of CO_2 equivalent


targets. Section 2.6 describes the 2030 conditional mitigation scenario and associated targets towards achieving net zero emissions by 2050.

Sectors covered by the analysis include energy, industrial processes, agriculture, land-use change and forestry, and waste. Greenhouse gases comprise carbon dioxide (CO2), methane (CH4) and nitrous oxide (N2O). Emissions hydrofluorocarbons (HFCs), perfluorocarbons (PFCs), and sulfur hexafluoride (SF6) are considered negligible in Lao PDR and excluded from the analysis. The boundaries of the analysis correspond to the national borders of the country. Year 2000 is selected as the base year for the calculations of all scenarios.

2.2. Summary of the scenario analysis

Figure 1 below provides an overview of GHG emissions from all sectors from the base year 2000 according to the 3 scenarios described above. The 2020 value on the unconditional 2030 scenario represents estimated current level of emissions. Post 2030 unconditional scenario will be communicated in future NDC submissions.

Figure 1: GHG emissions scenarios from all sectors



2.3. Baseline scenario

The baseline scenario is a hypothetical or projected reference case that represents future GHG emission levels most likely to occur in the absence of GHG mitigation activities. This scenario is used to develop the unconditional and conditional mitigation goal scenarios and was computed through extrapolation of historical growth trends at sectoral scale (See also methodology section). Under the baseline scenario, total GHG emissions levels in Lao PDR would be expected to reach around 82,000 ktCO2e in 2020 and 104,000 ktCO2e in 2030. Detailed baseline projections to 2050 are presented in Figure 1 under section 2.2. Main sectors expected to contribute to baseline emissions are LUFC, agriculture and energy,

including transport and power sector, through the potential addition of base load coal-fired power generation.

2.4. Estimated national GHG emissions in 2020 and NDC implementation progress

National GHG emissions in 2020 have been estimated around 53,000 ktCO2e through deducting the GHG mitigation measures implemented across all sectors since 2000 from the baseline scenario. Therefore, between 2000 and 2020 Lao PDR achieved to reduce emissions by 34% compared to the baseline scenario while GHG emissions growth rate during the period can be estimated around 0.3% on average annually. In the meantime, GDP per capita growth rate was 5.3% annually on average between 2000 and 2019 (World Bank), which indicates that emissions growth was decoupled from economic growth.

Major mitigation measures were implemented in the LUCF and power sectors. Table 1 below provides a summary of mitigation targets set out in 2015 NDC and the progress towards their achievement.

Table 1: Status of 2015 NDC Measures

#	2015 NDC Measure	Horizon	Progress
M1	Increase forest cover to 70% land area	2020	Not achieved
M2	• 30% RE excluding large hydro	2025	Not on track
	• Share of biofuels to meet 10% of transport fuels	2025	Not on track
M3	90% households electrified	2020	Achieved
M4	Transport NAMA	2025	Not started
M5	• Expansion of large hydro to 5,500 MW (2020)	2020	Achieved
	• 20,000 MW (2030)	2030	On track
M6	Climate change action plans	Not available	On track

In year 2000, total LUCF emissions and removals were 44,805 ktCO2e and 2,244 ktCO2e respectively, or net emissions of 42,758 ktCO2e[2], while average annual emissions and removals between 2005 and 2015 were 41,013 ktCO2e and 7,533 ktCO2e respectively, or net emissions of 33,479 ktCO2e[3] (See also section 2.8). Nevertheless, the 70% forest coverage of land area by 2020, **M1** target in the 2015 NDC, has not been achieved. According to the Lao PDR's Forest Reference Emission Level (FREL) submitted to UNFCCC in 2018, forest coverage in 2015 accounts for about 58% of total surface area in

[2]Lao People's Democratic Republic, Technology Needs Assessments Report - Climate Change Mitigation, 2013, Department of Disaster Management and Climate Change, page 37.
[3]Lao People's Democratic Republic, Forest Reference Emission Level and Forest Reference Level for REDD+ Results Payment under the UNFCCC, 2018, Department of Forestry Ministry of Agriculture and Forestry, Lao PDR, page 27.

the country. The Lao People's Democratic Republic assumed its FREL to be valid for the next 11 years (i.e. 2015–2025).

Moreover, Lao PDR increased its hydropower resources to reach over 4,500 MW installed capacity in 2018 (EDL, 2018), in line with **M5** target set in the 2015 NDC. Applying 5,220 average operating hours per year (EDL, 2018) and 0.5595 tCO2/MWh emission factor of the Lao grid (UNFCCC, 2019), about 13,000 ktCO2e/y emission were abated in this sector through the displacement of electricity that would otherwise be supplied to the grid by more GHG-intensive means. The amount is equivalent to 26% of total national emissions in year 2000 (50,742 ktCO2e).

Other achievements include implementation of the rural electrification programme which led to the electrification of 93.79% of the total population (EDL, 2018), beyond the 90% **M3** target which was set in the 2015 NDC. Financial constraints were identified as the main challenge towards **M1**, **M2** and **M4**. Data uncertainty, data inconsistency and transparency, access to data, lack of data as well as limited cross-sectoral coordination are other key hurdles in the implementation of **M1**.

Estimated national GHG emissions level in 2020 is presented in Figure 1 under section 2.2. It corresponds to the value for year 2020 in the '2030 unconditional mitigation scenario' data set.

2.5. 2030 Unconditional mitigation scenario and targets

The unconditional mitigation scenario and targets are the GHG emission reductions efforts that Lao PDR can commit to by 2030 considering own resources and existing levels of support from developed country Parties. Sectoral targets are presented in Table 2, national target in Table 3 below. Details are provided in Annex 1.

In the LUCF sector, Lao PDR aims to accelerate the implementation of the national strategy to reduce emissions from deforestation and forest degradation, foster conservation, sustainable management of forests, buffer zones of protected areas and other preserves, and enhancement of forest carbon stocks. The target is to reduce LUCF emissions by 1,100ktCO2e per year on average between 2020 and 2030, which is a threefold reduction objective compared to what was achieved between 2000 and 2015 (See also section 2.4). This can be achieved by ongoing projects including Green Climate Fund's FP117: "Implementation of the Lao PDR Emission Reductions Programme through improved governance and sustainable forest landscape management", as well as the World Bank's "Lao Landscapes and Livelihoods Project (P170559)". Forest management issues shall be addressed including through village-level land use planning as well as forest land data management and accessibility.

Table 2: Sectoral level 2030 unconditional mitigation targets

Sector	Mitigation target (2020-2030)	Average abatement between 2020 and 2030 (ktCO2e/y)
Land Use Change and Forestry	Reduced emissions from deforestation and forest degradation, foster conservation, sustainable management of forests, buffer zones of national parks and other preserves, and enhancement of forest carbon stocks.	1,100
Energy		
Hydropower	13GW total hydropower capacity (domestic and export use) in the country	2,500
Energy Efficiency	Introduction of 50,000 energy efficient cook stoves	50
Transport	• New Bus Rapid Transit system in Vientiane Capital and associated Non-Motorized Transport (NMT) component • Lao-China Railway	25 300

In the energy sector, mainly three sub-sectors, hydropower, energy efficiency and transport, are mobilized to contribute to the mitigation efforts. Total target installed hydropower capacity in the country by 2030 is set at 13 GW, by applying an 80% probability ratio to the 2030 anticipated installed capacity in Ministry of Energy & Mines' 2016-2030 Power Development Plan. 50,000 energy efficient cook stoves will reduce the use of non-renewable biomass for combustion, then a new target in the transport sector is introduced to replace **M4** target in the 2015 NDC, which has not been implemented, namely the construction and operation of a new bus rapid transit system in Vientiane Capital and associated Non-Motorized Transport (NMT) component, as well as the construction and operation of a Lao-China railway, which will displace the use of internal combustion engine private vehicles. The unconditional targets for energy efficiency and the transport sector have been defined considering that financing for the projects is already secured.

Ongoing mitigation efforts and the new 2030 sectoral targets established in Table 2 above will contribute to reach the 2030 unconditional national target presented in Table 3 below.

Table 3: National level 2030 unconditional mitigation target

National level 2030 unconditional target	60% GHG emission reductions compared to baseline scenario, or around 62,000 ktCO2e in absolute terms.

The 60% GHG emission reductions national level 2030 target demonstrates the enhanced contribution of the country to the Paris Agreement, considering the 34% GHG emission reductions compared to the baseline scenario achieved in 2020.

2.6. 2030 Conditional mitigation scenario and targets towards net zero emissions 2050

The conditional mitigation scenario and targets are the GHG emission reductions efforts that Lao PDR could achieve by 2030 contingent upon increased levels of financial support from developed country Parties. Sectoral targets, including additional sectors compared to 2015 NDC, are presented in Table 4. Details are provided in Annex 1.

In the LUCF sector, Lao PDR would achieve to increase the forest cover to 70% of total land area, in line with the National Forestry Strategy.

In the energy sector, three sub-sectors would contribute to reach the conditional target. Renewable energy capacity would be increased to 1 GW solar and wind power and 300 MW biomass power capacity. The latter would also contribute to improve air quality through the utilization of agricultural residues and avoidance of slash and burn practices. This new renewable energy target updates **M2(1)** target in the 2015 NDC. Two conditional targets are brought forward in the transport sector, namely 30% Electric Vehicles penetration for 2-wheelers and passengers' cars in national vehicles mix, as well as to increase the share of biofuels to meet 10% of the transport fuels by 2030, in line with **M2(2)** from the 2015 NDC. Finally, a new target of 10% reduction of final energy consumption compared to business-as-usual (BAU) scenario is introduced in the energy efficiency sub-sector, to support the implementation of the 2016 National Policy on Energy Efficiency and Conservation which estimated total energy demand in Lao PDR as reaching 4,320 ktoe in 2030 (BAU scenario).

Table 4: 2030 conditional mitigation targets

Sector	Mitigation measure (2020-2030)	Average target between 2020 and 2030 (ktCO2e/y)
Land Use Change and Forestry	Increased forest cover to 70% of land area (i.e. to 16.58 million hectares) through reduced emissions from deforestation and forest degradation, foster conservation, sustainable management of forests, buffer zones of national parks and other preserves, and enhancement of forest carbon stocks.	45,000
Energy		
Other renewables	SOLAR and WIND: 1 GW total installed capacity in the country	100
	BIOMASS: 300 MW total installed capacity in the country	84
Transport	30% Electric Vehicles penetration for 2-wheelers and passengers' cars in national vehicles mix	30
	Biofuels to meet 10% of transport fuels	29
Energy efficiency	10% reduction of final energy consumption compared to business-as-usual scenario	280
Agriculture	50,000 hectares adjusted water management practices in lowland rice cultivation	128
Waste	Implementation of 500 tons/day sustainable municipal solid waste management project	40

A new conditional target in the agriculture sector is the development of 50,000 hectares adjusted water management practices in lowland rice cultivation. The agriculture sector is the second most carbon intensive sector in the country and was not covered in the previous NDC submission.

Moreover, a new conditional target is introduced in the waste sector through the implementation of a 500 tons MSW/day sustainable municipal solid waste management capacity in Vientiane Capital. Although the sector only contributed to less than 1% of GHG emissions in the base year, emissions of methane associated with open burning of waste as well as disposing organic waste in a solid waste disposal site without landfill gas capture

system are expected to keep growing steadily together with economic development. Moreover, the transition towards a circular economy is one of the priority areas in the upcoming 9th National Socio-Economic Development Plan. The target will contribute to the implementation of the Sustainable Solid Waste Management Strategy and Action plan for Vientiane 2020-2030 which also encompass organic waste separation and waste recycling initiatives. Lao PDR will also aim to further explore the mitigation potential of a circular economy including through material and product recirculation, circular business models, product resource efficiency, and prioritizing the use of regenerative material resources.

